ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ (ຄພທສ)

## ກອງທຶນຫລຸດຜ່ອນຄວາມທຸກຍາກ 3 (ທລຍ 3)

# ກອບການວາງແຜນດ້ານຊົນເຜົ່າ (EGPF)







ມັງກອນ 2016

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ກອງທຶນຫລຸດຜ່ອນຄວາມທຸກຍາກ

## ກອບການວາງແຜນດ້ານຊົນເຜົ່າ

ສະບັບຮ່າງ-ເດືອນມັງກອນ 2016

# ສາລະບານ

**ພາກສະເໜີ....................................................................................................... 5**

**ພາກທີ I: ລາຍລະອຽດໂຄງການ .............................................................................. 8**

**ພາກທີ II: ນະໂຍບາຍ ແລະ ຫຼັກການ ........................................................................ 11**

**ພາກທີ III: ການປະເມີນຜົນທາງສັງຄົມ (SA) ແລະ ຜົນການປະເມີນ, ການປຶກສາຫາລື ແລະ ການແຈ້ງໃຫ້ຊາບ.................... 15**

ພາກທີ IV: ບັນດາຫຼັກການ ແລະ ຂັ້ນຕອນທີ່ຈະນຳໃຊ້ໃນຢູ່ໃນ ທລຍ 3.................................................... 20

**ພາກທີ V: ກົນໄກການໃຫ້ຄຳຄິດເຫັນ ແລະ ການແກ້ໄຂບັນຫາ:....................................................... 26**

**ພາກທີ VI: ການຕິດຕາມ, ການເກັບມ້ຽນເອກະສານ, ການເຜີຍແຜ່ຂໍ້ມູນຂ່າວສານ ແລະ ການລາຍງານ:............................ 31**

**ພາກທີ VII: ງົບປະມານ.................................................................................. 32**

**ເອກະສານຄັດຕິດ .......................................................................................... 1**

**ເອກະສານຄັດຕິດ 1: ກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ-ການຝຶກອົບຮົມ ແລະ ແບບຟອມ ............................ 2**

**ເອກະສານຄັດຕິດ 2: ...................................................................................... 7**

**ການແນະນຳ:.............................................................................................. 7**

**ສິ່ງທີ່ພົບ:.............................................................................................. 7**

*1: ຄວາມຕ້ອງການປູກຈິດສຳນຶກກ່ຽວກັບ ການການປົ້ອງກັນຜົນກະທົບທາງສັງຄົມພາຍໃຕ້ວຽກງານ ທລຍ 2.................7*

# ບັນດາຄໍາຫຍໍ້

| | |
|---|---|
| ADB | ທະນາຄານພັດທະນາອາຊີ |
| AF | ໄລຍະເພີ້ມທຶນ |
| AMT | ໜ່ວຍງານກວດກາປະເມີນຜົນ |
| CDD | ການພັດທະນາທີ່ຂັບເຂື່ອນໂດຍຊຸມຊົນເອງ |
| CRPF | ກອບນະໂຍບາຍການທົດແທນຄືນແລະຍົກຍ້າຍຖິ່ນຖານ |
| DRM | ການຄຸ້ມຄອງໄພພິບັດທາງທໍາມະຊາດ |
| ECOP | ມາດຕະຖານທາງດ້ານສິ່ງແວດລ້ອມ |
| EG | ກຸ່ມຊົນເຜົ່າ |
| EGPF | ກອບນະໂຍບາຍດ້ານຊົນເຜົ່າ |
| FM | ກົນໄກການສະແດງຄວາມຄິດເຫັນແລະ ແກ້ໄຂລັນຫາ |
| ESMF | ກອບການຄຸ້ມຄອງທາງດ້ານສັງຄົມ ແລະ ສິ່ງແວດລ້ອມ |
| FRM | ກົນໄກສະແດງຄໍາຄິດເຫັນແລະແກ້ໄຂບັນຫາ |
| IEC | ກະຈ່າຍຂໍ້ມູນ-ຂ່າວສານ, ການສຶກສາແລະປະຊາສໍາພັນ |
| JSDF | ກອງທຶນພັດທະນາສັງຄົມຂອງປະເທດຍີ່ປຸ່ນ |
| Lao PDR | ສປປ ລາວ |
| LECS | ການສໍາຫຼວດການບໍລິໂພກ ແລະ ການຊົມໃຊ້ໃນຄົວເຮືອນຂອງລາວ |
| LFNC | ສູນກາງແນວລາວສ້າງຊາດ |
| LWU | ສະຫະພັນແມ່ຍິງລາວ |
| MIS | ລະບົບຄຸ້ມຄອງຂໍ້ມູນຂ່າວສານ |
| NUOL | ມະຫາວິທະຍາໄລແຫ່ງຊາດງລາວ |
| O&M | ການຄຸ້ມຄອງນໍາໃຊ້ ແລະ ບູລະນະສ້ອມແປງ |
| OP | ນະໂຍບາຍການດໍານີນງານ (ຂອງທະນາຄານໂລກ) |
| PDO | ເປົ້າໝາຍການພັດທະນາໂຄງການ |
| POM | ຄູ່ມືການດໍາເນີນໂຄງການ |
| PRA | ການປະເມີນຜົນຊຸມຊົນແບບມີສ່ວນຮ່ວມ |
| PRF | ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) |
| PRF I | ກອງທຶນຫຼຸດຜ່ອນຄວາມທຸກຍາກ ໄລຍະທີ 1 |
| PRF II | ກອງທຶນຫຼຸດຜ່ອນຄວາມທຸກຍາກ ໄລຍະທີ 2 |
| PRF III | ກອງທຶນຫຼຸດຜ່ອນຄວາມທຸກຍາກ ໄລຍະທີ 3 |
| PMP | ແຜນຄວບຄຸມຢາປາບສັດຕູພືດ |
| PMT | ຄະນະບໍລິຫານຄຸ້ມຄອງໂຄງການ |
| POM | ຄູ່ມືຈັດຕັ້ງປະຕິບັດໂຄງການ |
| SESG | ຂໍ້ແນະນໍາໃນການປ້ອງກັນຜົນກະທົບທາງດ້ານສັງຄົມແລະສິ່ງແວດລ້ອມ |
| SIDA | ອົງການເພື່ອການພັດທະນາສາກົນຂອງປະເທດຊູແອດ |
| VIT | ທີມງານຈັດຕັ້ງປະຕິບັດຂັ້ນບ້ານ |
| WB | ອົງການທະນາຄານໂລກ |

# ພາກສະເໜີ

ກອງທຶນຫລຸດຜ່ອນຄວາມທຸກຍາກ ໄດ້ປັບປຸງການເຂົ້າເຖິງ ແລະ ນໍາໃຊ້ບັນດາໂຄງລ່າງພື້ນຖານ ແລະ ການບໍລິການຂອງປະຊາຊົນຜູ້ທຸກຍາກຢູ່ຊົນນະບົດຫຼາຍກວ່າ680,000 ຄົນ ທີ່ນອນໃນບ້ານທຸກຍາກປະມານ1,100ບ້ານ, ໂດຍສະໜອງງົບປະມານໃຫ້ແກ່ 1,400 ກວ່າໂຄງການຍ່ອຍ ຊຶ່ງກໍານົດຂຶ້ນໂດຍຊຸມຊົນຜູ້ໄດ້ຮັບຜົນປະໂຫຍດເອງ. ປະມານເຄິ່ງໜຶ່ງຂອງຜູ້ທີ່ໄດ້ຮັບຜົນປະໂຫຍດໂດຍກົງທັງໝົດນັ້ນແມ່ນແມ່ຍິງ ແລະ ໃນນັ້ນປະມານ 70% ແມ່ນຊົນເຜົ່າ. ທາງດ້ານການຄຸ້ມຄອງນໍາໃຊ້ ແລະ ຄວາມຍືນຍົງ ແລະ ການບໍລິການ ບັນດາໂຄງການຍ່ອຍທີ່ໄດ້ກໍ່ສ້າງສໍາເລັດຢູ່ໃນໄລຍະຫລາຍກວ່າສອງປີຜ່ານມານັ້ນ ເຫັນວ່າກໍາລັງຖືກນໍາໃຊ້ ແລະ ມີການບໍາລຸງຮັກສາໄດ້ເປັນຢ່າງດີພໍສົມຄວນ ແລະ ຜູ້ໄດ້ຮັບຜົນປະໂຫຍດກໍມີຄວາມເພິ່ງພໍໃຈໃນລະດັບສູງເຖິງ 90%. ອີງໃສ່ຜົນໄດ້ຮັບທາງບວກດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ, ລັດຖະບານແຫ່ງ ສປປ ລາວ ໄດ້ຮຽກຮ້ອງໃຫ້ທະນາຄານໂລກສະໜັບສະໜູນໂຄງການໄລຍະສາມ ຫລື ທລຍ 3.

ພາບລວມຂອງ ທລຍ ໄລຍ 3 ແມ່ນຈະແນ່ໃສ່ການການຈັດຕັ້ງປະຕິບັດຈາກຜົນສໍາເລັດຂອງໂຄງການໄລຍະປັດຈຸບັນ ແລະ ສືບຕໍ່ຂະບວນການສ້າງຄວາມເຂັ້ມແຂງແຕ່ລຸ່ມຂຶ້ນເທິງ ແລະ ປັບປຸງການເຂົ້າເຖິງການບໍລິການຂອງຊຸມຊົນທີ່ທຸກຍາກ. ຈຸດປະສົງການພັດທະນາໂຄງການ (PDO) ແມ່ນ: *ປັບປຸງການເຂົ້າເຖິງການບໍລິການດ້ານພື້ນຖານໂຄງລ່າງຂອງຊຸມຊົນເປົ້າຫມາຍທີ່ທຸກຍາກຂອງໂຄງການ.* ທລຍ 3 ຈະຈັດຕັ້ງປະຕິບັດປະຕິບັດໃນຂອບເຂດພື້ນທີ່ເປົ້າໝາຍເກົ່າ ແລະ ນໍາໃຊ້ຮູບແບບການຈັດການການປະຕິບັດອັນເກົ່າ ທີ່ໄດ້ຮັບການພັດທະນາຈາກການຈັດຕັ້ງປະຕິບັດຂອງ ທລຍ 2.

ທລຍ ໄລຍະ 3 ຈະຍັງຄົງເປັນ “ປະເພດ B” ດ້ານສິ່ງແວດລ້ອມ, ແລະ ມີ 7 ນະໂຍບາຍທີ່ຈັດຕັ້ງປະຕິບັດຢູ່ໃນໂຄງການຂອງ ທລຍ 2 ແລະ ຈະສືບຕໍ່ຈັດຕັ້ງປະຕິບັດ ຊຶ່ງລວມມີ[1]: *ການປະເມີນດ້ານສິ່ງແວດລ້ອມ (OP4.01); ການ ຄວບຄຸມຢາປາບສັດຕູພືດ (OP4.09); ນະໂຍບາຍການຄຸ້ມຄອງຄົນທ້ອງຖິ່ນ (OP4.10) ແລະ ການຍົກຍ້າຍ ຖິ່ນຖານໂດຍບໍ່ສະໝັກໃຈ (OP4.12). ຢູ່ໃນທລຍ 3 ນີ້ ນະໂຍບາຍການປ້ອງກັນຜົນກະທົບ 3 ອັນ ຄື: ການອາໃສຢູ່ແບບທໍາມະຊາດ (OP4.04), ຄວາມປອດໄພໃນການສ້າງເຂື່ອນ (*OP4.37) *ແລະ ໂຄງການທີ່ຕິດພັນກັບທາງນໍ້າສາກົນ* (*OP*7.50). ມັນມີຄວາມເປັນໄປໄດ້ສູງວ່າ ການກໍານົດກິດຈະກໍາຂອງ ທລຍ 3 ເປັນສິ່ງສໍາຄັນ, ມີຄວາມໝາຍ ຫລື ສ້າງຜົນກະທົບທາງດ້ານກົງກັນຂ້າມທີ່ປ່ຽນແປງບໍ່ໄດ້ ເຊິ່ງຊຸມຊົນອາດບໍ່ສາມາດຈັດການໄດ້ດ້ວຍໂຕເຂົາເຈົ້າເອງ ເພື່ອຫລີກລ້ຽງບັນຫາດັ່ງກ່າວ, ດັ່ງນັ້ນ ໂຄງການຍ່ອຍທີ່ຈະໃຫ້ການສະໜັບສະໜູນ ຈຶ່ງເປັນໂຄງການຍ່ອຍຂະໜາດນ້ອຍ ໂດຍສະເລ່ຍ 43,000ໂດລາສະຫະລັດ. ເຖິງຢ່າງໃດກໍ່ຕາມ, ການເສຍສິດການຄອບຄອງທີ່ດິນ ຫຼື ຄວາມເສຍຫາຍດ້ານຊັບສິນອື່ນໆ ອາດຈະພົບເຫັນໃນລະຫວ່າງສໍາຫລວດອອກແບບຈັດຕັ້ງປະຕິບັດໂຄງການຍ່ອຍ ໂດຍຜ່ານຂະບວນການມີສ່ວນຮ່ວມ. ເຊັ່ນດຽວກັນກັບກຸ່ມຊົນເຜົ່າ ຊຶ່ງຈະສືບຕໍ່ເປັນຕົວແທນຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການສ່ວນໃຫຍ່ ເພື່ອເຂົ້າຮ່ວມການອອກແບບ, ການປະຕິບັດແລະຕິດຕາມກວດກາການປະຕິບັດໂຄງການຍ່ອຍຈາກຂະບວນການມີສ່ວນຮ່ວມ. ເຖິງຢ່າງໃດກໍ່ຕາມ, ຄວາມລະມັດລະວັງຕ້ອງໄດ້ຮັບການແນະນໍາ, ຈະຕ້ອງເອົາໃຈໃສ່ໃນເວລາຈັດຕັ້ງປະຕິບັດ ທັງນີ້ເພື່ອຮັບປະກັນວ່າບໍ່ໃຫ້ເກີດຄວາມເສັຽຫາຍດັ່ງກ່າວ ໂດຍຕ້ອງໄດ້ແຈ້ງການໃຫ້ຊຸມຊົນຮັບຊາບກ່ອນລ່ວງໜ້າ, ຈາກນັ້ນຕ້ອງປຶກສາຫາລື ໂດຍການເຂົ້າຮ່ວມຂອງກຸ່ມຊົນເຜົ່າ ແລະ ຄະນະພັດທະນາບ້ານທີ່ໄດ້ສ້າງ

[1] ເລີ່ມຈາກເຈັດນະໂຍບາຍທີ່ປະຕິບັດໃນ ທລຍ 2, ປ່າທໍາມະຊາດ (OP 4.04),ຄວາມປອດໄພຂອງເຂື່ອນ (OP 4.37) ແລະໂຄງການທາງນໍ້າສາກົນ (OP 7.50)ໄດ້ເລີ່ມຈາກ ທລຍ 2, ໄລຍະເພີ່ມເຕີມ.

ຕັ້ງຂຶ້ນ, ອານາດການປົກຄອງບ້ານ ພາຍໃຕ້ການສະໜັບສະໜູນຂອງອຳນາດການປົກຄອງຂັ້ນທ້ອງ, ເພື່ອແລກປ່ຽນບັນຫາສະພາບເສດຖະກິດ ແລະ ສັງຄົມໃນປະຈຸບັນຂອງເຂົາເຈົ້າ.

ເພື່ອໃຫ້ການຈັດຕັ້ງປະຕິບັດ ສອດຄ່ອງກັບນະໂຍບາຍ ຫົວຂໍ້ 4.01, 4.04, 4.09, 4.10 ແລະ 4.12 ຈຶ່ງໄດ້ສ້າງເຄື່ອງມື ຫຼື ເອກະສານຂຶ້ນມາ 4 ສະບັບສໍາລັບກອງທຶນຫລຸດຜ່ອນຄວາມທຸກຍາກ ໃນໄລຍະ 3ມີດັ່ງນີ້:

- ກອບນະໂຍບາຍການທົດແທນຄືນ ແລະ ການຍົກຍ້າຍຖິ່ນຖານ (CRPF),
- ກອບການວາງແຜນດ້ານຊົນເຜົ່າ(EGPF),
- ກອບການຄຸ້ມຄອງທາງດ້ານສິ່ງແວດລ້ອມ ແລະ ສັງຄົມ (ESMF), ແລະ
- ແຜນການຄຸ້ມຄອງຢາປາບສັດຕູພືດທີ່ງ່າຍດາຍ (PMP).

ບັນດາເຄື່ອງມືການປ້ອງກັນຜົນກະທົບ ໄດ້ຖືກພັດທະນາຂຶ້ນສໍາລັບ ທລຍ 2-ໄລຍະທີ 1 ແລະ ໄດ້ຮັບການປັບປຸງຄືນ ສໍາລັບ ທລຍ 2 ບົນພື້ນຖານແມ່ນອີງໃສ່ປະສົບປະການຂອງໂຄງການໄລຍະຜ່ານມາທັງນີ້ເພື່ອໃຫ້ສອດຄ່ອງກວ່າເກົ່າກັບບັນດາກິດຈະກໍາ ທີ່ໄດ້ຮັບການຈັດຕັ້ງປະຕິບັດພາຍໃນ ທລຍ 3. ເອກະສານທັງໝົດດັ່ງກ່າວນີ້ ມີຈຸດປະສົງເພື່ອແຈກຢາຍໃຫ້ເບື້ອງລັດທັງໃນລະດັບສູນກາງ, ແຂວງ, ເມືອງ, ທີມງານ ທລຍ, ທີ່ປຶກສາ, ທີມງານຂັ້ນບ້ານ, ຂັ້ນກຸ່ມບ້ານ, ອົງການຈັດຕັ້ງທາງສັງຄົມ, ພາກທຸລະກິດຕ່າງໆ,ບັນດາຊຸມຊົນຜູ້ທີ່ໄດ້ຮັບຜົນປະໂຫຍດ ແລະ ບັນດາພາກສ່ວນຕ່າງໆທີ່ເຮັດວຽກງານນີ້ ພາຍໃຕ້ການຊ່ວຍເຫລືອຂອງທະນາຄານໂລກ. ບັນດາໜ້າວຽກກ່ຽວກັບວຽກງານປ້ອງກັນຜົນກະທົບເຫລົ່ານີ້ຈະໄດ້ເອົາເຊື່ອມສານເຂົ້າຢ່າງເຕັມທີ່ໃນແຕ່ລະກິດຈະກໍາຂອງຮອບວຽນຈັດຕັ້ງປະຕິບັດໂຄງການຄື: ການວາງແຜນ, ການຄັດເລືອກໂຄງການຍ່ອຍ, ການສໍາຫລວດ-ອອກແບບ, ການອະນຸມັດໂຄງການຍ່ອຍ, ການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ການປະເມີນຜົນຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການຍ່ອຍ.

ກອບການວາງແຜນດ້ານຊົນເຜົ່ານີ້ (EGPF) ໄດ້ຮັບການປັບປຸງໃຫ້ນໍາໃຊ້ພາຍໃຕ້ ທລຍ 3. ມີຈຸດປະສົງໃນການສະໜອງຄໍາແນະນໍາທີ່ພຽງພໍ ແລະ ເໝາະສົມໃຫ້ແກ່ອົງການຕັ້ງລັດໃນລະດັບຊາດ, ແຂວງ ແລະ ເມືອງ, ທີມງານ ທລຍ, ບັນດາທີ່ປຶກສາ, ທີມງານຂັ້ນບ້ານ, ຂັ້ນກຸ່ມບ້ານ, ອົງການຈັດຕັ້ງທາງສັງຄົມ, ເອກະຊົນ, ພາກທຸລະກິດຕ່າງໆ,ບັນດາຊຸມຊົນຜູ້ທີ່ໄດ້ຮັບຜົນປະໂຫຍດ ແລະ ບັນດາພາກສ່ວນຕ່າງໆທີ່ເຮັດວຽກງານນີ້ ເພື່ອຮັບປະກັນວ່າກຸ່ມຊົນເຜົ່າໄດ້ຮັບຄໍາປຶກສາຢ່າງພຽງພໍ ແລະ ມີສ່ວນຮ່ວມໃນການວາງແຜນໂຄງການຍ່ອຍ ແລະ ການຈັດຕັ້ງປະຕິບັດ ແລະ ສາມາດຫຼີກລ້ຽງ ແລະ ຫຼຸດຜ່ອນຜົນກະທົບໃນທາງລົບ, ໃຫ້ສອດຄ່ອງກັບ OP 4.10. ຂະບວນການຈະໄດ້ຮັບການປະຕິບັດປຽບເໝືອນເປັນສ່ວນໜຶ່ງຂອງຮອບວຽນຂອງໂຄງການ ທລຍແລະ ບັນດາກິດຈະກໍາຈະເຊື່ອມໂຍງຢ່າງເຕັມທີ່ກັບຂະບວນການຄັດເລືອກບັນດາໂຄງການຍ່ອຍ, ການອະນຸມັດໂຄງການຍ່ອຍ, ການປະຕິບັດ ແລະ ການຕິດຕາມກວດກາແລະປະເມີນຜົນ.ທລຍ 3 ຈະສືບຕໍ່ໃຫ້ທຶນເຂົ້າໃນວຽກງານກໍ່ສ້າງເຊິ່ງຄ້າຍຄືກັບຫຼັກການລວມຂອງໂຄງການ ທລຍ 2 ທັງທາງດ້ານລັກສະນະ ແລະ ຂະໜາດ, ວິທີການທີ່ຄ້າຍຄືກັນໃນການຊ່ວຍເຫຼືອກຸ່ມຊົນເຜົ່າກໍ່ຈະຖືກນໍາໃຊ້. ກອບນະໂຍບາຍດ້ານຊົນເຜົ່າໄດ້ຮັບການປັບປຸງຈາກປະສົບການທີ່ຜ່ານມາຂອງ ທລຍ 2 ເພື່ອຮັບປະກັນການໄດ້ຮັບຄໍາແນະນໍາທີ່ພຽງພໍ ແລະ ເໝາະສົມພ້ອມກັບການມີສ່ວນຮ່ວມຂອງກຸ່ມຊົນເຜົ່າໃນການວາງແຜນໂຄງການ ແລະ ຂະບວນການຈັດຕັ້ງປະຕິບັດ. ກອບນະໂຍບາຍດ້ານຊົນເຜົ່າໄດ້ອະທິບາຍວິທີການ ດຶງເອົາກຸ່ມຊົນເຜົ່າມາມີສ່ວນຮ່ວມ (ການຮວມ), ການກໍານົດກຸ່ມຜູ້ດ້ອຍໂອກາດທີ່ອ່ອງໄວ, ການຕິດຕາມກວດກາ ແລະ ລາຍງານແມ່ນໃຫ້ສໍາເລັດໃນລະຫວ່າງການການຈັດຕັ້ງປະຕິບັດໂຄງການ ທລຍ 3. ກອບນະໂຍບາຍດ້ານຊົນເຜົ່າກໍ່ມີການພົວພັນກັບກອບນະໂຍບາຍທົດແທນຄືນ ແລະ ການຍົກຍ້າຍຖິ່ນຖານ ແລະ ກອບການຄຸ້ມຄອງດ້ານສັງຄົມ ແລະ ສິ່ງແວດລ້ອມ. ກອບນະໂຍບາຍດ້ານຊົນເຜົ່າ ຈະສືບຕໍ່ສະໜອງຂໍ້ແນະນໍາໃຫ້ແກ່ພາກສ່ວນຕ່າງໆ ແລະ ຈະໄດ້ສ້າງແຜນການດໍາເນີນງານ ເຊິ່ງອາດໄດ້ພັດທະນາຂຶ້ນມາແລ້ວພາຍໃຕ້ ທລຍ

2 ຫລື ໄດ້ພັດທະນາຂຶ້ນພາຍໃຕ້ ທລຍ 3 ເຊັ່ນ: ແຜນການຈັດຕັ້ງປະຕິບັດວຽກງານບົດບາດຍິງ-ຊາຍແລະ ການປະເມີນຜົນການເຂົ້າຮ່ວມຂອງສັງຄົມ. ສຳລັບລາຍລະອຽດໃນແຕ່ລະຂັ້ນຕອນນັ້ນ ຈະໄດ້ລະບຸໄວ້ຢູ່ໃນແຕ່ລະຂໍ້ແນະນຳ ໂດຍໃຫ້ກົງກັບນະໂຍບາຍ OP 4.10.

ພະນັກງານຂອງ ທລຍ ທັງໃນລະດັບສູນກາງ ແລະ ທ້ອງຖິ່ນຈະໄດ້ຮັບຜິດຊອບການປະຕິບັດກອບນະໂຍບາຍດ້ານຊົນເຜົ່າ ແລະ ຮັບປະກັນການປະຕິບັດຢ່າງເຕັມທີ່, ລວມທັງການເກັບກຳເອກະສານຂໍ້ມູນທີ່ເໝາະສົມໃນບ່ອນເກັບມ້ຽນເອກະສານໂຄງການ ເພື່ອຄວາມສາມາດໃນການທົບທວນຄືນຂອງທະນາຄານໂລກ.

ເອກະສານດັ່ງກ່າວຖືເປັນເອກະສານທີ່ສາມາດດັດແກ້ ແລະ ປັບປຸງໂດຍອີງຕາມການປ່ຽນແປງຂອງສະຖານນະການ ຫຼື ຂອບເຂດຂອງກິດຈະກຳ. ການປຶກສາຫາລືຢ່າງໃກ້ສິດກັບທະນາຄານໂລກ ແລະ ການເກັບກຳເອົາກອບນະໂຍບາຍດ້ານຊົນເຜົ່າທີ່ໄດ້ພິຈາລະນາຄືນໃໝ່ເປັນສິ່ງທີ່ຈຳເປັນ.

# ພາກທີ I: ລາຍລະອຽດໂຄງການ

ໂຄງການຂອງ ທລຍ 3ຈະຖືກສ້າງຂຶ້ນບົນພື້ນຖານຄວາມສຳເລັດຂອງການຈັດຕັ້ງປະຕິບັດໂຄງການຂອງ ທລຍ 2, ແລະ ມີຈຸດປະສົງເພື່ອປັບປຸງການເຂົ້າເຖິງການບໍລິການຂອງຊຸມຊົນຜູ້ທຸກຍາກໃນຕໍ່ໜ້າ, ສ້າງຂຶ້ນອີງຕາມຈຳນວນບົດຮຽນທີ່ສຳຄັນທີ່ໄດ້ຮັບຈາກການຈັດຕັ້ງປະຕິບັດ ທລຍ 2 ຊຶ່ງໄດ້ອະທິບາຍຢູ່ຂ້າງເທິງນັ້ນ.

### ອົງປະກອບທີ 1: ການຊ່ວຍເຫຼືອລ້າດ້ານການພັດທະນາຊຸມຊົນ

ການວາງແຜນພັດທະນາຊຸມຊົນແຕ່ລຸ່ມຂຶ້ນເທິງ: ຮ່ວງງົບປະມານນີ້ ຍັງຄົງສືບຕໍ່ໃຫ້ການສະຫນັບສະຫນູນດ້ານວິຊາການ ແລະ ການໄປມາຫາບ້ານເພື່ອສະໜັບສະໜູນເຂົ້າໃນການວາງແຜນການພັດທະນາຂັ້ນບ້ານ (VDP) ໂດຍອີງໃສ່ຂະບວນການວາງແຜນແບບມີສ່ວນຮ່ວມ. ການວາງແຜນການພັດທະນາຂັ້ນບ້ານຈະໄດ້ຮັບການພັດທະນາໃນຮອບສາມປີໂດຍພື້ນຖານແລະຈະເຊື່ອມສານເຂົ້າໃນການວາງແຜນພັດທະນາຂັ້ນກຸ່ມບ້ານ (KDP) ໂດຍການເຂົ້າຮ່ວມຂອງຕົວແທນບ້ານທີ່ຖືກຄັດເລືອກມາຈາກແຕ່ລະບ້ານ. ຜູ້ປະສານງານກຸ່ມບ້ານ (KBF) ຈະສືບຕໍ່ສະແດງພາລະບົດບາດໃນການນຳພາຂະບວນການວາງແຜນຂັ້ນບ້ານພາຍໃຕ້ການສະຫນັບສະຫນູນຂອງພະນັກງານພັດທະນາຊຸມຊົນຂັ້ນເມືອງ. ການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນແບບຕັມຮູບແບບ (DCDD) ແມ່ນປະສົມຜົນສຳເລັດເປັນຢ່າງດີພາຍໃຕ້ ທລຍ 2, ຈະຍັງຄົງນຳໃຊ້ຮູບແບບນີ້ໄປທຸກເມືອງເປົ້າໝາຍຈັດຕັ້ງປະຕິບັດໂຄງການຂອງທລຍ 3.

ການຊ່ວຍເຫລືອຊຸມຊົນລ້າ: ທຸກໆກຸ່ມບ້ານເປົ້າໝາຍ ຍັງຈະສືບຕໍ່ໄດ້ຮັບການຈັດສັນງົບປະມານໄລຍະສາມປີ ເຂົ້າໃນບັນດາບູລິມະສິດຄວາມຕ້ອງການໃນແຜນພັດທະນາກຸ່ມບ້ານ. ໂດຍສະເລ່ຍ, ແຕ່ລະກຸ່ມບ້ານຈະໄດ້ຮັບ 40,000ໂດລາສະຫະລັດ/ປີ ແລະ ໃນໄລຍະສາມປີຈະໄດ້ຮັບລວມທັງໝົດ 120,000ໂດລາສະຫະລັດ. ອີງຕາມການຈັດຕັ້ງປະຕິບັດໃນ ທລຍ 2, ໂຄງການຍ່ອຍຈະໄດ້ຮັບທຶນ ແລະ ດຳເນີນເປັນປີໃນຂັ້ນກຸ່ມບ້ານໂດຍພື້ນຖານ ອີງຕາມແຜນພັດທະນາກຸ່ມບ້ານ ໂດຍການເຂົ້າຮ່ວມຄັດເລືອກຂອງຕົວແທນບ້ານທີ່ຖືກຄັດເລືອກມາຈາກແຕ່ລະບ້ານ. ກິດຈະກຳທີ່ຈະໄດ້ຮັບງົບປະມານພາຍໃຕ້ເງິນຊ່ວຍເຫລືອລ້ານີ້ ຈະເປີດກ້ວາງລົດລາຍການກິດຈະກຳທີ່ບໍ່ສະໜັບສະໜູນຂອງໂຄງການ. ເພດານງົບປະມານຊ່ວຍເຫລືອລ້າໃນຈຳນວນ 60,000ໂດລາສະຫະລັດຈະຍັງຖືກນຳມາໃຊ້. ພະນັກງານ ທລຍ ແລະ ພະນັກງານລັດຂັ້ນເມືອງ ຍັງຄົງຕ້ອງໄດ້ໃຫ້ຄຳແນະນະທາງດ້ານວິຊາການເພື່ອຊ່ວຍໃນການໄຈ້ແຍກໂຄງການຍ່ອຍທີ່ຈະສ້າງຜົນປະໂຫຍດໂດຍລວມໃນຂັ້ນກຸ່ມບ້ານ, ໃຊ້ແຜນວາດແຫລ່ງຊັບພະຍາກອນຂັ້ນກຸ່ມບ້ານ. ພາຍໃຕ້ ທລຍ 3, ຈະສະໜັບສະໜຸນເຂົ້າໃນການປັບປຸງ ແລະ ຟື້ນຟູບັນດາໂຄງລ້າງພື້ນຖານທີ່ມີຢູ່ແລ້ວນັ້ນໃຫ້ໄດ້ດີເທົ່າໂຄງການໃໝ່ ຫລືປັບປຸງໃໝ່. ການລົງຕິດຕາມຢ້ຽມຢາມປະຈຳປີພາຍໃຕ້ ທລຍ 2, ຄວນຈະຊີ້ນຳຊາວບ້ານໃນການໄດ້ຮັບຜົນປະໂຫຍດໄລຍະກາງ/ໄລຍະຍາວ ໃນການແກ້ໄຂບັນຫາທີ່ຍັງຄ້າງຄາໃນບູລະນະສ້ອມແປງຄືນຫລັງໃນບັນດາໂຄງລ່າງພື້ນຖານໃນບ້ານ. ກິດຈະກຳບູລະນະສອມແປງຈະໄດ້ຮັບການທົດລອງ ເພື່ອສະໜັບສະໜູນການບູລະນະສ້ອມແປງພື້ນຖານໂຄງລ່າງຂັ້ນສາມໃນຖະໜົນຫົນທາງເຂດຊົນນະບົດໂດຍສະເພາະ, ຊຶ່ງຈະໄດ້ຮັບທຶນຜ່ານງົບປະມານຊ່ວຍເຫລືອຊຸມຊົນລ້າ.

### ອົງປະກອບທີ 2: ການສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ແລະ ອຳນາດການປົກຄອງຂັ້ນທ້ອງຖິ່ນແລະ ການຮຽນຮູ້

ພັດທະນາຄວາມອາດສາມາດຂອງຊຸມຊົນ ແລະ ອຳນາດການປົກຄອງຂັ້ນທ້ອງຖິ່ນ ໃນການວາງແຜນ ແລະ ບໍລິຫານຂະບວນການພັດທະນາຂັ້ນທ້ອງຖິ່ນໃນນາມເປັນຄູ່ຮ່ວມງານ. ສະເພາະຮ່ວງງົບປະມານນີ້ ຈະເປັນທຶນໃນການຝຶກອົບ ຮົມຂອງຊາວບ້ານ, ພະນັກງານ ທລຍ ແລະ ອຳນາດການປົກຄອງຂັ້ນທ້ອງຖິ່ນ, ອຸປະກອນ ແລະ ຄ່າໃຊ້ຈ່າຍໃນການປະຕິ ບັດງານທີ່ເພີ່ມຂຶ້ນ.

ຢູ່ໃນຂັ້ນບ້ານ,ຮ່ວງງົບປະມານນີ້ຈະສະໜັບສະໜູນຄວາມສາມາດໃນການພັດທະນາຂອງຫົວໜ້າທີມຂັ້ນບ້ານ ແລະ ຜູ້ປະສານງານກຸ່ມບ້ານ ໃນຂັ້ນຂະບວນການວາງແຜນແບບມີສ່ວນຮ່ວມ ແລະ ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການເດີນທາງໃນການເຂົ້າຮ່ວມຂອງເຂົາເຈົ້າໃນກອງປະຊຸມວາງແຜນຢູ່ຂັ້ນເມືອງ ແລະ ຂະບວນການຕິດຕາມໂຄງການຍ່ອຍ. ງົບປະມານໃນການພັດທະນາດ້ານເຕັກນິກຂອງເຂົາເຈົ້າ ແລະ ພັດທະນາຄວາມສາມາດໃນການປ້ອງກັນໃນການພັດທະນາ, ຊີ້ນຳ ແລະ ຄຸ້ມຄອງນຳໃຊ້ໂຄງການຍ່ອຍດ້ານໂຄງລ່າງພື້ນຖານ ໂດຍສອດຄ່ອງກັບການຕົກລົງກັນ ຄວນໄດ້ຮັບທຶນເຊັ່ນກັນ.

ຢູ່ຂັ້ນເມືອງ ແລະ ຂັ້ນແຂວງ, ຮ່ວງທຶນດັ່ງກ່າວຈະສືບຕໍ່ໃຫ້ການສະໜັບສະໜູນທຶນໃນການເພີ້ມທະວີການສ້າງຂີດຄວາມອາດສາມາດຂອງພະນັກງານຂັ້ນເມືອງ ແລະ ແຂວງ ເພື່ອສະໜັບສະໜູນການພັດທະນາໃນເຂດທ້ອງຖິ່ນ ແລະ ຊຸມຊົນ, ສະຫນັບສະຫນູນດ້ານວິຊາການ ແລະ ໃຊ້ສຳລັບອຳນາດການປົກຄອງຂັ້ນເມືອງ ໃນການພັດທະນາ ແລະ ປັບປຸງແຜນພັດທະນາຂັ້ນເມືອງ (DDP)ໂດຍອີງຕາມຜົນການອຳນວຍຄວາມສະດວກຂອງ ທລຍ ໃນການວາງແຜນພັດທະນາກຸ່ມບ້ານ, ນຳໃຊ້ຄະນະຜູ້ປະສານງານ ທລຍ ຝ່າຍລັດຂັ້ນເມືອງທີ່ມີຢູ່ແລ້ວນັ້ນ ແລະມີສ່ວນຮ່ວມຈາກຕົວແທນກຸ່ມບ້ານທີ່ຄັດເລືອກໃນກອງປະຊຸມວາງແຜນຂັ້ນກຸ່ມບ້ານ ແລະ ຜູ້ປະສານງານກຸ່ມບ້ານ, ສິ່ງເຫລົ່ານີ້ແມ່ນຈະໄດ້ຮັບທຶນສະໜັບສະນຸນພາຍໃນຮ່ວງງົບປະມານນີ້ໄດ້.

ຢູ່ຂັ້ນສູນກາງ,ຮ່ວງດັ່ງກ່າວຍັງຈະສືບຕໍ່ສະໜັບສະໜູນທຶນ ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ ທລຍ, ອົງການຈັດຕັ້ງ ແລະ ເຂົ້າຮ່ວມສຳມະນາ ແລະ ກິດຈະກຳສ້າງຄວາມເຂັ້ມແຂງອື່ນໆ ເພື່ອເພີ້ມທະວີຂອດການປະສານງານລະຫວ່າງ ທລຍ ກັບບັນດາຂະແໜງການກ່ຽວຂ້ອງຂອງກະຊວງຕ່າງໆ ແລະ ຄູ່ຮ່ວມງານໃນວຽກງານພັດທະນາຊົນນະບົດຢູ່ເຂດຊົນນະບົດ ຂອງ ສປປ ລາວ ແມ່ນຈະໄດ້ຮັບການເງິນທຶນພາຍໃຕ້ຮ່ວງງົບປະມານນີ້ໄດ້. ການຕິດຕາມໂຄງການ, ການປະເມີນຜົນ ແລະ ການລາຍງານກ່ຽວກັບກິດຈະກຳ ລວມທັງການສືສາສະເພາະບາງດ້ານ ແມ່ນຈະໄດ້ຮັບທຶນສະໜັບສະນຸນພາຍໃນຮ່ວງງົບປະມານນີ້.

ຮ່ວງງົບປະມານນີ້ຍັງສືບຕໍ່ສະໜັບການເປັນຄູ່ຮ່ວມງານກັບສູນຈັດຫານ້ຳສະອາດ ແລະ ອະນາໄມສິ່ງແວດລ້ອມແຫ່ງຊາດ (Nam Sa at) ແລະ ເປັນງົບປະມານສຳລັບຄ່າເດີນທາງ ແລະ ຄ່າໃຊ້ຈ່າຍໃຫ້ຜູ້ປະສານງານກຸ່ມບ້ານ ແລະ ທີມງານຈັດຕັ້ງປະຕິບັດຂັ້ນບ້ານ ຊຶ່ງສະໜັບສະໜູນການຍຸດຕິຖ່າຍຊະຊາຍ (ODF) ໃນຂັ້ນບ້ານ.ເວົ້າສະອາດ[2]. ບົດບັນທຶກຄວາມເຂົ້າໃຈໄດ້ຮັບການປັບປຸງໃນມໍ່ນີ້ເພື່ອກຳນົດພາລະບົດບາດ ແລະ ຄວາມຮັບຜິດຊອບ, ລວມທັງສັດສ່ວນຄ່າໃຊ້ຈ່າຍລະຫວ່າງຄູ່ຮ່ວມງານທັງສອງຝ່າຍ ຊຶ່ງຈະບໍ່ແມ່ນງົບປະມານໃຊ້ຈ່າຍສຳລັບການສ້າງວິດຖ່າຍ. ຄູ່ຮ່ວມງານທີ່ຄ້າຍຄືກັນກໍ່ອາດຈະມີຄວາມຄິດລິເລີ່ມໃນການເຮັດເວົ້າສະອາດ ພາຍໃຕ້ການແນະນຳ ແລະ ຊຸກຍູ້ໃນນາມບ້ານໂດຍທີມງານຈັດຕັ້ງປະຕິບັດຂັ້ນບ້ານ ແລະ ຜູ້ປະສານງານກຸ່ມບ້ານ. ຄ່າໃຊ້ຈ່າຍສຳລັບຊື້ເວົ້າສະອາດແມ່ນບໍ່ໄດ້ຮັບການສະໜັບສະນຸນງົບປະມານຈາກໂຄງການ.

## ອົງປະກອບທີ 3: ຄຸ້ມຄອງໂຄງການ

ຮ່ວງນີ້ຈະສືບຕໍ່ສະການສະໜັບສະໜູນຄ່າໃຊ້ຈ່າຍຂອງການຈັດຕັ້ງປະຕິບັດກິດຈະກຳໃນ ທລຍ 3,ມັນອາດລວມ ຄ່າໃຊ້ຈ່າຍສຳລັບພະນັກງານ ທລຍ ຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ; ບັນດາອຸປະກອນ ແລະ ຄ່າໃຊ້ຈ່າຍການດຳເນີນງານທີ່ກ່ຽວຂ້ອງ; ການບັນຊີ, ຈັດຊື້-ຈັດຈ້າງ, ການບໍລິການທາງດ້ານການເງິນ, ການປ້ອງກັນພາຍໃນ, ການກວດສອບ. ແລະຂົງເຂດສະເພາະອື່ນໆ.

[2]ການລິເລີ່ມນີ້ໄດ້ຖືກສະຫນັບສະຫນູນໃນປັດຈຸບັນພາຍໃຕ້ກອງທຶນທະນາຄານ.

**ອົງປະກອບທີ 4: ໂຄງການທົດລອງປັບປຸງຊີວິດການເປັນຢູ່ ເພື່ອຄໍ້າປະກັນທາງດ້ານໂພຊະນາການ:**

ຮ່ວງງົບປະມານນີ້ ຍັງສືບຕໍ່ສະໜັບສະໜູນເຂົ້າ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ກຸ່ມຊ່ວຍເຫລືອຊຶ່ງກັນ ແລະ ກັນ (SHGs) ໃນ 150 ບ້ານ ໂດຍຜ່ານການສະໜອງທຶນການຜະລິດເຊັ່ນ: ກ). ການເລີ່ມຕົ້ນພັດທະນາກິດຈະກໍາປັບປຸງຊີວິດການເປັນຢູ່ ເພື່ອຄໍ້າປະກັນທາງດ້ານໂພຊະນາການຄື: ການລ້ຽງສັດຂະໜາດນ້ອຍ (ເຊັ່ນ, ລ້ຽງໄກ່, ລ້ຽງປາ ແລະ ລ້ຽງກົບ) ສ່ວນໃຫຍ່ແມ່ນເພື່ອການລ້ຽງເພື່ອໄດ້ກິນ; ຂ). ເພີ່ມຄວາຮູ້ໃນໃນກິດຈະກໍາປັບປຸງຊີວິດການເປັນຢູ່ ລວມທັງການຮຽນຮູ້ ແລະ ຮອບວຽນການຜະລິດ, ແລະ ຄ). ການຕິດຕາມ ແລະ ປະເມີນກິດຈະກໍາຂອງໂຄງການ. ຮ່ວງງົບປະມານີ້ ຍັງຈະສະໜັບສະໜຸນຄວາມຮູ້ທາງດ້ານໂພຊະນາການຂອງສະມາຊິກກຸ່ມຊ່ວຍເຫລືອຊຶ່ງກັນ ແລະ ກັນ, ແຕ່ມັນອາດຈະບໍ່ໄດ້ສະໜັບສະໜູນສູນ ສະໂມສອນໂພຊະນາການບ້ານ (VNC) ຫລື ສະໜອງວັດຖຸດິບລ້າສໍາລັບອາຫານກາງວັນ ດັ່ງທີ່ເຄີຍໄດ້ເຮັດໃນ ທລຍ 2.

## ພາກທີ II: ນະໂຍບາຍ ແລະ ຫຼັກການ

### ນະໂຍບາຍທະນາຄານໂລກ ຕໍ່ປະຊາຊົນບັນດາເຜົ່າ (OP 4.10)

ນະໂຍບາຍການປະຕິບັດການຂອງທະນາໂລກ 4.10 (ປະຊາຊົນບັນດາເຜົ່າ) ຮຽກຮ້ອງໃຫ້ມີແຜນມາດຕະການພິເສດເພື່ອປົກປ້ອງຜົນປະໂຫຍດຂອງກຸ່ມຊົນເຜົ່າກັບເອກະລັກດ້ານສັງຄົມ ແລະ ວັດທະນະທຳທີ່ແຕກຕ່າງຈາກສັງຄົມສ່ວນໃຫຍ່ເຊິ່ງອາດເຮັດໃຫ້ເຂົາເຈົ້າມີຄວາມສ່ຽງໃນການກາຍເປັນຜູ້ດ້ອຍໂອກາດໃນຂະບວນການພັດທະນາ. ນະໂຍບາຍໄດ້ກຳນົດວ່າກຸ່ມຊົນເຜົ່າສາມາດໄດ້ຮັບການກຳນົດໃນເຂດພູມີສາດສະເພາະ ໂດຍສະແດງໃຫ້ເຫັນລັກສະນະສະເພາະທີ່ຫຼາກຫຼາຍດັ່ງຕໍ່ໄປນີ້:

- ຄວາມຜູກພັນໃກ້ຊິດກັບເຈົ້າກົກເຈົ້າເລົ່າ ແລະ ຊັບພະຍາກອນທຳມະຊາດໃນຂົງເຂດນັ້ນ;
- ກຳນົດຕົນເອງ ແລະ ກຳນົດໂດຍຄົນອື່ນ ວ່າເປັນສະມາຊິກຂອງກຸ່ມວັດທະນາທຳທີ່ແຕກຕ່າງ;
- ພາສາພື້ນເມືອງ, ເຊິ່ງສ່ວນຫຼາຍແຕກຕ່າງຈາກພາສາທາງການ; ແລະ
- ມີຮີດຄອງປະເພນີ ແລະ ສະຖາບັນປົກຄອງ

ເງື່ອນໄຂເພື່ອການຮັບຮອງໂຄງການ, OP 4.10 ຮຽກຮ້ອງໃຫ້ຜູ້ກູ້ຢືມມີການປຶກສາຫາລືລ່ວງໜ້າ ແລະ ປັດສະຈາກຄ່າໃຊ້ຈ່າຍໃດໆ ກັບກຸ່ມຊົນເຜົ່າທີ່ອາດຖືກຜົນກະທົບ ແລະ ສ້າງຕັ້ງການຊ່ວຍເຫຼືອຊຸມຊົນຢ່າງກວ້າງຂວາງສຳລັບຈຸດປະສົງ ແລະ ກິດຈະກຳໂຄງການ. ເປັນສິ່ງຈຳເປັນທີ່ຕ້ອງສັງເກດວ່າ OP 4.10 ໝາຍເຖິງກຸ່ມສັງຄົມແລະຊຸມຊົນ ແລະ ບໍ່ແມ່ນກຸ່ມບຸກຄົນ, ຈຸດປະສົງຕົ້ນຕໍຂອງ OP 4.10 ມີດັ່ງນີ້:

- ເພື່ອຮັບປະກັນວ່າກຸ່ມດັ່ງກ່າວມີໂອກາດເຂົ້າເຖິງການມີສ່ວນຮ່ວມໃນການວາງແຜນເຊິ່ງຈະມີຜົນປະໂຫຍດຕໍ່ເຂົາເຈົ້າ;
- ເພື່ອຮັບປະກັນວ່າໂອກາດດັ່ງກ່າວໄດ້ຮັບການພິຈາລະນາ ຄວາມເໝາະສົມດ້ານວັດທະນະທຳຂອງກຸ່ມດັ່ງກ່າວ;
- ເພື່ອຮັບປະກັນວ່າຜົນກະທົບອັນບໍ່ດີຈະໄດ້ຮັບການຫຼີກລ້ຽງຫຼືບໍ່ດັ່ງນັ້ນກໍ່ຫຼຸດຜ່ອນລົງໄດ້ຮັບການກວດສອບຢ່າງຄັກແນ່.

ກຸ່ມຊົນເຜົ່າໃນ ສ ປປ ລາວ[3] ລວມທັງກຸ່ມຊົນເຜົ່າອາຊີ້ຽນທີ່ແຕກຕ່າງກັນຄື: ມົ້ງ-ລູມຽນ, ມົ້ງ-ອິ້ວມຽງ, ຈີນ-ຕິເບດ ແລະ ໄທ-ກາໄດ ທີ່ມີພາສາຊົນເຜົ່າເປັນຂອງຕົນເອງ (ເບິ່ງຕາຕະລາງ 1 ດັ່ງຕໍ່ໄປນີ້), ເຊິ່ງເຂົາເຈົ້າເປັນຜູ້ທີ່ທີຄວາມສ່ຽງ ແລະ ມີຄຸນລັກສະນະທີ່ລະບຸໄວ້ຢູ່ໃນນະໂຍບາຍຂອງທະນາຄານໂລກ. ກຸ່ມເຫລົ່ານີ້ກວມເອົາສ່ວນໃຫຍ່ຂອງບັນດາເມືອງທີ່ໂຄງການຂອງ ທລຍ ເຮັດວຽກຢູ່ ເພາະສະນັ້ນໂຄງການທັງໝົດຈຶ່ງອອກແບບໃຫ້ແທດເໝາະກັບ OP 4.10 ແລະປະສົບການໃນການປະຕິບັດໄດ້ຮັບການໂອ້ລົມແລກປ່ຽນໃນພາກທີ III ດັ່ງຕໍ່ໄປນີ້. ນະໂຍບາຍຍັງໄດ້ຮຽກຮ້ອງວ່າກຸ່ມຊົນເຜົ່າໃນແຕ່ລະບ້ານຄວນໄດ້ຮັບການກຳນົດເພື່ອຮັບປະກັນວ່າເຂົາເຈົ້າສາມາດປະກອບສ່ວນຢ່າງເຕັມທີ່ໃນຂະບວນການການມີສ່ວນຮ່ວມ ແລະ ຮັບເອົາຜູ້ປະສານງານຈາກຊົນເຜົ່າ ແລະ\ຫຼື ກະກຽມອຸປະກອນອັນເໝາະສົມ ກັບພາສາທ້ອງຖິ່ນອາດມີຄວາມຈຳເປັນເຊັ່ນກັນ. ໃນ ສປປລາວ, ຄວາມພະຍາຍາມທັງໝົດໄດ້ສ້າງຂຶ້ນຄຽງຄູ່ກັບການປຶກສາຫາລືຢ່າງໃກ້ສິດກັບຫ້ອງການຂອງສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂອງລັດຖະບານໄດ້ຕົງລົງເຫັນດີ ເພື່ອສົ່ງເສີມແລະປົກປ້ອງສິດທິ ແລະ ຜົນປະໂຫຍດຂອງບັນດາຊົນເຜົ່າໃນ ສປປ ລາວ.

[3]ເປັນທີ່ຮູ້ກັນໃນຊື່ເຕັມຄື ຄະນະອົງການຈັດຕັ້ງສູນກາງພັກ ຮັບຜິດຊອບ ກ່ຽວກັບ ກຸ່ມຊົນເຜົ່າໃນສະໄໝໃໝ່.

## ນະໂຍບາຍ ແລະ ລະບຽບການຂອງລັດຖະບານ

ລັດຖະທຳມະນູນຂອງ ສປປ ລາວ, ຖືກຮັບຮອງໃນປີ 1991 ນຳໃຊ້ຄຳສັບວ່າ "ພົນລະເມືອງທຸກຊົນເຜົ່າ" ໃນເອກະສານດັ່ງກ່າວ. ມັນຮັບຮູ້ຄວາມຕ້ອງການສະເພາະເພື່ອຮ່ວມມື ແລະ ຄວາມເປັນຫ່ວງເປັນໃຍນຳຊົນເຜົ່າໃນການພັດທະນານະໂຍບາຍ ແລະ ໂຄງການໃນທຸກຂະແໜງການ. ມັນຍັງໄດ້ຢັ້ງຢືນຄວາມຕັ້ງໃຈເພື່ອເພີ່ມທະວີສິດທິຂອງທຸກຊົນເຜົ່າໃນສະໄໝປະຊຸມ, ກອງປະຊຸມ, ດຳລັດ ແລະ ກົດໝາຍຕ່າງໆນັບແຕ່ຊຸມປີ 1980 (ມາດຕາ 8 ແລະ 22). ມາດຕາ 75 ຂອງລັດຖະທຳມະນູນໄດ້ລະບຸສະເພາະວ່າ "ພາສາ ແລະ ຕົວໜັງສືລາວແມ່ນພາສາທາງການ".

ນະໂຍບາຍຊົນເຜົ່າສ່ວນນ້ອຍ ປີ 1992 ຂອງ ສປປ ລາວ ທີ່ກ່ຽວຂ້ອງກັບຊົນເຜົ່າສ່ວນນ້ອຍໄດ້ລະບຸ 3 ພາກສ່ວນສຳຄັນດັ່ງນີ້: (ກ) ເພີ່ມທະວີພື້ນຖານທາງດ້ານການເມືອງ, (ຂ) ເພີ່ມການຜະລິດ ແລະ ເປີດກວ້າງຊ່ອງທາງການກະຈາຍ ເພື່ອຫັນປ່ຽນຈາກເສດຖະກິດແບບກຸ້ມຢູ່ກຸ້ມກິນ ເປັນເສດຖະກິດຕະຫຼາດ, ແລະ (ຄ) ເອົາໃຈໃສ່ຂະຫຍາຍການສຶກສາ, ສາທາ ແລະ ຜົນປະໂຫຍດທາງສັງຄົມອື່ນໆ. ສິ່ງທີ່ກ່ຽວຂ້ອງໂດຍກົງຕໍ່ໂຄງການນີ້,ນະໂຍບາຍນີ້ໄດ້ກ່າວໄວ້ວ່າ ສປປ ລາວ ຕ້ອງໃຫ້ຊົນເຜົ່າສ່ວນນ້ອຍຢຸດເຊົາບັນດາກິດຈະກຳ ທີ່ກ່ຽວຂ້ອງກັບການຖາງປ່າເຮັດໄຮ່ ເພື່ອກ້າວໄປສູ່ການດຳລົງຊີວິດແບບຄົງທີ່ ເຊິ່ງຜົນປະໂຫຍດຂອງການເຮັດກະສິກຳໃນຮູບແບບອື່ນແມ່ນມີປະສິດທິພາບສູງກວ່າການຖາງປ່າເຮັດໄຮ່. ໂດຍພື້ນຖານ ສປປ ລາວ ພິຈາລະນາວ່າຊົນເຜົ່າເຂດພູດອຍ (ໂດຍສະເພາະລວມມີເຜົ່າກຶມມຸ ແລະ ເຜົ່າມົ້ງ) ຖືວ່າ "ປະເພນີການທຳມາຫາກິນແມ່ນສິ່ງຜົນກະທົບຕໍ່ຮູບແບບຂອງການຜະລິດຂອງເຂົາເຈົ້າ". ໃນທາງປະຕິບັດ ສປປ ລາວ ຮັບຮູ້ວ່າ ການຈັດຕັ້ງປະຕິບັດມັນບໍ່ທັນສອດຄ່ອງກັບຄວາມເປັນຈິງ ເພື່ອປ່ຽນທັງໝົດ "ຮີດເກົ່າຄອງເດີມ" ຂອງກຸ່ມຊົນເຜົ່າ ຍ້ອນວ່າມີເນື້ອທີ່ການຜະລິດໃນເຂດທົ່ງພຽງທີ່ຈຳກັດ ແມ້ກະທັ່ງຊົນເຜົ່າລາວ, ຕັ້ງຮາກຖານຢູ່ເຂດທົ່ງພຽງ ແຕ່ພວກເຂົາກໍ່ຍັງເຮັດການຜະລິດກະສິກຳແບບເຂດພູດອຍ.

ຂໍ້ແນະນຳສະບັບໃໝ່ທີ່ໄດ້ຈາກການປຶກສາຫາລືກັບກຸ່ມຊົນເຜົ່າແຫ່ງຊາດ ໄດ້ລິເລີ່ມໂດຍສູນກາງແນວລາວສ້າງຊາດ (LFNC) ໃນປີ 2012ໂດຍສອດຄ່ອງກັບ ຂໍ້ແນະນຳການມີສ່ວນຮ່ວມຂອງມະຫາຊົນແຫ່ງຊາດ ປີ 2012. ເຊິ່ງມີຈຸດປະສົງເພື່ອຮັບປະກັນໃຫ້ແກ່ທຸກກຸ່ມຊົນເຜົ່າທີ່ໄດ້ຮັບຜົນປະໂຫຍດ ຫຼື ໄດ້ຮັບຜົນກະທົບຈາກໂຄງການພັດທະນາ ໂດຍບໍ່ໄດ້ຄໍານຶ່ງເຖິງແຫລ່ງທີ່ມາຂອງເງິນທຶນ, ເຂົາເຈົ້າມີສ່ວນຮ່ວມຢ່າງເຕັມທີ່ ໃນຂະບວນການປຶກສາຫາລືທີ່ມີຄວາມຫມາຍໃນທຸກຂັ້ນຕອນ ເລີ່ມຈາກການກະກຽມຈົນເຖິງການຈັດຕັ້ງປະຕິບັດໂຄງການ. ຂໍ້ແນະນຳຍັງມີຈຸດປະສົງເພື່ອຮັບປະກັນວ່າຊົນເຜົ່າທີ່ໄດ້ຮັບຜົນກະທົບນັ້ນ ໄດ້ຮັບການແຈ້ງຂໍ້ມູນກ່ຽວກັບຈຸດປະສົງຂອງໂຄງການຢ່າງເຕັມທີ່, ເຊັ່ນດຽວກັນກັບຜົນກະທົບທາງບວກແລະທາງລົບ ຕໍ່ການດຳລົງຊີວິດແລະສະພາບແວດລ້ອມຂອງເຂົາເຈົ້າແລະ ໃຫ້ໂອກາດເຂົ້າເຈົ້າເວົ້າຂໍ້ຄວາມກັງວົນຂອງເຂົາເຈົ້າ. ຄຳແນະນຳປະກອບດ້ວຍ: ກ).ຈຸດປະສົງ ແລະ ຂອບເຂດຂອງຂໍ້ແນະນຳ, ຂ). ຂະບວນການປຶກສາຫາລືກັບກຸ່ມຊົນເຜົ່າ ໃນການຍິນຍອມຮັບເອົາໂຄງການພັດທະນາ, ຄ).ຮູບແບບການປຶກສາຫາລື ແລະ ວິທີການສຳລັບຊົນເຜົ່າທີ່ແຕກຕ່າງກັນໃນລັກສະນະທີ່ມີຄວາມອ່ອນໄຫວທາງວັດທະນະທຳ, ງ).ຄາດຄະເນຜົນໄດ້ຮັບຂອງການປຶກສາຫາລືຢູ່ແຕ່ລະຂັ້ນຕອນ,ຈ).ການດຳເນີນການຈັດຕັ້ງປະຕິບັດແລະຄວາມຮັບຜິດຊອບ.

ກະຊວງພາຍໃນແມ່ນຢູ່ໃນຂະບວນການຂອງການຮ່າງກົດຫມາຍວ່າ ດ້ວຍຂອງກຸ່ມຊົນເຜົ່າ, ທີ່ຄາດວ່າຈະໄດ້ຮັບການອະນຸມັດໂດຍສະພາແຫ່ງຊາດໃນເດືອນກັນຍາ, ປີ 2016. ກົດຫມາຍຈະມີຜົນບັງຄັບໃຊ້ ແລະ ສະໜັບສະໜູນນິຕິທັງຫມົດທີ່ໄດ້ກ່າວມາກ່ຽວກັບຊົນເຜົ່າໃນສປປລາວ. ຫຼັກການພື້ນຖານທີ່ສຳຄັນແລະລະບຽບການສຳລັບການປຶກສາຫາລືກັບຊົນເຜົ່າໃນຂໍ້ແນະນຳນີ້ ຈະໄດ້ຮັບການຮັບຮອງເອົາເຂົ້າເປັນເຄື່ອງມືທີ່ໃຊ້ໃນການປ້ອງກັນຂອງທລຍ 3, ລວມທັງກອບການຄຸ້ມຄອງທາງດ້ານສິ່ງແວດລ້ອມ ແລະ ສັງຄົມ (ESMF), ກອບນະໂຍບາຍການທົດແທນຄືນ ແລະ ການຍົກຍ້າຍຖິ່ນຖານ (CRPF), ກອບການວາງແຜນດ້ານຊົນເຜົ່າ (EGPF). ສຳເນົາເອກະສານຂໍ້ແນະນຳພາສາລາວຈະໄດ້

ຮັບການສະໜອງໃຫ້ແກ່ຫ້ອງການ ຫລຍ ເມືອງທັງໝົດ ແລະ ພະນັກງານທີ່ໄດ້ຮັບການຝຶກອົບຮົມກ່ຽວກັບການແນະນຳນີ້.

## ການດຳເນີນການຈັດຕັ້ງປະຕິບັດ

ກອງທຶນຫລຸດຜ່ອນຄວາມທຸກຍາກ (ຫລຍ) ຈະສືບຕໍ່ຮັບຜິດຊອບໂດຍລວມສຳລັບການຈັດຕັ້ງປະຕິບັດໂຄງການຂອງ ຫລຍ 3 ແລະ ຄວາມສອດຄ່ອງທາງດ້ານການປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ. ສະເພາະພະແນກພັດ ທະນາຊຸມຊົນ (CD) ມີພະນັກງານຂອງຕົນຢູ່ຂັ້ນສູນກາງລົງໄປຮອດຂັ້ນເມືອງ ແລະ ຮັບຜິດຊອບເປັນຜູ້ພັກດັນໃຫ້ເກີດຂະບວນການມີສ່ວນຮ່ວມ ລວມທັງການຈັດເວທີປຶກສາຫາລື ໂດຍການເຂົ້າຮ່ວມຂອງຊົນເຜົ່າ ຊຶ່ງຈັດຂຶ້ນໃນຂັ້ນຕອນການວາງແຜນ ແລະ ຂັ້ນຕອນການຈັດຕັ້ງປະຕິບັດໂຄງການຍ່ອຍ. ພະແນກພັດທະນາຊຸມຊົນຮັບຜິດຊອບຈັດຕັ້ງປະຕິບັດກອບວຽກການພັດທະນາຊົນເຜົ່າ (EGDF). ໃນກໍລະນີຜົນກະທົບທາງລົບອາດຈະເກີດຂຶ້ນ, ທີມງານພັດທະນາຊຸມຊົນຈະຕ້ອງປະສານສົມທົບທີມງານວິຊາການ ແລະ ຊອກຫາວິທີທາງເພື່ອຫຼີກລ້ຽງ, ຫລຸດຜ່ອນ ແລະ ບັນເທົາຜົນກະທົບທາງລົບເຫລົ່ານັ້ນ. ຫລຍ ໄດ້ພະຍາຍາມຮັບສະໝັກພະນັກງານຊົນເຜົ່າ ແລະ ລະດົມເອົາຜູ້ປະສານງານກຸ່ມບ້ານຈາກກຸ່ມຊົນເຜົ່າທີ່ກ່ຽວຂ້ອງ ທີ່ມີຄວາມສາມາດໃນການສື່ສານກັບຜູ້ໄດ້ຮັບຜົນປະໂຫຍດ ໃນພາສາຂອງຕົນເອງ ແລະ ສະໜັບສະໜູນການມີສ່ວນຮ່ວມໃນການວາງແຜນ ແລະ ຈັດຕັ້ງປະຕິບັດໂຄງການ.

ຢູ່ໃນຂັ້ນບ້ານ, ທີມງານຈັດຕັ້ງປະຕິບັດຂັ້ນບ້ານ (VIT) ແມ່ນຜູ້ຕາງໜ້າໃຫ້ຊຸມຊົນຜູ້ໄດ້ຮັບຜົນປະໂຫຍດ ໂດຍມີຄວາມຮັບຜິດຊອບໃນການເບິ່ງບັນຫາທາງດ້ານມາດຕະການໃນການປ້ອງກັນຜົນກະທົບ. ທີມງານຈັດຕັ້ງປະຕິບັດຂັ້ນບ້ານທີ່ຖືກເລືອກໂດຍຊຸມຊົນເອງ ແລະ ຕົວແທນຈາກແນວໂຮມ ແລະ ສະຫະພັນແມ່ຍິງບ້ານ. ການຕັດສິນໃຈໃດໆທີ່ກ່ຽວຂ້ອງກັບການນຳໃຊ້ຊັບພະຍາກອນຂອງໂຄງການແມ່ນຕ້ອງໄດ້ຜ່ານການຈັດກອງປະຊຸມເປີດກວ້າງຂອງຊຸມຊົນ.
ຄວາມພະຍາຍາມດັ່ງກ່າວນີ້ໄດ້ຖືກຈັດຕັ້ງປະຕິບັດໃນລະຫວ່າງການຈັດຕັ້ງປະຕິບັດໂຄງການ ຫລຍ 2 ເພື່ອເພີ່ມການມີສ່ວນຮ່ວມຂອງກຸ່ມຊົນເຜົ່າ ຜູ້ເຊິ່ງອາດບໍ່ໄດ້ອາໃສຢູ່ໃນບ້ານໃຫ່ຍໆ ຢູ່ໃນຂະບວນການຕັດສິນໃຈນັ້ນຕ້ອງໄດ້ຈັດກອງປະຊຸມສະເພາະກຸ່ມຍ່ອຍກັບພວກເຂົາກ່ອນຈະເຂົ້າຮ່ວມກອງປະຊຸມເປີດກວ້າງຂອງບ້ານ, ຈາກນັ້ນການຕັດສິນໃຈຂອງຊຸມຊົນແບບເປີດກວ້າງໄດ້ຖືກຈັດຂຶ້ນ. ພະນັກງານຈາກພະແນກຊຸມຊົນ ແລະ ພະແນກວິຊາການຂອງ ຫລຍ ຈະໄດ້ພົບປະກັບຄົວເຮືອນທີ່ໄດ້ຮັບຜົນກະທົບເປັນການສ່ວນຕົວ ແລະ ຢືນຢັນການປະກອບສ່ວນຊັບສິນຂອງເຂົາເຈົ້າ. ຊົນເຜົ່າຜູ້ທີ່ໄດ້ຮັບຜົນກະທົບ ແມ່ນຈະຖືກຊຸກຍູ້ໃຫ້ລາຍງານຫາຜູ້ຕາງໜ້າແນວໂຮມ ແລະ ແມ່ຍິງບ້ານ. ພະນັກງານພັດທະນາຊຸມຊົນຈະປະສານງານຢ່າງໃກ້ຊິດກັບແນວໂຮມ ແລະ ສະຫະພັນແມ່ຍິງບ້ານ ຜ່ານທີມງານຈັດຕັ້ງປະຕິບັດຂັ້ນບ້ານທີ່ເຂົ້າເຈົ້າເປັນສະມາຊິກຢູ່.

ຢູ່ໃນລະດັບກຸ່ມບ້ານ,ຜູ້ປະສານງານກຸ່ມບ້ານຈະຊ່ວຍອຳນວຍຄວາມສະດວກໃນການຈັດກອງປະຊຸມໃນຂັ້ນຊຸມຊົນ ແລະ ໄກ່ເກ່ຍລະຫວ່າງພະນັກງານ ຫລຍ ຂັ້ນເມືອງ ແລະ ຊຸມຊົນ. ຄວາມຮັບຜິດຊອບຂອງພວກເຂົາລວມມີການຢືນຢັນວ່າຂັ້ນຕອນໃນການດຳເນີນການປະກອບສ່ວນແບບສະໝັກໃຈແມ່ນໄດ້ສຳເລັດກ່ອນການເລີ້ມຕົ້ນໂຄງການ.
ພວກເຂົາມີສິດທີ່ຈະລາຍງານໃຫ້ ຫລຍ ເມືອງຊາບ ເພື່ອໂຈະ ຫຼື ເລື່ອນວຽກງານກໍ່ສ້າງ ຖ້າຫາກວ່າຂັ້ນຕອນປະກອບສ່ວນແບບສະໝັກໃຈຍັງບໍ່ໄດ້ເຮັດສຳເລັດດັ່ງທີ່ລະບຸໄວ້ໃນກອບນະໂຍບາຍການທົດແທນຄືນ ແລະ ການຍົກຍ້າຍຖິ່ນຖານ.

# ໂຄງຮ່າງການຈັດຕັ້ງຂອງກອງທຶນຫລຸດຜ່ອນຄວາມທຸກຍາກ



## ພາກທີ III: ການປະເມີນຜົນທາງສັງຄົມ (SA) ແລະ ຜົນການປະເມີນ, ການປຶກສາຫາລື ແລະ ການແຈ້ງໃຫ້ຊາບ.

ການປະເມີນຜົນທາງສັງຄົມ (SA)ໄດ້ດໍາເນີນໃນລະຫວ່າງການກະກຽມຄວາມພ້ອມສໍາລັບ ທລຍ ໄລຍະ 3, ໂດຍນໍາໃຊ້ວິທີການປະເມີນແບບມີສ່ວນຮ່ວມ ເພື່ອໄຈ້ແຍກເບິ່ງວ່າບັນຫາທີ່ເກີດຂຶ້ນໃນລະຫວ່າງການຈັດຕັ້ງປະຕິບັດໂຄງການ ທລຍ ໄລຍະ 2 ນັ້ນ ໄດ້ຍົກເອົາມາປຶກສາຫາລື ແລະ ມີສ່ວນຮ່ວມຈາກແມ່ຍິງ ແລະ ກຸ່ມຊົນເຜົ່າ ໃນຂະບວນການວາງແຜນໂຄງການ ແລະ ຂະບວນການຈັດຕັ້ງປະຕິບັດໂຄງການ ແລະ ໃນນັ້ນເຂົາເຈົ້າໄດ້ຮັບຜົນປະໂຫຍດຈາກໂຄງການ ໃນລັກສະນະທີ່ເໝາະສົມ ແລະ ສອດຄ່ອງກັບວັດທະນະທໍາບໍ່.ການປະເມີນຜົນດັ່ງກ່າວນໍາໃຊ້ການປຶກສາໂດຍກົງກັບຊົນເຜົ່າ ແລະ ມີການສົນທະນາພາຍໃນກຸ່ມເປົ້າໝາຍ ໂດຍໄດ້ຮັບການອໍານວຍຄວາມສະດວກຈາກຜູ້ປະສານງານກຸ່ມບ້ານທີ່ຜ່ານການເຝິກອົບຮົມມາແລ້ວ ພາຍໃນບ້ານເຂົາເຈົ້າເອງເພື່ອຊອກຫາວິໄສທັດຂອງເຂົາເຈົ້າທີ່ມີຕໍ່ໂຄງການ.

### ກຸ່ມຊົນເຜົ່າໃນຂອບເຂດພື້ນທີ່ເປົ້າໝາຍໂຄງການ

ທລຍ 3 ຈະຈັດຕັ້ງປະຕິບັດຢູ່ໃນ 10 ແຂວງ ເຊິ່ງເປັນທີ່ຢູ່ອາໄສຂອງຫຼາຍຊົນເຜົ່າ - ເກືອບທັງໝົດກຸ່ມທີ່ມີພາສາເປັນຂອງຕົນເອງໃນ ສປປ ລາວແມ່ນອາໄສຢູ່ບາງແຂວງໃນ 10 ແຂວງຂອງໂຄງການ. ເຖິງວ່າຈໍານວນຈະແຕກຕ່າງກັນ, ຜູ້ຊ່ຽວຊານເກືອບໝົດທຸກຄົນເຫັນດີຕໍ່ການຈັດປະເພດເຊັ່ນ: ໃນນັ້ນມີ 4ໝວດຊົນເຜົ່າຕົ້ນຕໍທີ່ມີພາສາເປັນຂອງຕົນເອງ ລວມມີຊົນເຜົ່າ ລາວ-ໄຕ ເປັນຊົນເຜົ່າສ່ວນໃຫຍ່ກວມເອົາ 65% ຂອງພົນລະເມືອງ. ທັງສີ່ກຸ່ມຊົຍເຜົ່ານີ້ຍັງຖືກແບ່ງອອກເປັນ 49 ກຸ່ມຍ່ອຍ ແລະ ມີຢູ່ປະມານ 200 ກຸ່ມນ້ອຍ (ເບິ່ງຕາຕະລາງ 1 ເພື່ອຜົນສະຫຼູບຂອງລັກສະນະພິເສດສະເພາະທີ່ກ່ຽວກັບສີ່ກຸ່ມຊົນເຜົ່າທີ່ມີພາສາເປັນຂອງຕົນເອງນີ້)

**ຕາຕະລາງ 1: ປະຊາກອນຂອງຊົນເຜົ່າ[4]**

| ຊົນເຜົ່າ | ພາສາທີ່ໃຊ້ | ສັງລວມລັກສະນະສະເພາະ |
|---|---|---|
| ໄຕ ກະໄດ | ລາວຜູ້ໄຕ | 65% ຂອງພົນລະເມືອງ, ອາໃສຢູ່ໃນເຂດເສດຖະກິດທີ່ຖືກຄົ້ນຕາມແລວເສດຖະກິດແມ່ນໍ້າຂອງ ຕາມຊາຍແດນໄທ ຫຼື ເຂດທົ່ງພຽງພາກເໜືອ; ທາການປູກຝັງ ຫຼື ອາໃສຢູ່ຕາມຕົວເມືອງ, ອົບພະຍົບເຂົ້າມາໃນ ສປປ ລາວຕັ້ງແຕ່ສັດຕະວັດທີ 13, ຖືສາດສະໜາພຸດ |
| ຊົນເຜົ່າອາຊີ | ມອນຂະແມ | 24% ຂອງພົນລະເມືອງ, ສ່ວນຫລາຍອາໃສຢູ່ຕາມເຂດພູສູງໃນພາກເໜືອ ແລະ ພາກກາງຕອນໃຕ້, ກຸ່ມທີ່ນ້ອຍກວ່າ (ເຜົ່າຂະມຸ) ອາໃສຕາມທົ່ງພຽງທາງພາກເໜືອເຊັ່ນກັນ, ເປັນຊົນເຜົ່າທີ່ມີຄວາມຫຼາກຫຼາຍທີ່ສຸດ ແລະ ເປັນເຜົ່າທໍາອິດດໍາລົງຊີວິດຢູ່ພື້ນທີ່ສ່ວນໃຫຍ່ຂອງ ສປປ ລາວ, ເຊື່ອຖືຜີ ແລະ ທໍາການກະສິກໍາແບບເລື່ອນລອຍ, ຄ້າຍຄືເຜົ່າລາວໄຕເນື່ອງຈາກມີການຕິດຕໍ່ພົວພັນເປັນເວລາຫຼາຍຮ້ອຍປີ, ອາໃສໃນຊຸມຊົນໂດດດ່ຽວ ເພື່ອການລ້າສັດລວມໝູ່. |
| ມົ້ງ-ມຽງ | ມົ້ງ ຢ້າວ | 8% ຂອງພົນລະເມືອງ, ອາໃສຢູ່ຕາມເຂດພູສູງ ແລະ ເຄິ່ງພູສູງໃນພາກເໜືອ; ຊົນເຜົ່າມົ້ງແບ່ງເປັນກຸ່ມຍ່ອຍທີ່ຫລາຍທີ່ສຸດ; ເຊື່ອຖືຜີພ້ອມທັງການບູຊາບັນພະບູລຸດທີ່ເຄັ່ງຄັດ, ເຖິງວ່າຫຼາຍຄົນໄດ້ປ່ຽນມາຖືສາດສະໜາຄິດຕຽນ, ເຮັດການປູກຝັງແບບເຄື່ອນຍ້າຍ, ອົບ |

[4]ສາທາລະນະລັດປະຊາທິປະໄຕປະຊາຊົນລາວ: ໂຄງການພັດທະນາຊີວິດການເປັນຢູ່ແບບຍືນຍົງໃນເຂດພາກເໜືອ, ແຜນການພັດທະນາຊົນພື້ນເມືອງ, ເອກະສານ: ໂຄງການໄລຍະສຸດທ້າຍ: 35297, ເດືອນ ສິງຫາ ປີ2006, ໂດຍລັດຖະບານແຫ່ງ ສປປ ລາວ ສໍາລັບ ທະນາຄານພັດທະນາອາຊີ,ໜ້າ 5 ແລະ *NSC/CPI, ADB, SIDA and the World Bank, 2006*

| | | |
|---|---|---|
| | | ພະຍົບເຂົ້າມາ ສປປ ລາວໃນສັດຕະວັດທີ 19. |
| ຈີນ-ຕິເບ | ຕິເບ ພະມ້າ | 3% ຂອງພົນລະເມືອງ, ອາໃສຢູ່ມາເຂດທຸລະກັນການຕິດກັບເຂດພູສູງໃນພາກເໜືອ, ເຊື່ອຖືຜີ ແລະ ທຳການປູກຝັງແບບເຄື່ອນຍ້າຍ, ອົບພະຍົບເຂົ້າລາວໃນສັດຕະວັດທີ 19 |

ຄວາມທຸກຍາກຂອງຊົນເຜົ່າໃນ ສ ປປ ລາວ ຍັງຄົງທ້ອນໂຮມຢູ່ເຂດພູສູງທີ່ຫ່າງໄກສອກຫລີກ ສ່ວນຫຼາຍແມ່ນຊົນເຜົ່າ. ຍິ່ງໄປກວ່ານັ້ນ, ຍັງມີຄວາມແຕກຕ່າງຂອງວັດທະນະທຳ ແລະ ພາສາ ຍັງຢ່າງຫຼວງຫຼາຍໃນຫຼາຍຊຸມຊົນຊົນເຜົ່າເຫລົ່ານີ້. ຄວາມຈິງແລ້ວທີ່ຕັ້ງທີ່ທຸລະກັນດານຂອງເຂົາເຈົ້າ ຊົນເຜົ່າເຫຼົ່ານີ້ບໍ່ສາມາດເຂົ້າເຖິງການບໍລິການຂອງລັດຖະບານໄດ້ດີເທົ່າທີ່ຄວນ. ເມື່ອເປັນດັ່ງນັ້ນ, ການປະສົບກັບຄວາມທຸກຍາກທີ່ສູງ ເຮັດໃຫ້ເຂົາເຈົ້າມີຄວາມດ້ອຍໂອກາດທາງດ້ານສັງຄົມ ແລະ ເສດຖະກິດ. ຍິ່ງໄປກວ່ານັ້ນ, ເຖິງແມ່ນວ່າໄດ້ມີການວິເຄາະດ້ານປະລິມານຂອງການສຳຫຼວດລາຍຈ່າຍ ແລະ ການບໍລິໂພກຂອງລາວ (LECS) ທີ່ສະແດງໃຫ້ເຫັນວ່າຄວາມທຸກຍາກໄດ້ຫລຸດລົງຈາກ 39% ໃນສົກປີ 1997-98 ລົງເປັນ 27.6 ເປີເຊັນ ໃນສົກປີ 2007-08, ຄວາມແຕກຕ່າງຂອງພາກພື້ນໂດຍລວມ ແລະ ຊົນເຜົ່າກໍ່ຍັງມີຢູ່. ຄວາມທຸກຍາກໃນຊົນນະບົດຢູ່ໃນອັດຕາ 38% ມັນສູງກວ່າຄວາມທຸກຍາກໃນຕົວເມືອງ (ທີ່ຢູ່ໃນອັດຕາ 20%), ແລະ ຊົນເຜົ່າສ່ວນໃຫຍ່ ລາວ-ໄຕມີຄວາມທຸກໃນລະດັບ 19% ໃນຂະນະທີ່ເຜົ່າມອນ-ຂະແມ ຕົວເລກສູງເປັນສອງເທົ່າໃນອັດຕາ 47%.[5]

**ຕາຕະລາງ 2: ຮູບການຄວາມທຸກຍາກຂອງບັນດາຊົນເຜົ່າໃນ ສ ປປ ລາວ, 2007/8**

| | **% ພົນລະເມືອງ** | **ອັດຕາຄົນທຸກຍາກ (%) ຕໍ່ປະຊາກອນທັງໝົດໃນປະເທດ** |
|---|---|---|
| ພົນລະເມືອງທັງໝົດ | **100.0** | **27.6** |
| **ແບ່ງຕາມເຂດພູມມິສາດ** | | |
| ຕົວເມືອງ | **31.1** | **19.7** |
| ຊົນນະບົດ | **69.0** | **37.6** |
| ຊົນນະບົດທີ່ມີຖະໜົນຕະຫຼອດລະດູການ | 53.4 | |
| ຊົນນະບົດທີ່ບໍ່ມີຖະໜົນຕະຫຼອດລະດູການ | 46.6 | |
| **ແບ່ງຕາມຊົນເຜົ່າ** | | |
| ລາວ-ໄຕ | **65** | **19** |
| ມອນ-ຂະແມ | **24** | **47** |
| ມົ້ງ-ລື້ ມຽງ | **8** | **43** |
| ຈີນ-ຕິເບ | **3** | 42 |

*ແຫຼ່ງຂໍ້ມູນ: ທະນາຄານໂລກ 2008 ອີງຕາມ LECS4*

**ສິ່ງທ້າທາຍທີ່ກຸ່ມຊົນເຜົ່າທີ່ດ້ອຍໂອກາດປະເຊີນຢູ່**

ສິ່ງທ້າທາຍທີ່ຊົນເຜົ່າທີ່ດ້ອຍໂອກາດປະເຊີນຢູ່ໃນຂອບເຂດໂຄງການ ແມ່ນມີຄວາມຄ້າຍຄືກັນກັບສິ່ງທ້າທາຍທີ່ຊົນເຜົ່າທົ່ວໄປປະເຊີນຢູ່ ແລະ ສາມາດແບ່ງເປັນ 3 ດ້ານ. ດ້ານທີໜຶ່ງ ແມ່ນກ່ຽວຂ້ອງກັບການຍົກຍ້າຍທີ່ມີຂຶ້ນໃນເຂດພູສູງ. ທີ່ຈິງແລ້ວ, ເສດຖະກິດການຕະຫຼາດ, ການປ່ຽນແປງທີ່ເກີດຂຶ້ນໃນຂັ້ນບ້ານ (ຕົວຢ່າງການລວມບ້ານ) ແລະ ບັນຫາທີ່ກ່ຽວກັບການນຳໃຊ້ທີ່ດິນ, ແມ່ນມີຜົນໂດຍກົງຕໍ່ຊີວິດການເປັນຢູ່ ແລະ ຄຸນນະພາບຊີວິດຂອງຊົນເຜົ່າ ແລະ ເຮັດໃຫ້

[5] LECS4, 2009/2008

ເພີ່ມຄວາມດ້ອຍໂອກາດໃຫ້ແກ່ຊົນເຜົ່າ. ຄວາມຈິງແລ້ວປາກົດວ່າຊົນເຜົ່າ ອາດບໍ່ສາມາດນຳໃຊ້ໂອກາດທັງໝົດຂອງເສດຖະກິດການຕະຫຼາດເຊິ່ງແມ່ຍິງເປັນຜູ້ທີ່ບໍ່ມີຄວາມສາມາດທີ່ສຸດ. ດ້ານທີສອງ ການປ່ຽນແປງຂອງສະຖາບັນເຊັ່ນການແຕ່ງຕັ້ງຄະນະພັດທະນາບ້ານກຸ່ມບ້ານບ້ານ ແລະ ຄະນະອຳນາດການປົກຄອງບ້ານໃນບ້ານທີ່ມີການເຕົ້າໂຮມ ຊຶ່ງເປັນການຕອບສະໜອງ ຕໍ່ນະໂຍບາຍຂອງຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ ແລະນະໂຍບາຍການກະຈາຍອຳນາດລົງສູ່ຮາກຖານຂອງລັດຖະບານ ທີ່ເອີ້ນວ່າ "ສາມສ້າງ". ຜົນກະທົບບົ່ມຊ້ອນຕໍ່ກຸ່ມຊົນເຜົ່າຄືດັ່ງທີ່ສະແດງໃຫ້ເຫັນຄວາມຫຍຸ້ງຍາກຂອງຊົນເຜົ່າ ໃນການເຂົ້າເຖິງຂໍ້ມູນຂ່າວສານ ແລະ ການເປັນຕົວແທນໃນການຕັດສິນໃຈ; ສະນັ້ນ ການປະກອບສ່ວນໃນການໂອ້ລົມເຈລະຈາ ຈຶ່ງບໍ່ມີຄວາມສົມດຸນ. ໃນທີ່ທ້າຍ ການປ່ຽນແປງທີ່ກ່າວມາຂ້າງເທິງນັ້ນ ກໍ່ອາດສົ່ງຜົນກະທົບຕໍ່ດ້ານບົດບາດຍິງຊາຍ ເຊິ່ງອາດນຳໄປສູ່ຊ່ອງຫວ່າງຄວາມແຕກຕ່າງທີ່ຄົງຄ້າງລະຫວ່າງຊາຍ ແລະ ຍິງ, ໂດຍສະເພາະແມ່ນສິ່ງທີ່ຂຶ້ນກັບຊົນເຜົ່າ.

## ປະສົບການໃນການຈັດຕັ້ງປະຕິບັດວຽກງານ ທລຍ 2

ປະສົບການທີ່ຜ່ານມາຂອງໂຄງການ ໄດ້ຢັ້ງຢືນວ່າ ຢູ່ໃນບ້ານເປົ້າໝາຍຂອງໂຄງການ ປະກອບມີຫລາຍຊົນເຜົ່າ. ເຊິ່ງສາມາດເຫັນໄດ້ຕາຕະລາງທີ 4 ດັ່ງຂ້າງລຸ່ມນີ້, ມີຊົນເຜົ່າຈຳນວນຫຼາຍ ຢູ່ໃນບັນດາແຂວງທີ່ກອງທຶນລຸດຜ່ອນຄວາມທຸກຍາກກຳລັງເຮັດວຽກຢູ່. ທີ່ຈິງແລ້ວ ປະມານ 72% ຂອງຜູ້ຢູ່ອາໃສໃນບ້ານເປົ້າໝາຍຂອງໂຄງການ ແມ່ນຊົນເຜົ່າທີ່ບໍ່ແມ່ນກຸ່ມຊົນເຜົ່າເຜົ່າ ລາວ-ໄຕ ແລະ ຈຳນວນຜູ້ໄດ້ຮັບຜົນປະໂຫຍດໂດຍກົງມີຢູ່ 500,000 ຄົນ. ຊົນເຜົ່າເຫລົ່ານີ້ແມ່ນໜຶ່ງໃນຜູ້ຈະຮັບຜົນປະໂຫຍດ ແລະ ໄດ້ຮັບການປຶກສາ ແລະ ເຂົ້າຮ່ວມໃນຂະບວນການວາງແຜນ ແລະ ປະຕິບັດໂຄງການ. ການຕັດສິນໃຈໃນການນາໃຊ້ເງິນທຶນແມ່ນມາຈາກຊາວບ້ານເອງ, ໂດຍຜ່ານຂະບວນການເຈລະຈາ ແລະ ຂໍ້ມູນຈາກຜູ້ປະສານງານກຸ່ມບ້ານ ແລະ ນັກວິຊາການຂອງກອງທຶນຫລຸດຜ່ອນຄວາມທຸກຍາກ.

**ຕາຕະລາງ 3: ການແຈກຢາຍຊົນເຜົ່າຢູ່ໃນພື້ນທີ່ເປົ້າໝາຍຂອງ ທລຍ**

| ແຂວງ | ຈ/ນ ຊົນເຜົ່າ | ຊົນເຜົ່າຢູ່ໃນໝູ່ບ້ານໂຄງການຂອງກອງທຶກລຸກຜ່ອນຄວາມທຸກຍາກ |
|---|---|---|
| ຜົ້ງສາລີ | 9 | ບິດ, ເອີປາ, ຂະມຸ, ອາຄ່າ, ສີລາ (ລາວເຊີງ), ມົ້ງ, ໂອມາ, ຜູ້ນ້ອຍ, ພົງຊັດ |
| ຫຼວງນ້ຳທາ | 5 | ຂະມຸ, ອາຄ່າ, ລາຮູ (ຂວຍຫຼວງ ຫຼື ມູເຊີແດງ), ລະເມັດ, ລາຮູ |
| ອຸດົມໄຊ | 4 | ຫໍ້, ຂະມຸ, ມົ້ງ, ຊີງສີລີ |
| ຫຼວງພະບາງ | 2 | ຂະມຸ, ມົ້ງ |
| ຫົວພັນ | 8 | ຂະມຸ, ມົ້ງ, ມວຍ, ມຣວຍ, ພ້ອງ, ປວກ, ຢ້າວ |
| ຊຽງຂວາງ | 3 | ຂະມຸ, ມົ້ງ, ຜົງ |
| ສະຫວັນນະເຂດ | 4 | ມັງກອງ (ບຣູ), ປາໂກ, ໂອ້ຍ, ຕຣີ |
| ສາລະວັນ | 5 | ມັງກອງ ກາຕູ, ກາໄນ, ປະໂກ, ໂອ້ຍ |
| ເຊກອງ | 11 | ຣາລັກ, ຈາຕົງ, ກາຕຸ, ແກະ, ລາວີ, ແຢ, ໂອຍ, ແຈ້ວ, ຈຽງ, ຈີ, ແງ້ |
| ອັດຕະປື | 14 | ລາວີ, ໂລຍ, ເຈັງ, ຈຽງ,ໂອຍ, ແຢ, ອາລັກ, ຊູ /ກຸ, ຕັງແກ, ນາເຫີນ (ເຫີນ), ໂອຍ, ກະຕາງ, ຊະດາງ, ຮູ, ຂະມຸ |

*ແຫຼ່ງຂໍ້ມູນ: PMT, 2015*

ການປະເມີນຜົນການປ້ອງກັນກັນຜົນກະທົບທາງດ້ານສັງຄົມແມ່ນບໍ່ພົບເຫັນບັນຫາທີ່ເປັນຜົນກະທົບທາງລົບທີ່ມີຕໍ່ກຸ່ມຊົນເຜົ່າພາຍໃຕ້ການຈັດຕັ້ງປະຕິບັດວຽກງານ ທລຍ 2 ແຕ່ຢ່າງໃດ. ການສູນເສຍຊັບສິນເປັນສ່ວນໜ້ອຍທີ່ເກີດ

ຂຶ້ນ ແມ່ນໄດ້ຮັບການແກ້ໄຂໃຫ້ຜູ້ໄດ້ຮັບຜົນກະທົບໂດຍສອດຄ່ອງກັບລະບຽບຫລັກການຂອງກອບນະໂຍບາຍການທົດແທນຄືນ ແລະ ຍົກຍ້າຍຖິ່ນຖານ (CRPF) ໃນ ທລຍ 2, ນອກຈາກນີ້ຍັງພົບວ່າ ທລຍ ໄດ້ມີການປັບປຸງຄຸນນະພາບຂອງການປຶກສາຫາລືຮ່ວມກັບ ແລະ ມີສ່ວນຮ່ວມຂອງກຸ່ມຊົນເຜົ່າ ໃນຂະບວນການຈັດຕັ້ງປະຕິບັດໂຄງການຍ່ອຍ ໂດຍຜ່ອນແຕ່ລະຂັ້ນຕອນດັ່ງລຸ່ມນີ້:

- ສ້າງຄວາມເຂັ້ມແຂງໃນຂະບວນການແບບມີສ່ວນຮ່ວມ ໄດ້ອະທິບາຍພາຍໃຕ້ຮູບແບບ 'ການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເອງແບບເຕັມຮູບແບບ' ຊຶ່ງລວມມີ: (1) ການແຕ້ມແຜນວາດທາງສັງຄົມ, ແລະ ອະທິບາຍຂໍ້ມູນພື້ນຖານຂອງບ້ານ, ລວມທັງຂໍ້ມູນຄວາມແຕກຕ່າງຂອງແຕ່ລະກຸ່ມຊົນເຜົ່າທີ່ອາໃສຢູ່ພາຍໃນບ້ານດຽວກັນ, ການຢູ່ຮ່ວມກັນ ແລະ ລະດັບຄວາມທຸກຍາກຂອງກຸ່ມຊົນເຜົ່າ; (2) ຊຸມຊົນປະຊຸມດ້ວຍກຸ່ມທີ່ນ້ອຍກວ່າ ແລະ ແຍກປະຊຸມຕ່າງຫາກໃນແຕ່ລະບ້ານນ້ອຍ (ຄຸ້ມບ້ານ) ຊຶ່ງເປັນບ້ານທີ່ກຸ່ມຊົນເຜົ່າອາໃສຢູ່; (3) ປັບປຸງຊຸດເຄື່ອງມືກະຈາຍຂໍ້ມູນຂ່າວສານ ການສຶກສາ ແລະ ປະຊາສຳພັນ (IEC)ເພື່ອເພີ່ມທະວີຄວາມເຂົ້າໃຈໃຫ້ແກ່ກຸ່ມຊົນເຜົ່າກ່ຽວກັບ ຂໍ້ແນະນຳ, ລະບຽບຫລັກການຂອງໂຄງການ ແລະ ການປ້ອງກັນຜົນກະທົບ, ຂະບວນການ, ຂັ້ນຕອນ ແລະ ການຊົດເຊີຍຄືນ; (4) ການຈັດລະດັບຄວາມທຸກຍາກແບບມີສ່ວນຮ່ວມ ແລະ ພື້ນຖານການຜະລິດຂອງຜູ້ໄດ້ຮັບຜົນປະໂຫຍດ ເພື່ອໄຈ້ແຍກກຸ່ມຊົນເຜົ່າທີ່ທຸກຍາກ ແລະ ໃຫ້ໝັ້ນໃຈວ່າ ເຂົາເຈົ້າໄດ້ຮັບຜົນປະໂຍດຈາກໂຄງການຍ່ອຍ,
- ເພີ່ມຈຳນວນຜູ້ປະສານງານກຸ່ມບ້ານຍິງເຂົ້າຕື່ມ, ຄັດເລືອກເອົາຈາກກຸ່ມຊົນເຜົ່າທ້ອງຖິ່ນ ໃນທຸກໆກຸ່ມບ້ານ ເພື່ອໃຫ້ມີສ່ວນຮ່ວມໃນກອງປະຊຸມກັບຊຸມຊົນ ແລະ ອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດໂຄງການ;
- ຄວາມຕ້ອງການພະນັກງານ ທລຍ ໃນຂັ້ນເມືອງຢ່າງໜ້ອຍໜຶ່ງຄົນທີ່ພົບວ່າມີຄວາມຄ່ອງແຄ້ວທາງພາສາຊົດເຜົ່າທີ່ໃຊ້ຢູ່ໃນເມືອງດັ່ງກ່າວ, ແນະນຳຜູ້ສະໝັກເຖິງຄວາມຕ້ອງການຈາກຊົນເຜົ່າ ປ່ຽນແທນພະນັກງານທີ່ຢູ່ກ່ອນແລ້ວ ແລະ 40 % ຂອງຈຳນວນພະນັກງານໃໝ່ທີ່ຮັບເຂົ້າເຮັດວຽກກັບ ທລຍ ຈະຕ້ອງແມ່ນຍິງ;

ອີງຕາມໂຕຈິງ, ພະນັກງານຍິງ ທລຍ ປະຈຳປີຮອບວຽນ 12 ເພີ່ມຂຶ້ນ 29% ແລະ ປະຈຳປີຮອບວຽນ 13 ເພີ່ມຂຶ້ນເຖິງ 33%. ຍິ່ງໄປກວ່ານັ້ນປະມານ 70% ຂອງຜູ້ປະສານງານກຸ່ມບ້ານໃນປະຈຸບັນແມ່ນມາຈາກກຸ່ມຊົນເຜົ່າ ແລະ ອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດໂຄງການຍ່ອຍໃນພສາຊົນເຜົ່າທ້ອງຖິ່ນທີ່ກ່ຽວຂ້ອງ ຊຶ່ງໄດ້ປັບປຸງຄຸນນະພາບຂອງການມີສ່ວນຮ່ວມ ແລະ ລະດັບຄວາມເຂົ້າໃຈຂອງບັນດາກຸ່ມຊົນເຜົ່າໃນຂະບວນການການຈັດຕັ້ງປະຕິບັດໂຄງການຍ່ອຍ. ໂດຍລວມແລ້ວ, ການມີສ່ວນຮ່ວມເຫັນວ່າ ການມີສ່ວນຮ່ວມຂອງກຸ່ມຊົນເຜົ່າໃນຂະບວນການວາງແຜນແມ່ນມີເພີ່ມຂຶ້ນຈາກ 55% ເຖິງ 91%.

ນອກຈາກນັ້ນ, ການປະເມີນວຽກງານປ້ອງກັນຜົນກະທົບທາງສັງຄົມຍັງພົບວ່າ ຮູບແບບການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນແບບເຕັມຮູບແບບ ມີຜົນໄດ້ຮັບໃນລະດັບສູງຫລາຍຂອງການມີສ່ວນຮ່ວມທາງສັງຄົມຂອງແມ່ຍິງ, ໂດຍສະເພາະແມ່ນ ຢູ່ໃນຄວາມຕ້ອງການຂອງການກຳນົດບູລິມະສິດ ແລະ ຂະບວນການຕັດສິນໃຈ ໃນຂັ້ນຕອນການວາງແຜນ ຂອງຮອບວຽນໂຄງການ. ການປຶກສາຫາລືໂດຍມີສ່ວນຮ່ວມຂອງແມ່ຍິງ ຢູ່ໃນພື້ນທີ່ທົດລອງຈັດຕັ້ງປະຕິບັດການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນແບບເຕັມຮູບແບບ ພົບວ່າ ມີຄວາມສົນໃຈຫລາຍໃນການມີສ່ວນຮ່ວມໃນກອງປະຊຸມຂອງໂຄງການ, ໃນກິດຈະກຳ ແລະ ການສະແດງອອກເຖິງຄວາມເປັນເຈົ້າຂອງໂຄງການລະດັບທີ່ສູງກວ່າເອື້ອຍນ້ອງຂອງເຂົາເຈົ້າ ຜູ້ທີ່ຍັງບໍ່ຮູ້ກ່ຽວກັບ ການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນແບບເຕັມຮູບແບບ;

ໂດຍລວມແລ້ວ, ການປະເມີນວຽກງານປ້ອງກັນຜົນກະທົບທາງສັງຄົມຍັງພົບວ່າ ມີການປັບປຸງໃນຮອບວຽນການວາງແຜນການແນະນຳໃນການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນແບບເຕັມຮູບແບບໄດ້ສຳເລັດ ໃນການສ້າງຄວາມ

ໝັ້ນໃຈ ແລະ ໃຫ້ຄຳປຶກສາລ້າກ່ອນ ແລະ ແຈ້ງກັບ ແລະ ການມີສ່ວນຮ່ວມຂອງຜູ້ໄດ້ຮັບຜົນປະໂຫຍກໃນລະດັບສູງ, ໂດຍສະເພາແມ່ນ ການມີສ່ວນຮ່ວມຂອງແມ່ຍິງ ແລະ ກຸ່ມຊົນເຜົ່າ ໃນຂັ້ນຕອງການຕັດສິນໃຈ. ນອກຈາກນີ້, ວິທີການຖາມເອົາສະມາຊິກບ້ານຈຳນວນ 9ຄົນ ແລະ ໃນນັ້ນຢ່າງໜ້ອຍ 5ຄົນຕ້ອງແມ່ນແມ່ຍິງ, ແມ່ນໄດ້ຮັບການຄັດເລືອກມາເປັນທີມງານຈັດຕັ້ງປະຕິບັດຂັ້ນບ້ານ (ເມື່ອທຽບກັບຮູບແບບການພັດທະນາທົ່ວໄປແມ່ນມີແຕ່ 3ຄົນ). ດັ່ງນັ້ນ ຈຶ່ງເຮັດໃຫ້ປະຊາຊົນມາມີສ່ວນຮ່ວມໃນການປະສານງານການຈັດຕັ້ງປະຕິບັດໂຄງການຍ່ອຍໂດຍກົງ. ແນວໃດກໍ່ຕາມ, ກໍ່ຍັງຕ້ອງການຕິດຕາມກວດກາ ແລະ ຄວາມຕ້ອງການເອກະສານ ການສ້າງຄວາມເຂັ້ມແຂງໃນການມີສ່ວນຮ່ວມຂອງສັງຄົມ, ໂດຍສະເພາະແມ່ນ ໃນໄລຍະທີ່ຜ່ານມາຂອງການຈັດຕັ້ງປະຕິບັດ (ເຊັ່ນ: ການລົງຕິດຕາມຊຸກຍູ້, ອຳນວຍຄວາມສະດວກໃນກອງປະຊຸມສະຫລຸບງວດຂັ້ນບ້ານ ແລະ ອື່ນໆ).

## ຜົນກະທົບທີ່ອາດຈະເກີດຂຶ້ນພາຍໃຕ້ ທລຍ 3

ຕັ້ງແຕ່ ທລຍ 3 ຈະສືບຕໍ່ສະໜັບສະໜຸນງົບປະມານ ແລະ ກິດຈະກຳໃນຮູບແບບເກົ່າ ແລະ ຮັກສາເພດານງົບປະ ມານຊ່ວຍເຫລືອລ້າອັນເກົ່າ (ຄື: 60,000ໂດລາສະຫະລັດ), ຂະໜາດ ແລະ ຂອງເຂດຂອງຜົນກະທົບທີ່ອາດຈະເກີດຂຶ້ນ ຄາດວ່າຄ້າຍຄືກັນກັບບັນດາປະສົບການທີ່ພົບໃນ ທລຍ 2. ບໍ່ມີຜົນກະທົບທີ່ສຳຄັນ ຫລື ບໍ່ຄາດຄິດ ທີ່ອາດເກີດໃນ ທລຍ 3, ການຍົກຍ້າຍຄົວເຮືອນທາງດ້ານກາຍຍະພາບ ຫລື ທຸລະກິດທີ່ບໍ່ໄດ້ຮັບອະນຸຍາດ. ສຳລັບການກໍ່ສ້າງໂຄງການຍ່ອຍ, ການປັບປຸງ ຫລື ການຟື້ນຟູໂຄງລ່າງພື້ນຖານຂອງຊຸມຊົນ, ສິດຄອບຄອງທີ່ດິນຂະໜາດໃຫຍ່ ຫລື ສູນເສຍຊັບສິນບໍ່ໜ້າຈະເກີດຂຶ້ນ, ໃຫ້ທຶນຂະໜາດນ້ອຍໃນການລົງທຶນ (ໂດຍສະເລ່ຍ 43,000ໂດລາສະຫະລັດ) ເຖິງແມ້ວ່າສູນເສຍ ທາງດ້ານທີ່ດິນ, ຊັບສິນເລັກໆນ້ອຍໆ ແລະ/ຫລື ພືດຢືນຕົ້ນ ທີ່ອາດຈະຫລີກບໍ່ໄດ້. ກິດຈະກຳປັບປຸງຊີວິດການເປັນຢູ່ ເພື່ອຟື້ນຟູທາງດ້ານໂພສະນາການ ອາດຈະບໍ່ສົ່ງຜົນໃຫ້ສູນເສຍທີ່ດິນ ຫລື ຊັບສິນໃດໆ. ການສະໜອງອາຫານເສີມໂດຍຜ່ານສະໂມສອນໂພສະນາການບ້ານ (VNC) ແມ່ນຈະບໍ່ໄດ້ສະໜັບສະໜຸນໃນ ທລຍ 3.

ຄູ່ຮ່ວມງານກັບໂຄງການນ້ຳສະອາດ ແລະ ສຸຂະອະນາໄມ (WSP) ອາດຈະບໍ່ສົ່ງຜົນໃນການສູນເສຍທີ່ດິນ ຫລື ຊັບສິນສ່ວນບຸກຄົນໃດໆ. ທລຍ 3 ຈະອຳນວຍຄວາມສະດວກໃຫ້ປະຊາຊົນຜູ້ໄດ້ຮັບຜົນປະໂຫຍດ ກໍ່ສ້າງວິດຊຸມທີ່ງ່າຍດາຍດ້ວຍຕົວເຂົາເຈົ້າເອງ, ຖ້າເຂົາເຈົ້າເລືອກທີ່ຈະເຮັດວິດດັ່ງກ່າວນັ້ນພາຍໃນພື້ນທີ່ສ່ວນຕົວຂອງເຂົາເຈົ້າ, ທລຍ 3 ຈະບໍ່ໄດ້ສະໜັບສະໜຸນທຶນໃນການສ້າງວິດຊຸມສ່ວນບຸກຄົນ ຫລື ສາທາລະນະ. ທລຍ 3 ຈະລົງທຶນໃສ່ສະເພາະຄ່າໃຊ້ຈ່າຍຂອງຜູ້ອຳນວຍຄວາມສະດວກຊຸມຊົນ ແລະ ນາຍບ້ານໃນການມາຝຶກອົບຮົມກ່ຽວກັບສຸຂະອະນາໄມຂັ້ນພື້ນຖານ ແລະ ການອຳນວຍຄວາມສະດວກໃນການປັບປ່ຽນພຶດຕິກຳຂອງປະຊາຊົນ. ຜົນກະທົບທາງສິ່ງແວດລ້ອມທີ່ອາດໄດ້ຮັບການແກ້ໄຂໂດຍຜ່ານມາດຕະຖານທາງດ້ານສິ່ງແວດລ້ອມ (ECOP) ຊຶ່ງໄດ້ຮັບການພັດທະນາຈາກນ້ຳສະອາດ ໂດຍສອດຄ່ອງກັບນະໂຍບາຍຂອງທະນາຄານໂລກ OP 4.01. ທລຍ ອາດຈະລິເລີ່ມເປັນຄູ່ຮ່ວມງານກັບທະນາຄານໃຫ້ທຶນເຮັດເຕົາສະອາດ ຄືກັນກັບເປັນຄູ່ຮ່ວມງານກັບນ້ຳສະອາດ. ໃນກໍລະນີ ຖ້າເປັນຄູ່ຮ່ວມງານແລ້ວ, ທລຍ ອາດຈະບໍ່ສະໜັບສະໜູນທຶນຊື້ເຕົາສະອາດ ແລະ ອາດຈະໃຫ້ທຶນເປັນຄ່າໃຊ້ຈ່າຍຂອງຜູ້ອຳນວຍຄວາມສະດວກຊຸມຊົນ. ທລຍ ອາດຈະບໍ່ລິເລີ່ມເປັນຄູ່ຮ່ວມງານໃດໆກັບພາກສ່ວນອື່ນໃນລະຫວ່າງການຈັດຕັ້ງປະຕິບັດ ທລຍ 3.

ສະຫລຸບຫຍໍ້ກ່ຽວກັບ ການປະເມີນວຽກງານປ້ອງກັນຜົນກະທົບທາງສັງຄົມ ແມ່ນມີໃນເອກະສານຄັດຕິດ 2.

# ພາກທີ IV: ບັນດາຫຼັກການ ແລະ ຂັ້ນຕອນທີ່ຈະນໍາໃຊ້ໃນຢູ່ໃນ ທລຍ 3

## ຮູບແບບເພື່ອການເຂົ້າຮ່ວມຂອງທຸກຊົນເຜົ່າ

### *ຫຼັກການພື້ນຖານ:*

ທລຍ 3 ຈະສືບຕໍ່ຊອກຫາຊ່ອງທາງເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຊົນເຜົ່າ ໂດຍການເຮັດໃຫ້ເຂົາເຈົ້າ ສາມາດເຂົ້າເຖິງການສຶກສາ, ການບໍລິການສາທາລະນະສຸກ, ຖະໜົນຫົນທາງ, ເຊິ່ງຈະສົ່ງຜົນເຖິງຄຸນນະພາບຊີວິດທີ່ດີ ກວ່າເກົ່າ ແລະ ເຂົາເຈົ້າອາດໄດ້ສວຍໃຊ້ໂອກາດທີ່ແຕກຕ່າງໃນເສດຖະກິດການຕະຫຼາດ. ທລຍ 2 ໄດ້ດໍາເນີນງານ ຢູ່ເຂດຫ່າງໄກສອກຫລີກ ເຊິ່ງແມ່ນພູມລໍາເນົາຂອງຊົນເຜົ່າທີ່ຫຼາກຫຼາຍ ແລະ ທລຍ 3 ຈະສືບລົງທຶນໃສ່ໃນຂອບ ເຂດພື້ນທີ່ດັ່ງກ່າວ. ເຊັ່ນດຽວກັນນັ້ນ, ທລຍ 3 ຈະສືບຕໍ່ໃຫ້ສະໜັບສະໜູນການຝຶກອົບຮົມໂດຍເປີດໂອກາດ ໃຫ້ແກ່ກຸ່ມຊົນເຜົ່າ ເປົ້າໝາຍ. ອີງຕາມປະສົບທີ່ມີຈາກການຈັດຕັ້ງປະຕິບັດໃນ ທລຍ 2, ທລຍ 3 ຍັງແນໃສ່ຂະ ຫຍາຍໂອກາດການເຈລະ ຈາ ແລະ ການພົວພັນກັບພາກລັດຖະບານ ໃຫ້ແກ່ກຸ່ມຊົນເຜົ່າທີ່. ເຄົາລົບ ແລະ ເອົາໃຈໃສ່ຕໍ່ວັດທະນະທໍາທີ່ຫຼາກຫຼາຍ, ວິທີການອັນມຸ່ງໝັ້ນຂອງ ທລຍ ມີຄວາມຕັ້ງໃຈທີ່ຈະຕອບສະໜອງບໍ່ສະເພາະ ແຕ່ຂໍ້ມູນຂ່າວສານເທົ່ານັ້ນ, ແຕ່ຍັງຈະເພີ່ມການມີສ່ວນຮ່ວມຂອງກຸ່ມຊົນເຜົ່າ ເຂົ້າໃນຂະບວນການຈັດຕັ້ງປະຕິບັດບັນດາໂຄງການຍ່ອຍທັງໝົດ. ເມື່ອເປັນດັ່ງນັ້ນ, ຈຸດປະສົງຕົ້ນຕໍຂອງ ທລຍ 3 ທີ່ກ່ຽວກັບກຸ່ມຊົນເຜົ່າມີດັ່ງນີ້:

- ເພື່ອສ້າງຄວາມເຂັ້ມແຂງໃຫ້ຊົນເຜົ່າໃນການຮັບຜົນປະໂຫຍດຈາກການພັດທະນາດ້ວຍການສ້າງຄວາມສາມາດດ້ວຍການເພີ່ມການເຂົ້າເຖິງຂໍ້ມູນກໍ່ຄືການສົ່ງເສີມການຮ່ວມໃນການຕັດສິນໃຈ;
- ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຊົນເຜົ່າທີ່ດ້ອຍໂອກາດໃນການຊອກຫາໂອກາດໄດ້ມາຈາກໂຄງການຍ່ອຍຂອງທລຍ: ການເຂົ້າເຖິງການສຶກສາຜ່ານການກໍ່ສ້າງໂຮງຮຽນ, ເຂົ້າເຖິງໂອກາດດ້ານການຕະຫຼາດຜ່ານການພັດທະນາຖະໜົນຫົນທາງ, ເຂົ້າເຖິງການບໍລິການສາທາລະນະສຸກທີ່ດີກວ່າເກົ່າດ້ວຍການສ້າງສຸກສາລາແລະໂຄ່ງລ່າງນໍ້າສະອາດ;
- ເພື່ອສົ່ງເສີມຄວາມສະເໝີພາບຍິງຊາຍແລະເພີ່ມການມີສ່ວນຮ່ວມຂອງແມ່ຍິງໃນທຸກລະດັບຂອງການປະຕິບັດໂຄງການຍ່ອຍຂອງທລຍ;
- ສ້າງຄວາມສະໜັກໃຈແລະ ແຈ້ງໃຫ້ຊົນເຜົ່າຊາບຕັ້ງແຕ່ຕົ້ນ ກ່ຽວກັບຈຸດປະສົງແລະກິດຈະກໍາ. ໂຄງການຈະຊອກດໍາເນີນການຍຸດຕິ ການປະຕິບັດ ໃນກໍລະນີທີ່ຊຸມຊົນບໍ່ມີຄວາມຍິນຍອມ;

### *ຍຸດທະສາດການຈັດຕັ້ງປະຕິບັດ*

ຍຸດທະສາດຂ້າງລຸ່ມນີ້(ເຊິ່ງປັບເອົາມາຈາກໂຄງການຜ່ານມາ)ຈະສືບຕໍ່ນໍາໃຊ້ພາຍໃຕ້ໄລຍະເພີ້ມທຶນເພື່ອສ້າງຄວາມເຂັ້ມແຂງໃຫ້ຊົນເຜົ່າທີ່ດ້ອຍໂອກາດໃຫ້ສອດຄ່ອງກັບນະໂຍບາຍທີ່ກ່າວມາຂ້າງເທິງນັ້ນແລະຄູ່ມືການປຶກສາຫາລືຊົນເຜົ່າ:

- ສືບຕໍ່ເພີ້ມຕື່ມຜູ້ປະສານງານເພດຍິງຂັ້ນກຸ່ມບ້ານ ແຕ່ຍັງຮັກສາຂັ້ນຕອນຂອງເມືອງໄວ້; ໂດຍຜູ້ປະສານງານກຸ່ມບ້ານ ແມ່ນຊົນເຜົ່າທີ່ມາຈາກທ້ອງຖິ່ນນັ້ນ;
- ສືບຕໍ່ດໍາເນີນການແນະນໍາ ໃຫ້ຄໍາປຶກສາ ກ່ອນ ແລະ ແຈ້ງໃຫ້ກຸ່ມຜູ້ດ້ອຍໂອກາດ ທີ່ນໍາໄປສູ່ການສະໜັບສະໜູນຢ່າງກວ້າງຂວາງ ໂດຍນໍາໃຊ້ວິທີການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເອງແບບເຕັມຮູບແບບ ເຊິ່ງໄດ້ແນະນໍາຢູ່ໂຄງການ ທລຍ 2 ແລະ ອະທິບາຍຢູ່ໃນພາກຕໍ່ໄປ;

- ສືບຕໍ່ເສີມສ້າງຄວາມເຂັ້ມແຂງໃຫ້ຕົວແທນຂອງບ້ານຢູ່ຂັ້ນຄຸ້ມບ້ານຕົ້ນຕໍໃນຂະບວນການຕັດສິນໃຈ ຢູ່ໃນຂັ້ນຕອນປະຊຸມກັບບ້ານໃຫ່ຍ, ນຳໃຊ້ວິທີການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເອງ ເຊິ່ງໄດ້ແນະນຳຢູ່ໂຄງການ ທລຍ ສອງຜ່ານມາແລ້ວ ແລະ ຈະໄດ້ອະທິບາຍຢູ່ໃນພາກຕໍ່ໄປ;
- ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ຕົວແທນແມ່ຍິງໃນຂັ້ນບ້ານ ໃນຂະບວນການຈັດລ້ຽງຄວາມຕ້ອງການ ໂດຍໃຊ້ຮູບແບບ ການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນແບບເຕັມຮູບແບບ ທີ່ແນະນຳແລ້ວໃນ ທລຍ 2 ແລະ ໄດ້ອະທີ່ບານໃນພາກຕໍ່ໄປ.
- ປັບປຸງເອະກສານ ທີ່ໄດ້ຮັບຄຳຄິດຄຳເຫັນ ຈາກກຸ່ມຊົນເຜົ່າສ່ວນນ້ອຍ ກ່ຽວກັບບຸລິມະສິດທີ່ໄດ້ກຳນົດມາ, ຜົນກະທົບທາງລົບທີ່ອາດຈະເກີດຂຶ້ນຈາກໂຄງການຍ່ອຍ ແລະ ການວັດແທກກ່ຽວກັບການເຊັນສັນຍາການຮັບທຶນລະຫວ່າງຊຸມຊົນ ກັບ ທລຍ;
- ສະໜອງການເຝິກອົບຮົມໃນບັນຫາປະເຊີນຢູ່ກັບຊົນເຜົ່າ, ໂດຍສະເພາະແມ່ນແມ່ຍິງ, ບໍ່ສະເພາະພະນັກງານຂອງທລຍ ເທົ່ານັ້ນ, ແຕ່ລວມທັງທີມງານຂັ້ນກຸ່ມບ້ານ ແລະ ຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງນຳອີກ, ເພື່ອເພີ່ມຈິດສຳນຶກກ່ຽວກັບບັນຫາດັ່ງກ່າວ;
- ເພີ່ມຄວາມຮູ້ ແລະ ຄວາມເຂົ້າໃຈໃນການເປັນເຈົ້າການ ຂອງຊົນເຜົ່າໂດຍການເວົ້າ-ແລກປ່ຽນບັນຫາສຳຄັນໂດຍໃຊ້ພາສາທ້ອງຖິ່ນຂອງເຂົາເຈົ້າ;
- ຮັກສາ ແລະ ຂະຫຍາຍການຮ່ວມມືກັບອົງການຈັດຕັ້ງມະຫາຊົນ, ໂຄງການ ແລະ ພາກສ່ວນອື່ນໆ ເຂົ້າຮ່ວມ ແລະ ກອບສ່ວນ ຕໍ່ຊົນເຜົ່າກໍ່ຄືແມ່ຍິງ
- ພັດທະນາແລະຮັບເອົາເຄື່ອງມືການວາງແຜນ ແລະ ສື່ສານເຊັ່ນ: ອຸປະກອນຂໍ້ມູນຂ່າວສານ, ການສຶກສາ ແລະ ປະຊາສຳພັນ ແລະ ເຄື່ອງມືການປະເມີນຜົນການມີສ່ວນຮ່ວມຊົນນະບົດແບບການມີສ່ວນຮ່ວມ, ແຜນງານຂະໜາດນ້ອຍ) ກໍ່ຄືການລິເລີ່ມໃໝ່ໆ (ເຊັ່ນ ເກມ) ເພື່ອເພີ່ມຄວາມໝັ້ນໃຈ ແລະ ຄວາມສາມາດໃນການມີສ່ວນຮ່ວມກໍ່ຄືການຮວມຕົວຂອງຊົນເຜົ່າ ເຂົ້າໃນການເລີ່ມປະຕິບັດໂຄງການຍ່ອຍ;
- ເພີ່ມການເຂົ້າເຖິງຂໍ້ມູນຂ່າວສານຫຼືບັນຫາການພັດທະນາໂດຍທົ່ວໄປ;
- ນຳໃຊ້ຂໍ້ມູນຂອງບ້ານທີ່ໄດ້ຮັບການປັບປຸງເຊິ່ງຈະນຳໄປສູ່ການກວດການຕີລາຄາຜົນກະທົບຂອງໂຄງການຍ່ອຍຕໍ່ຊົນເຜົ່າໃຫ້ດີກວ່າເກົ່າ ກໍ່ຄືການຄົ້ນຫາຄວາມແຕກຕ່າງໃນດ້ານສ່ວນປະກອບຂອງຊົນເຜົ່າໃນທຸກລະດັບ;
- ຮັບປະກັນຄວາມເໝາະສົມ ແລະ ຄວາມສົມດຸນຂອງຜູ້ຕາງໜ້າຂອງຊົນເຜົ່າສ່ວນນ້ອຍພາຍໃນຄະນະກຳທະການພັດທະນາບ້ານກໍ່ຄື ຄະນະໄກ່ເກ່ຍ ແລະ ຄະນະກຳມະການສອບທາງສັງຄົມໃນບ້ານ ແລະ ກຸ້ມບ້ານເຊິ່ງເປັນບ່ອນທີ່ມີຫລາຍຊົນເຜົ່າ;

## ກິດຈະກຳ ແລະ ຂະບວນການທີ່ສຳຄັນ

ກິດຈະກຳລຸ່ມນີ້ໄດ້ຮັບການນຳໃຊ້ເພື່ອອຳນວຍໃຫ້ແກ່ການລວມຕົວຂອງຊົນເຜົ່າທີ່ດ້ອຍໂອກາດແລະຂະບວນການນີ້ກໍ່ໄດ້ຖືກນຳມາປັບໃຊ້.

- ເຝິກອົບຮົມພະນັກງານ, ຜູ້ປະສານງານກຸ່ມບ້ານ ໃນດ້ານສິດສະເໝີພາບຍິງຊາຍ (ເບິ່ງຄູ່ມືການເຝິກອົບຮົມ)
- ນຳໃຊ້ເອກະສານ ແລະ ຮູບພາບໃໝ່ຂອງເຄື່ອງມືກະຈາຍຂໍ້ມູນ-ຂ່າວສານທຸກເທື່ອທີ່ມີການປະຊຸມຢູ່ຂັ້ນຊຸມຊົນ;
- ເວົ້າໃຫ້ຟັງເຖິງເອກະສານໂຄງການຂອງທລຍໃນພາສາທ້ອງຖິ່ນໃຫ້ທົ່ວການປະຊຸມໃນກຸ່ມບ້ານ
- ເຮັດແຜນວາດແຫ່ງຊັບພະຍາກອນ ແລະ ປັບປຸງຂໍ້ມູນຂອງບ້ານ, ຂໍ້ມູນດ້ານຊົນເຜົ່າຕ່າງໆທີ່ອາໃສຢູ່ໃນບ້ານ ແລະ ລະດັບຄວາມທຸກຍາກ. ປັບປຸງຂໍ້ມູນປະຈຳປີ (ເບິ່ງຄູ່ມືການດຳເນີນໂຄງການ). ແຜນທີ່ງ່າຍໆທີ່ສະແດງໃຫ້ເຫັນບ່ອນທີ່ຊົນເຜົ່າອາໃສຢູ່ຢ່າງໜາແໜ້ນ;

- ສະໜອງການກໍ່ສ້າງຄວາມສາມາດໃຫ້ແກ່ຕົວແທນບ້ານ ໂດຍສະເພາະຜູ້ທີ່ເປັນຊົນເຜົ່າ (ເບິ່ງຄູ່ມືການເຝິກອົບຮົມ);
- ການຕິດຕາມກວດກາໂດຍໃຊ້ພາສາທ້ອງຖິ່ນ;
- ຈັດສຳມະນາແລະເຝິກອົບຮົມທີ່ມີຫົວຂໍ້ກ່ຽວກັບຊົນເຜົ່າ (ເບິ່ງຄູ່ມືການເຝິກອົບຮົມ);
- ຈັດທັດສະນະສຶກສາໃຫ້ແກ່ຜູ້ປະສານງານກຸ່ມບ້ານທີ່ປະຕິບັດວຽກງານຢູ່ບ່ອນທີ່ມີຊົນເຜົ່າ, ບ່ອນທີ່ຊົນເຜົ່າມີຄວາມຫຍຸ້ງຍາກ ກ່ຽວກັບວິທີການ, ການແກ້ໄຂບັນຫາທີ່ເກີດຂຶ້ນ, ດ້ານສັງຄົມ, ວິທີການເຂົ້າຫາ ແລະ ປຸກລະດົມຊົນເຜົ່າ;
- ຮຽນຮູ້ຈາກປະສົບການຈາກຕ່າງປະເທດໂດຍການໄປທັດສະນະສຶກສາ;
- ເຊື່ອມຕໍ່ກັບຄູ່ຮ່ວມງານທີ່ມີປະສົບການໃນຊົນເຜົ່າ ເຊັ່ນສະຫະພັນແມ່ຍິງລາວ, ແນວລາວສ້າງຊາດ ໃນຂົງເຂດຂອງການເຝິກອົບຮົມ, ຕິດຕາມກວດກາແລະປະເມີນຜົນ ແລະ ຂອບເຂດອື່ນໆ
- ເຂົ້າຫາຊາວໜຸ່ມໂດຍສະເພາະຈາກຊົນເຜົ່າ, ສ້າງເຄື່ອງມືສື່ສານ ສ້າງສະປອດໂຄສະນາ;
- ແລກປ່ຽນປະສົບການກັບຊົນເຜົ່າຈາກບ້ານອື່ນ;
- ຮັບເອົາພະນັກງານຜູ້ທີ່ມີຄວາມຮູ້ຄວາມສາມາດຈາກຊົນເຜົ່າລວມທັງຜູ້ທີ່ຈົບການສຶກສາຈາກມະຫາວິທະຍາໄລແຫ່ງຊາດ ແລະ ສະຖາບັນອື່ນໆ, ໂດຍສະເພາະເພດຍິງ
- ກວດກາປະເມີນຜົນການຊ່ວຍເຫຼືອຊົນເຜົ່າຂອງທລຍ. ເຊິ່ງອາດລວມການສຶກສາສະເພາະທີ່ກ່ຽວກັບຊົນເຜົ່າຈາກທີ່ປຶກສາຕາມຄວາມຕ້ອງການຂອງໂຄງການ (ເຊັ່ນ: ການສຶກສາເພື່ອກຳນົດຜົນກະທົບດ້ານລົບຕໍ່ຊົນເຜົ່າເພື່ອໃຫ້ລວມຢູ່ໃນໂຄງການ ແລະ ກຳນົດການວັກແທກເພື່ອຫຼີກເວັ້ນ, ຫຼຸດຜ່ອນແລະທົດແທນຕໍ່ຜົນເສຍຫາຍເຫຼົ່ານີ້)

ຫຼັກການພື້ນຖານຂອງທະນາຄານໂລກທີ່ກ່ຽວຂ້ອງກັບຊົນເຜົ່າແລະເຜົ່າພື້ນເມືອງແມ່ນຕັ້ງຢູ່ບົນສາມຈຸດດັ່ງຕໍ່ໄປນີ້: i) ການໃຫ້ຄຳປຶກສາເຊິ່ງປະກອບດ້ວຍ ການໃຫ້ຄຳປຶກສາທີ່ບໍ່ເສຍຄ່າ, ທັນເວລາ ແລະ ຂໍ້ມູນຄົບຖ້ວນນຳໄປສູ່ການຊ່ວຍ ເຫຼືອຊຸມຊົນຢ່າງກວ້າງຂວາງ; ii) ຊົນເຜົ່າພື້ນເມືອງຈະບໍ່ໄດ້ຮັບຄວາມທໍລະມານຈາກຜົນກະທົບໃນທາງລົບລະຫວ່າງການພັດທະນາ; ແລະ iii) ພວກເຂົາໄດ້ຮັບຜົນປະໂຫຍດທີ່ສອດຄ່ອງກັບວັດທະນະທຳສັງຄົມແລະເສດຖະກິດ.

ເພື່ອຫຼີດເວັ້ນຜົນກະທົບດ້ານລົບບາງຢ່າງຕໍ່ຊົນເຜົ່າ, ໂດຍສະເພາະແມ່ນກຸ່ມທີ່ດ້ອຍໂອກາດ, ບັນຊີລາຍຊື່ດ້ານລົບຈະໄດ້ຮັບການປັບປຸງ. ບັນຊີດ້ານລົບຈະລວມມີ:

- ຈະບໍ່ມີການສະໜັບສະໜູນເງິນທຶນໃຫ້ການຍົກຍ້າຍໝູ່ບ້ານ ຫຼື ຂະຫຍາຍການຍົກຍ້າຍໝູ່ບ້ານໃນຖິ່ນທີ່ຢູ່ອາໃສທີ່ມີຄວາມສຳຄັນ, ເຂດສະຫງວນຫຼືເຂດທີ່ມີການສະເໜີໃຫ້ມີການຄຸ້ມຄອງ. ພື້ນທີ່ຍົກຍ້າຍໝູ່ບ້ານທີ່ມີການສະເໜີຂໍທຶນແລ້ວ ຈະຕ້ອງປະຕິບັດຕາມກົດລະບຽບຂອງທ້ອງຖິ່ນໃນການຄຸ້ມຄອງທີ່ດິນ ແລະ ແຜນການຄຸ້ມຄອງພື້ນທີ່ອື່ນໆ. ຈະບໍ່ມີການອະນຸຍາດໃຫ້ສ້າງທາງຫຼືການບູລະນະໃດໆພາຍໃນເຂດທີ່ຢູ່ອາໃສທີ່ສຳຄັນ, ເຂດສະຫງວນຫຼືເຂດທີ່ມີການສະເໜີໃຫ້ມີການຄຸ້ມຄອງ.
- ທລຍ 3 ຈະບໍ່ໃຫ້ທຶນຊ່ວຍເຫຼືອໃນການຊື້ທີ່ດິນໂດຍມີເງື່ອນໄຂ ແລະ ບໍ່ເຕັມໃຈໃນການຍົກຍ້າຍຫຼືຈະບໍອະນຸຍາດໃຫ້ມີການຊື້ທີ່ດິນທີ່ບໍ່ສະໝັກໃຈ. ການຍົກຍ້າຍຫຼືການຊື້ທີ່ດິນສາມາດເກີດຂຶ້ນກໍ່ຕໍ່ເມື່ອມີຄວາມສະໝັກໃຈເປັນພື້ນຖານເທົ່ານັ້ນ ຫຼື ມີການຈ່າຍຊົດເຊີຍໂດຍເງິນຊ່ວຍເຫຼືອທີ່ຕົກລົງກັນຂອງບ້ານ ໃຫ້ແກ່ຜູ້ທີ່ຖືກກະທົບ. ໂຄງການຍ່ອຍເຫຼົ່ານີ້ໄດ້ຜ່ານການທົບທວນຄືນໂດຍພະນັກງານ ທລຍ ທີ່ໄດ້ຮັບການຝຶກອົບຮົມ. ການປະກອບສ່ວນແບບສະໝັກໃຈອື່ນໆ ຫຼື ໂດຍການຍົກຍ້າຍບ້ານທີ່ກາຍ 5 ຄົວເຮືອນຂຶ້ນໄປ ຫຼື ໂຄງປະກອບຄົວເຮືອນ ແມ່ນຕ້ອງການການຮັບຮອງຈາກຫ້ອງການ ທລຍ ສູນກາງທີ່ວຽງຈັນກ່ອນການຕັດສິນໃຈໃນກອງ

ປະຊຸມຂັ້ນເມືອງ. ຮ່າງແຜນການການທົດແທນຄືນ ແລະ ການຍົກຍ້າຍສໍາລັບ ຫລຍ 3 ໄດ້ຮັບການພັດທະນາ ແລະ ຈະໄດ້ນໍາມາໃຊ້.

- ຫລຍ 3 ຈະບໍ່ໃຫ້ການຊ່ວຍເຫຼືອແກ່ໂຄງການທີ່ມີສ່ວນກ່ຽວຂ້ອງກັບການໃຫ້ຄໍາປຶກສາ ແລະ/ຫຼື ການຍົກຍ້າຍທີ່ບໍ່ສອດຄ່ອງກັບນະໂຍບາຍຂອງທະນາຄານໂລກ; ການລົງທຶກໂຄງການ ຫຼື ໂຄງການຍ່ອຍບໍ່ສາມາດຈໍານໍາໄປໃຊ້ໃນເປັນແຮງຈູງໃຈແລະ/ຫຼືເຄື່ອງມືໃນການຊ່ວຍເຫຼືອແລະ/ຫຼືການຍົກຍ້າຍທີ່ບໍ່ເຕັມໃຈຂອງປະຊາຊົນທ້ອງຖິ່ນ.
- ກິດຈະໃດໆທີ່ຮັບບໍ່ໄດ້ຮັບການເຫັນດີຂອງຊົນເຜົ່າບໍ່ວ່າຈະເປັນຈະຢູ່ໃນໝູ່ບ້ານດຽວ ຫຼື ໝູ່ບ້ານທີ່ມີຫລາຍຊົນເຜົ່າປະສົມຢູ່ ແມ່ນຈະບໍ່ໄດ້ຮັບທຶນຊ່ວຍເຫຼືອ ໂດຍບໍ່ຕ້ອງມີການທົບທວນກ່ອນຈາກຫ້ອງການ ຫລຍ ສູນກາງ. ກິດຈະກໍາທີ່ຈະມີຜົນດ້ານລົບທີ່ໃຫຍ່ຫຼວງຕໍ່ຊົນເຜົ່າທີ່ດ້ອຍໂອກາດໃນໝູ່ບ້ານແລະໝູ່ບ້ານໄກ້ຄຽງກໍ່ຈະບໍ່ສາມາດໄດ້ຮັບທຶນຊ່ວຍເຫຼືອ.

**ປຶກສາຫາລືນໍາຊົນເຜົ່າສ່ວນນ້ອຍ ໃນໄລຍະຈັດຕັ້ງປະຕິບັດໂຄງການຍ່ອຍ:**

ວິທີຂອງ ຫລຍ ໃນການລວມຊົນເຜົ່າທັງໝົດໄດ້ຮັບການພັດທະນາຂຶ້ນ ແລະ ປັບປຸງໂດຍອີງໃສ່ປະສົບການຈາກໂຄງການທີ່ກໍາລັງດໍາເນີນຢູ່. ວິທີນີ້ໄດ້ຖືກອອກແບບມາເປັນພິເສດເພື່ອຮັບປະກັນວ່າ (ກ) ໂຄງການປະຕິບັດຕາມຫຼັກການສໍາຄັນຕົ້ນຕໍຂອງນະໂຍບາຍຂອງທະນາຄານໂລກກ່ຽວກັບບັນຫາຊົນເຜົ່າ (OP/BP 4.10 ສໍາລັບຊົນພື້ນເມືອງ) ເພື່ອຮັບປະກັນວ່າ: (ກ). ໂຄງການໄດ້ປະຕິບັດລະບຽບຫລັກການຂອງທະນາຄານໂລກ (OP/BP 4.10) ທີ່ແມ່ນນະໂຍບາຍທີ່ປ້ອງກັນຜົນກະທົບທີ່ອາດຈະເກີດຂຶ້ນ ຈາກຂະບວນການພັດທະນາ...ແລະ ເຮັດໃຫ້ຊົນເຜົ່າໄດ້ຮັບຜົນປະໂຫຍດທາງດ້ານສັງຄົມ ແລະ ເສດຖະກິດ ໂດຍສອດຄ່ອງກັບວັດທະນາທໍາຂອງເຂົາເຈົ້າ; (ຂ). ຮັບປະກັນວ່າທຸກຊົນເຜົ່າມີພົບປະກັນ ໂດຍຜ່ານຂະບວນການອອກແບບໂຄງການ ພ້ອມທັງໃຫ້ສອດຄ່ອງກັບນະໂຍບາຍຂອງລັດຖະບານ ແລະ (ຄ) ຮັບປະກັນວ່າ ໂຄງການຍ່ອຍທັງໝົດຂອງ ຫລຍ ໄດ້ຮັບການຈັດຕັ້ງປະຕິບັດ ໄດ້ຮັບການຍອມຮັບຂອງກຸ່ມຊົນເຜົ່າ ແລະ ໄດ້ສອດເອົາວຽກງານດ້ານບົດບາດຍິງຊາຍ ຢູ່ໃນທຸກລະດັບ.

ຄ້າຍຄືກັນກັບໂຄງການ ຫລຍ 2, ຫລຍ 3 ຈະສືບຕໍ່ປະຕິບັດຢູ່ໃນເຂດທຸກຍາກບູລິມະສິດຂອງລັດຖະບານ. ແນວ ໃດກໍ່ຕາມ,ບ່ອນທີ່ ຫລຍ I ໄດ້ເລັງໃສ່ເມືອງທຸກຍາກເປັນບູລິມະສິດ, ຫລຍ 3 ຈະປະຕິບັດຄື ຫລຍ 2 ແລະ ຈະເລັງໃສ່ຊ່ວຍເຫລືອກຸ່ມບ້ານທຸກຍາກເປັນບູລິມະສິດ ໂດຍໃຫ້ສອດຄ່ອງກັບເຈດຈໍານົງຂອງລັດຖະບານໃນການທົບທວນຄືນການສຸມໃສ່ເປົ້າໝາຍຄວາມທຸກຍາກຈາກຂັ້ນເມືອງຫາຂັ້ນກຸ່ມບ້ານແລະຄົວເຮືອນ ໂດຍໃຫ້ສອດຄ່ອງກັບມະຕິຕົກລົງເລກທີ 201 (2012) ກ່ຽວກັບເງື່ອນໄຂຄວາມທຸກຍາກ ແລະ ເງື່ອນໄຂການພັດທະນາ (2010-2015), ເດືອນຕຸລາ 13, 2009.

ພາຍໃຕ້ ຫລຍ 3, "ວິທີການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນແບບເຕັມຮູບແບບ" ຈະໄດ້ສືບຕໍ່ນໍາໃຊ້ ແລະ ເຜີຍແຜ່ງສູ່ທຸກພື້ນທີ່ຂອງໂຄງການ ເພື່ອຮັບປະກັນວ່າ (1). ກຸ່ມຊົນເຜົາມີສ່ວນຮ່ວມໃນການປະເມີນຜົນທາງສັງຄົມລວມທັງໄດ້ຮັບການແຈ້ງກ່ອນ ແລະ ແຈ້ງໃຫ້ທີ່ປຶກສາໂຄງການໃນການດໍາເນີນຢູ່ໃນກຸ່ມຂົນເຜົ່າ, (2). ສະໜັບສະໜູນເປັນຊຸມຊົນຂອງເຂົາເຈົ້າໃນການກວດສອບໂຄງການ (3). ຫລີກລຽງຜົນກະທົບທາງລົບ ຕໍ່ກຸ່ມຜູ້ດ້ອຍໂອກາດ ຫຼື ຫລຸດຜ່ອນຜົນກະທົບໃຫ້ນ້ອຍລົງ ແລະ (4) ຊຸກຍູ້ໃຫ້ກຸ່ມຊົນເຜົ່າໄດ້ຮັບຜົນປະໂຫຍດ.

**ພິເສດ, ວິທີການດັ່ງຕໍ່ໄປນີ້ ຈະໄດ້ສືບຕໍ່ນຳໃຊ້ໃນໄລຍະ ທລຍ 3:**

- <u>ເພີ່ມຈຳນວນຜູ້ປະສານງານກຸ່ມບ້ານຍິງ</u>: ທລຍ 3 ຍັງຈະສືບຕໍ່ເອົາເອົາຈຳນວນຜູ້ປະສານງານກຸ່ມບ້ານຍິງ 2 ທ່ານ ແລະ ຊາຍ 1 ທ່ານ ໃນ 1 ກຸ່ມບ້ານ, ຜູ້ປະສານງານກຸ່ມບ້ານຍິງໃນນັ້ນ ແມ່ນຕ້ອງໄດ້ຮັບການຄັດເລືອກມາຈາກກຸ່ມຊົນເຜົ່າທ້ອງຖິ່ນ ໃນທຸກໆກຸ່ມບ້ານ.

- <u>ແຜນອາດທາງສັງຄົມ</u>: ໃນກອງປະຊຸມຂັ້ນກຸ່ມບ້ານເບື້ອງຕົ້ນຜູ້ຕາງຫນ້າຈາກບ້ານຂື້ນລາຍງານລາຍລະອຽດກ່ຽວກັບຊົນເຜົ່າຢູ່ໃນບ້ານຂອງເຂົາເຈົ້າແລະສະຖານທີ່ຕັ້ງໃນໃຈກາງ ແລະ ນອກຂອງບ້ານ. ບັນຊີລາຍຊື່ທີ່ສົມບູນແບບລວມທັງຂໍ້ມູນກ່ຽວກັບສະຖານທີ່ຂອງບ້ານບ້ານ (ໄລຍະທາງໄປ-ກັບຫາບ້ານຫລັກ) ແລະ ລາຍລະອຽດຂອງໃນແຕ່ລະຊົນເຜົ່າ (ທີ່ເປັນຕົວແທນໃນແຕ່ລະຄຸ້ມບ້ານ) ແມ່ນພັດທະນາຂື້ນສຳລັບແຕ່ລະກຸ່ມບ້ານ.

- <u>ເວລາ 3 ມື້ "ກອງປະຊຸມວາງແຜນພັດທະນາຂັ້ນກຸ່ມບ້ານ"</u>: ເພີ່ມເຂົ້າໜຶ່ງມື້ໃນກອງປະຊຸມໃນຂັ້ນຄຸ້ມບ້ານ ທີ່ນອກເໜືອຈາກກອງປະຊຸມ 2ມື້ ທີ່ຈັດເປັນກອງປະຊຸມລວມບ້ານ. ເຄື່ອງມືກະຈາຍຂໍ້ມູນຂ່າວ ສານການສຶກສາ ແລະ ປະຊາສຳພັນ (IEC) ທີ່ຈະໄດ້ນຳໃຊ້ແມ່ນພັດທະນາຂື້ນໂດຍ ພະນັກງານ ທລຍ. ຕົວແທນຂອງແຕ່ລະຄຸ້ມບ້ານທັງຫມົດທີ່ເຂົ້າຮ່ວມໃນມື້ທຳອິດ, ປະຊຸມລວມບ້ານ, ຊຶ່ງເປັນກອງປະຊຸມທີ່ເຂົາເຈົ້າໄດ້ຮັບຄຳອະທິບາຍກ່ຽວກັບລະບຽບ ແລະ ຫຼັກການພື້ນຖານຂອງ ທລຍ, ລວມທັງການປົກປ້ອງທາງສັງຄົມ, ເຊັ່ນດຽວກັນກັບເງື່ອນໄຂໃນການຈັດລະດັບບູລິມະສິດໃນແຕ່ລະຄຸ້ມບ້ານເຂົ້າມາເປັນບູລິມະສິດຂັ້ນບ້ານ. ໃນລະຫວ່າງກອງປະຊຸມມື້ທີສອງ, ກອງປະຊຸມຂັ້ນຄຸ້ມບ້ານ, ຊາວບ້ານໄດ້ຮັບຂໍ້ມູນຂ່າວສານໂຄງການລວມທັງການປົກປ້ອງທາງສັງຄົມຈາກຜູ້ຕາງ ຫນ້າຂອງເຂົາເຈົ້າເຊັ່ນດຽວກັນກັບຊຸມຊົນ ແລະ ທລຍ ເຊັ່ນດຽວກັນແລະຢືນຢັນສະຫນັບສະຫນູນຊຸມຊົນຂອງເຂົາເຈົ້າຢ່າງກວ້າງຂວາງທີ່ຈະມີສ່ວນຮ່ວມໃນໂຄງການ. ຕາມການຢືນຢັນການສະໜັບສະນຸນຂອງຄະນະບໍລິຫານຊຸມຊົນ, ການວິເຄາະສະຖານະການແມ່ນໄດ້ດຳເນີນລວມທັງການຈັດລຽງລຳດັບຄວາມຮັ່ງມີຂອງຄົວເຮືອນ ແລະ ການເຮັດແຜນທີ່ທາງດ້ານສັງຄົມເພື່ອກຳນົດຄວາມຕ້ອງການທີ່ແຕກຕ່າງກັນຂອງຜູ້ທຸກຍາກ. ກອງປະຊຸມຂັ້ນຄຸ້ມບ້ານແມ່ນໄດ້ຈັດຂື້ນຢູ່ຄຸ້ມບ້ານຫ່າງໄກທັງຫມົດ ທີ່ກຳນົດໃນກອງປະຊຸມຂັ້ນກຸ່ມບ້ານໃນເບື້ອງຕົ້ນແລ້ວ. ບູລິມະສິດຂັ້ນບ້ານແມ່ນລວມຢູ່ໃນມື້ທີສາມ, ກອງປະຊຸມເປີດກ້ວາງຂອງບ້ານທີ່ຜູ້ຕາງຫນ້າຂອງຄຸ້ມບ້ານທັງຫມົດ ຈັດລະດັບບູລິມະສິດຄຸ້ມບ້ານຂອງເຂົາເຈົ້າ ເຂົາໃນບູລິມະສິດຂອງບ້ານເຂົາເຈົ້າ ໂດຍນຳໃຊ້ເງື່ອນໄຂທີ່ໄດ້ຕົກລົງໃນກອງປະຊຸມມື້ທຳອິດ. ຜົນຂອງການຈັດລຽງບູລິມະສິດ ກໍ່ໄດ້ລະບຸການໄຈ້ແຍກບັນຫາເຂົ້າໃນເອກະສານກຳນົດ "ວິໄສທັດບ້ານ" ເຊັ່ນດຽວກັນ. ຕົວແທນບ້ານທີ່ຈະເຂົ້າຮ່ວມກອງປະຊຸມວາງແຜນພັດທະນາກຸ່ມບ້ານກໍ່ຍັງໄດ້ຖືກຄັດເລືອກໃນກອງປະຊຸມມື້ທີສາມ.

- <u>ທົບທວນແຜນພັດທະນາກຸ່ມບ້ານ</u>: ຕົວແທນບ້ານປຶກສາຫາລືຜົນຂອງບັນດາກອງປະຊຸມຂັ້ນບ້ານ, ລຳດັບຄວາມທຸກຍາກຂອງບັນດາບ້ານໂດຍອີງໃສ່ກ່ອນການຕົກລົງເຫັນດີເງື່ອນໄຂການຈັດລຳດັບຄວາມທຸກຍາກ, ພ້ອມທັງປັບປຸງແຜນພັດທະນາກຸ່ມບ້ານ ໂດຍເບິ່ງໃສ່ບຸລິມະສິດຂອງການລົງທຶນເປັນຫລັກ. ແຜນພັດທະນາກຸ່ມບ້ານໄດ້ນຳໃສ່ເໜີຢູ່ແຕ່ລະບ້ານ ເພື່ອຮັບຮອງເອົາແຜນດັ່ງກ່າວ, ແລະ ການສະແດງຄຳຄິດຄຳເຫັນແມ່ນຈະໄດ້ນຳໄປປຶກສາຫາລືຢູ່ກອງປະຊຸມກຸ່ມບ້ານ ເພື່ອທົບທວນຄວາມເປັນໄປໄດ້ໃນການປ່ຽນແປງແຜນພັດທະນາກຸ່ມບ້ານ.

- <u>ແບບຂອງໂຄງການຍ່ອຍ ແລະ ການນຳສະເໜີແບບດັ່ງກ່າວຢູ່ກອງປະຊຸມຮັບຮອງແບບຂັ້ນບ້ານ</u>: ພະນັກງານ ທລຍ ຈະໄດ້ຊ່ວຍຊາວບ້ານໃນການອອກແບບບັນດາໂຄງການຍ່ອຍຕ່າງໆ ແລະ ໃນລະຫວ່າງການອອກແບບນັ້ນ ພະນັກງານ ທລຍ ຈະຕ້ອງໄດ້ຊີ້ໃຫ້ຊາວບ້ານເຫັນເຖິງຜົນກະທົບທາງລົບທີ່ອາດຈະເກີດຂຶ້ນ. ພະນັກງານ ທລຍ ຈະຕ້ອງໄດ້ປຶກສາຫາລືກັບຜູ້ທີ່ຈະສູນເສຍຊັບສິນສ່ວນຕົວ ຫລື ຜູ້ທີ່ເຄີຍຖືກສູນເສຍຊັບສິນສ່ວນຕົວ

ໂດຍບໍ່ໄດ້ຖືກຄຳນຶງເຖິງວ່າ ເຂົາເຈົ້າມີຄວາມເຕັມໃຈທີ່ຈະປະກອບສ່ວນຫລືຮຽກຮ້ອງຄ່າທົດແທນຄືນ, ດັ່ງຕໍ່ໄປນີ້ແມ່ນກອບນະໂຍບາຍຂອງການທົດແທນຄືນ ແລະ ຍົກຍ້ານຖິ່ນຖານ. ທຸກໆແບບຂອງໂຄງການຍ່ອຍແມ່ນໄດ້ນຳສະເໜີເບບເປີດກວ້າງຢູ່ກອງປະຊຸມຂັ້ນບ້ານ ແລະ ຊຸມຊົນສ່ວນໃຫຍ່ຕ້ອງເຫັນດີເຫັນພ້ອມ. ຖ້າຫາກຊຸມຊົນສ່ວນໃຫຍ່ບໍ່ເຫັນດີເຫັນພ້ອມແລ້ວ ໂຄງການຍ່ອຍຕ່າງໆນັ້ນຈະບໍ່ໄດ້ຖືກຈັດຕັ້ງປະຕິບັດ.

- <u>ສັນຍາຊ່ວຍເຫລືອລ້າ</u>: ຕໍ່ໄປນີ້ແມ່ນການຮັບຮອງແບບໂຄງການຍ່ອຍທີ່ຊຸມຊົນສ່ວນໃຫຍ່ໄດ້ເຫັນດີເຫັນພ້ອມ ແລະ ມາດຕະການຫລຸດຜ່ອນບັນດາຜົນກະທົບທາງລົບ, ຜູ້ປະສານງານ ທລຍ ເມືອງ ແລະ ຕົວແທນຊຸມຊົນເຊັນສັນຍາການຊ່ວຍເຫລືອລ້າ. ບັນດາສຳເນົາເອກະສານທີ່ກ່ຽວຂ້ອງ ເປັນຕົ້ນແມ່ນວິໃສທັດຂອງບ້ານ ແລະ ບົດບັນທຶກຂອງກອງປະຊຸມຊຸມຊົນແບບເປີດກວ້າງ ແມ່ນຈະຕ້ອງໄດ້ຕິດຄັດກັບສັນຍາຊ່ວຍເຫລືອລ້າ.

ທລຍ 3, ແຜນພັດທະນາຊົນເຜົ່າ ຈະໄດ້ສືບຕໍ່ສ້າງຂຶ້ນ ໂດຍການລວບລວມເອົາເນື້ອໃນຈາກຫລາຍໆເອກະສານແທນທີ່ຈະສ້າງເປັນເອກະສານດຽວຕ່າງຫາກ. ທັງນີ້ກໍເພາະວ່າຈຳນວນໂຄງການຍ່ອຍທີ່ຈະຊ່ວຍເຫລືອມີຈຳນວນຫລາຍແຕ່ຄວາມສາມາດຈຳກັດ ໃນການສ້າງເອກະສານຂອງຊຸມຊົນມີຈຳກັດ ແລະ ຮອບວຽນການຈັດຕັ້ງປະຕິບັດໂຄງການຍ່ອຍໃນປະຈຸບັນແມ່ນປະກອບມີຫລາຍຂັ້ນຕອນ ໃນແຕ່ລະຂັ້ນນັ້ນຕອນຕ້ອງໄດ້ສ້າງເອກະສານຂຶ້ນມາ ເຊິ່ງເປັນການສ້າງຄວາມຫຍຸ້ງຍາກໃນເອກະສານເພື່ອໃຫ້ກວາມເອົາອົງປະກອບຕ່າງໆຂອງແຜນພັດທະນາຊົນເຜົ່າ.

ໂດຍສະເພາະ, ເອກະສານຂ້າງລຸ່ມນີ້ ແມ່ນໄດ້ສ້າງຂຶ້ນພາຍໃຕ້ ທລຍ 2 ຜ່ານມາ ແລະ ຈະສືບຕໍ່ສ້າງຕື່ມຢູ່ໃນ ທລຍ 3 ເຊິ່ງໄດ້ສັງລວມທຸກໆອົງປະກອບຂອງແຜນພັດທະນາຊົນເຜົ່າ ຕ້ອງນອນຢູ່ໃນນະໂຍບາຍ OP 4.10

- <u>ເອກະສານກ່ຽວກັບການກຳນົດວິໃສທັດການພັດທະນາຂອງບ້ານ</u>: ທີ່ສັງລວມກ່ຽວກັບການປະເມີນຜົນຂອງສັງຄົມແບບມີສ່ວນຮ່ວມ ລວມທັງການແນະນຳກ່ອນ ແລະ ແຈ້ງການປຶກສາຫາລື ກັບກຸ່ມຊົນເຜົ່າ ແລະ ຜູ້ຮັບຜົນປະໂຫຍດ ເຊິ່ງທັງໝົດນັ້ນກຸ່ມຊົນເຜົ່າຈະຕ້ອງໄດ້ຮັບ;
- <u>ບົດບັນທຶກຂອງກອງປະຊຸມຕ່າງໆຂອງບ້ານ</u>: ລວມທັງກອງປະຊຸມຮັບຮອງເອົາແຜນພັດທະນາກຸ່ມບ້ານຢູ່ຂັ້ນບ້ານ ທີ່ໄດ້ບັນທຶກກ່ຽວກັບແບບຂອງໂຄງການຍ່ອຍ ໃນນັ້ນລວມມີຜົນກະທົບທາງລົບທີ່ອາດຈະເກີດຂຶ້ນ, ຄຳເຫັນທີ່ຍົກຂຶ້ນໂດຍຊຸມຊົນ ແລະ ການສະໜັບສະໜູນດ້ານຕ່າງໆຂອງຊຸມຊົນຕໍ່ການຈັດຕັ້ງປະຕິບັດໂຄງການຍ່ອຍ;
- <u>ແຈກຢາຍຄູ່ມື ໃຫ້ແກ່ຊຸມຊົນ ເຊິ່ງສາມາດເຫັນໄດ້ປະຈັກຕາ:</u> ການກວດກາໂຄງການຍ່ອຍໂດຍການເຂົ້າຮ່ວມຂອງທີມງານຈັດຕັ້ງປະຕິບັດຂັ້ນບ້ານ ແລະ ກົນໄກການສະແດງຄຳຄິດຄຳເຫັນຂອງໂຄງການ (FRM: ກົນໄກສະແດງຄຳຄິດຄຳເຫັນທີ່ໄດ້ອະທິບາຍໄວ້ຢູ່ຂ້າງລຸ່ມນີ້);
- <u>ສັນຍາຮັບຮອງເອົາການຊ່ວຍເຫລືອລ້າ</u>: ຕ້ອງໄດ້ລະບຸກ່ຽວກັບລາຄາຫືວໜ່ວຍໂຄງການຍ່ອຍ ແລະ ອະທິບາຍກ່ຽວກັບຄ່າໃຊ້ຈ່າຍເພື່ອຫລຸດຜ່ອນຜົນກະທົບ.

## ພາກທີ V: ກົນໄກການໃຫ້ຄຳຄິດເຫັນ ແລະ ການແກ້ໄຂບັນຫາ:

ຈຸດປະສົງຂອງກົນໄກການໃຫ້ຄຳຄິດເຫັນແລະການແກ້ໄຂບັນຫາ (ກສກ) ແມ່ນເພື່ອຮັບປະກັນວ່າ ທລຍ 3 ໄດ້ມີລະບົບຮັບເອົາຄຳຄິດເຫັນ ເພື່ອເກັບກຳເອົາຄຳຄິດເຫັນຈາກສັງຄົມ, ຮັບປະກັນວ່າຫາງສຽງທີ່ໄດ້ຮັບຈາກຜູ້ທຸກຍາກ ແລະ ດ້ອຍໂອກາດ ແລະ ບັນຫາ ໄດ້ຮັບການແກ້ໄຂຢ່າງມີປະສິດທິພາບ ແລະ ວ່ອງໄວ. ລະບົບດັ່ງກ່າວນີ້ຄາດວ່າຈະຖືກນຳໃຊ້ໃນ ທລຍ 3, ສາມາດຕອບສະໜອງຢ່າງເຕັມທີ່ໃຫ້ແກ່ຊຸມຊົນຜູ້ໄດ້ຮັບຜົນປະໂຫຍດ ແລະ ມອບສິດໃຫ້ແກ່ກຸ່ມຊົນເຜົ່າ ແລະ ຜູ້ທຸກຍາກທີ່ເປັນເປົ້າໝາຍສຳຄັນຂອງໂຄງການ.

ການປະເມີນການປ້ອງກັນຜົນກະທົບທາງສັງຄົມ (SA) ພົບວ່າໃນລະຫວ່າງດຳເນີນການກະກຽມໂຄງການ ໄດ້ມີການສ້າງຄວາມເຂົ້າໃຈກ່ຽວກັບ ກົນໄກການສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ (FRM) ໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ, ພົບວ່າຄວາມຕ້ອງການກ່ຽວກັບລະບົບນີ້ແມ່ນບໍ່ຫລາຍ. ຊຸມຊົນປຶກສາໄດ້ເຮັດໃຫ້ເຂົ້າໃຈວ່າບັນຫາໃດຫນຶ່ງສາມາດລາຍງານໄດ້ ແລະ ສາມາດເຮັດການຮ້ອງທຸກໄດ້ ໂດຍບໍ່ຕ້ອງລະບຸຊື່. ການເປີດຕູ້ຮັບຄຳຄິດຄຳເຫັນຂອງຊຸມຊົນຢ່າງເປັນປົກກະຕິ ພົບວ່າ ມີການບັນທຶກເອກະສານໄວ້ໄດ້ເປັນຢ່າງດີ ໂດຍຄະນະກຳມະການຮັບຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ (FRC) ຂັ້ນບ້ານ. ຢ່າງໃດກໍຕາມ, ການບັນທຶກສະແດງໃຫ້ເຫັນຢ່າງປົກກະຕິວ່າ ຕູ້ຮັບຄຳຄິດຄຳເຫັນທີ່ເປີດນັ້ນວ່າງເປົ່າ, ຍົກເວັ້ນ ບາງກໍລະນີທີ່ພົບ ແມ່ນຄຳຄິດຄຳເຫັນໃນທາງບວກ ຫຼື ການຮ້ອງຂໍການສະຫນັບສະຫນູນເພີ່ມ. ນອກ ຈາກນີ້ຍັງມີພຽງສອງສາມຄຳຄິດຄຳເຫັນຕົວຈິງທີ່ເປັນການຮ້ອງຮຽນ ທີ່ໄດ້ຮັບການລາຍງານຜ່ານໂທລະສັບສາຍດ່ວນໂທຟຣີ 161 ຂອງກົນໄກການສະແດງຄິດຄາເຫັນ ແລະ ແກ້ໄຂບັນຫາ (ເບິ່ງຕາຕະລາງທີ 4 ລຸ່ມນີ້).

ການປະເມີນການປ້ອງກັນຜົນກະທົບທາງສັງຄົມ (SA) ພົບເຫັນເຫດຜົນທາງດ້ານສັງຄົມ ແລະ ວັດທະນາທຳຫລາຍຢ່າງທີ່ເຫັນວ່າເປັນການຝືນໃຈນຳໃຊ້ກົນໄກການສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ (FRM) ຊຶ່ງລວມມີ: 1) ກືໜັງສື-ບຸກຄົນທີ່ບໍ່ສາມາດຽນຄຳຄິດຄຳເຫັນໄດ້; 2) ພາສາ-ບຸກຄົນທີ່ບໍ່ສາມາດເວົ້າພາສາລາວ ບໍ່ສາມາດນຳໃຊ້ເບີ 161 ໄດ້; 3) ປະເພນີໃນການແກ້ໄຂບັນຫາແບບດັ່ງເດີມທີ່ບໍ່ຕ້ອງການພາກສ່ວນພາຍນອກມາກ່ຽວຂ້ອງ ໂດຍປົກກະຕິແລ້ວການແກ້ໄຂບັນຫາທີ່ມີ ແມ່ນອຳນວຍຄວາມສະດວກ ໂດຍນາຍບ້ານ ແລະ ແນວໂຮມບ້ານ; 4) ມີຮ້ອງຂໍຄ່າທຳນຽມທີ່ຕ້ອງໄດ້ຈ່າຍໃນການດຳເນີນການແກ້ໄຂບັນຫາຈາກຂັ້ນສູງກວ່າ; ແລະ 5) ການສູນເສຍສະຖານະພາບ "ຕົວແບບບ້ານປອດຄະດີ" ທີ່ເປັນການຮັບຮູ້ທີ່ມີກຽດຈາກອຳນາດການປົກຄອງຂັ້ນທ້ອງຖິ່ນ.

ເພື່ອແກ້ໄຂຊ່ອງຫວ່າງທີ່ລະບຸໄວ້ໃນການປະເມີນການປ້ອງກັນຜົນກະທົບທາງສັງຄົມ, ທລຍ 3 ຈະສືບຕໍ່ເສີມຄວາມເຂັ້ມແຂງໃຫ້ແກ່ລະບົບກສກທີ່ມີຢູ່ແລ້ວ ຮ່ວມກັບການກວດສອບທາງສັງຄົມ, ການກວດສອບຈະຮັບຜິດຊອບໂດຍການມີສ່ວນຮ່ວມຂອງຊຸມຊົນໃນການຕິດຕາມກວດກາແລະລາຍງານຕໍ່ພະນັກງານ ທລຍ ເມືອງ ແລະ ຫ້ອງການທີ່ກ່ຽວ ຂ້ອງ ທັງນີ້ເພື່ອໃຫ້ມີຄວາມໂປ່ງໃສແລະເຊື່ອຖືໄດ້. ຄະນະຮັບຜິດຊອບສະມາຊິກກົນໄກການສະແດງຄຳຄິດຄຳເຫັນ (ກສກ) ປະກອບດ້ວຍຢ່າງໜ້ອຍ 50% ເປັນແມ່ຍິງ ທີຈະໄດ້ຮັບການຝຶກອົບຮົມກ່ຽວກັບການກວດສອບ, ຈາກນັ້ນຈະໄດ້ຮັບການເຝິກອົບຮົມເພື່ອສາມາດປະຕິບັດໜ້າທີ່ຂອງການກວດສອບທາງສັງຄົມຢູ່ຂັ້ນບ້ານ. ໜ້າທີ່ສະເພາະຂອງຄະນະກຳມະການຮັບຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາມີດັ່ງນີ້:

- ຮັບປະກັນວ່າຄະນະພັດທະນາບ້ານ ແລະ ຄະນະຮັບຜິດຊອບຈັດຕັ້ງປະຕິບັດໂຄງການຍ່ອຍຂັ້ນບ້ານ ປະຕິບັດໜ້າທີ່ຢ່າງມີຄວາມຍຸດຕິທຳ;

- ບັນທຶກເກັບກຳບັນຫາຫາຕ່າງໆ ຫຼື ສິ່ງທີ່ບໍ່ຖືກຕ້ອງໃນການຈັດຕັ້ງປະຕິບັດໂຄງການ ຈາກນັ້ນລາຍງານຕໍ່ທີ່ປະຊຸມລວມຂອງບ້ານ;
- ປະຕິບັດການກວດສອບຢູ່ພາຍບ້ານ ໂດຍສະເພາະກ່ຽວກັບປຶດບັນທຶກຕ່າງໆຂອງຄະນະກຳມະການດ້ານຕ່າງໆຂອງບ້ານ ແລະ ກວດກາຄະນະຮັບຜິດຊອບການຈັດຕັ້ງໂຄງການຍ່ອຍຂັ້ນບ້ານ ແລະ ຄະນະກຳມະການດ້ານອື່ນໆ, ຢ່າງໜ້ອຍຕ້ອງໄດ້ເຮັດທຸກໆ 2 ເດືອນ;
- ສັງລວມເອົາຄວາມຂັດຂ້ອງໝອງໃຈທີ່ອາດຍັງເຂົ້າບໍ່ເຖິງ ເພື່ອຊອກຫາວິທີແກ້ໄຂເພື່ອໃຫ້ມີຄວາມກະຈ່າງແຈ້ງ;
- ຮັບປະກັນການຍຶດໝັ້ນຕໍ່ຫຼັກການ, ກົດລະບຽບ ແລະ ວິທີການຂອງ ທລຍເຊັ່ນ: ຄວາມໂປ່ງໃສໃນການປະຕິບັດໜ້າທີ່ ຂອງຄະນະກຳມະການດ້ານຕ່າງໆ;
- ກຳນົດໃຫ້ເຫັນໄດ້ບັນດາສິ່ງທີ່ບົກພ່ອງໃນການຈັດຕັ້ງປະຕິບັດໂຄງການ ແລະ ດຳເນີນການປັບປຸງແກ້ໄຂ;
- ລາຍການບັນຫາທີ່ໄດ້ແກ້ໄຂ ຕໍ່ກອງປະຊຸມໃຫຍ່ຂອງບ້ານ;
- ຄະນະກຳມະການກວດສອບ ຕ້ອງໄດ້ມີການປະຊຸມຮ່ວມກັນ ຢ່າງໜ້ອຍເດືອນລະຄັ້ງແລະລາຍງານບັນຫາຕໍ່ອຳນາດການປົກຄອງບ້ານ.

ດ້ວຍວິທີນີ້, ຊາວບ້ານຈຶ່ງສາມາດຮັບປະກັນຄຸນນະພາບວຽກງານ, ຫຼັກການ ແລະ ກົດລະບຽບ ໄດ້ຮັບການປະຕິບັດຕາມຢ່າງເຄັ່ງຄັດ ແລະ ສະແດງຄວາມສາມາດຂອງເຂົາເຈົ້າໃນການຄຸ້ມຄອງຊັບພະຍາກອນດ້ວຍຕົນເອງຢ່າງມີປະສິດທິພາບ.

**1. ແນະນຳຫຼັກການຂອງກສກ**

| | |
|---|---|
| **ສາມາດເຫັນໄດ້** | ຂໍ້ມູນຂ່າວສານທີ່ໄດ້ຮັບ ກ່ຽວກັບຫຍັງ ແລະ ປະເພດໃດ ຈະຖືກເຜີຍແຜ່ ແລະ ສາມາດເຫັນໄດ້ງ່າຍ |
| **ສາມາດເຂົ້າຫາໄດ້** | ປະຊາຊົນທຸກຄົນ ຄວນສາມາດເຂົ້າເຖິງງ່າຍ ແລະ ມີຄວາມເຂົ້າໃຈກ່ຽວກັບຂັ້ນຕອນຂອງການສະແດງຄຳຄິດເຫັນ, ບໍ່ຈຳກັດທາງດ້ານພາສາ ຫຼື ການພິການທາງດ້ານຮ່າງກາຍ |
| **ການຕອບສະໜອງ** | ການຮັບຮູ້ໄວເກີດຈາກການກຳທຳທີ່ໄວ, ເພື່ອຜູ້ທີ່ສົ່ງຂໍ້ມູນສາມາດຮັບຮູ້ຄວາມຄືບໜ້າ |
| **ມີຈຸດປະສົງ** | ທຸກໆການສືບສວນ ຄວນມີຄວາມເປີດກວ້າງແລະຍຸດຕິທຳ, ມີຄວາມສົມບູນແລະສະເໝີພາບ |
| **ບໍ່ມີຄ່າໃຊ້ຈ່າຍ** | ຈະບໍ່ມີຄ່າລາຄາໃດໆໃຫ້ແກ່ຜູ້ສະແດງຄຳຄິດເຫັນ |
| **ມີຄວາມໝັ້ນໃຈ** | ຖ້າບໍ່ໄດ້ຮັບຄວາມສະໝັກໃຈ, ຂໍ້ມູນສ່ວນຕົວຈະຖືກເກັບຮັກສາເປັນຄວາມລັບຕະຫຼອດແລະຫຼັງຈາກການສືບສວນ |
| **ເລັ່ງໃສ່ປະຊາຊົນ** | ໂຄງການຍິນດີຕ້ອນຮັບເອົາຄຳຄິດເຫັນຈາກປະຊາຊົນທຸກໆປະເພດ |
| **ສາມາດກວດສອບໄດ້** | ຄວນເປັນສິ່ງຈະແຈ້ງໃນບົດບາດແລະອຳນາດໃນການໃຫ້ຄຳຄິດເຫັນ ແລະພະນັກງານຕ້ອງສ້າງຄວາມເຊື່ອຖືໃນການກະທຳ ແລະການຕັດສິນໃຈ |
| **ມີການປັບປຸງຢ່າງຕໍ່ເນື່ອງ** | ຕ້ອງໄດ້ມີການຮຽນຮູ້ຈາກຄຳຄິດເຫັນເພື່ອປັບປຸງວິທີການ, ນະໂຍບາຍ ແລະ ຂັ້ນຕອນຕ່າງໆ ໃຫ້ມີຄວາມເໝາະສົມ |

*ຄັດມາຈາກ ISO 10002, International Complaint-Handling Standard*

## 2. ແຫຼ່ງຂອງຄຳຄິດເຫັນ

ຕາມຫຼັກການແລ້ວ, ໃຜກໍ່ຕາມທີ່ມີສ່ວນກ່ຽງຂ້ອງໃນ ທລຍສາມາດໃຫ້ຄຳຄິດເຫັນໄດ້. ລະບົບໄດ້ຮັບການຕິດຕັ້ງແລະປັບປຸງເພື່ອເພີ່ມການມີສ່ວນຮ່ວມຂອງກຸ່ມທີ່ດ້ອຍໂອກາດ (ເຊັ່ນ ຊົນເຜົ່າ ແລະ ແມ່ຍິງ) ຜູ້ທີ່ບໍ່ໄດ້ອອກ ສຽງໃນຂະບວນການວາງແຜນແລະປະຕິບັດວຽກງານ ທລຍ.

## 3. ປະເພດຂອງຄຳຄິດເຫັນ

ຄຳຄິດເຫັນອາດລວມມີ: (ກ) ການນຳໃຊ້ທຶນທີ່ບໍ່ຖືກຕ້ອງ; (ຂ) ການກ່າວຫາວ່າສໍ້ລາດບັງຫຼວງ; (ຄ) ການແຊກແຊງທີ່ບໍ່ເໝາະສົມຈາກພາກສ່ວນພາຍນອກ(ງ) ການກະທຳຜິດຕໍ່ນະໂຍບາຍ, ຫຼັກການ ແລະ ສັນຍາໂຄງການສຳລັບການກໍ່ສ້າງໂຄ່ງການຍ່ອຍ. ຄຳຄິດເຫັນອາດເປັນການສອບຖາມຂໍ້ມູນກ່ຽວກັບຂັ້ນຕອນ ຫຼື ກົດລະ ບຽບໂຄງການ, (ຈ) ຜົນກະທົບດ້ານລົບຈາກໂຄງການຍ່ອຍ ຕໍ່ກັບຄອບຄົວ ຫຼື ກຸ່ມຍ່ອຍຕ່າງໆ ເຊິ່ງລວມມີການແຕະຕ້ອງເຖິງເນື້ອທີ່ດິນທຳກິນ ແລະ ການຈັດການທົດແທນຄືນບໍ່ມີຄວາມສອດຄ່ອງ ແລະ ຜົນກະທົບຈາກການກໍ່ສ້າງ ແລະ ບັນຫາທີ່ກ່ຽວກັບຜົນກະທົບອື່ນໆ. ຄຳເຫັນອາດແມ່ນຕ້ອງການທຳຄວາມເຂົ້າໃຈກ່ຽວກັບລະບຽບຫລັກການຂອງໂຄງການ.

## 4. ຊ່ອງທາງຮັບຄຳຄິດຄຳເຫັນ (ຄວາມເຂົ້າໃຈ)

ກົນໄກການສະແດງຄຳຄິດຄຳເຫັນ ແລະ ການແກ້ໄຂບັນຫາ ແມ່ນສ່ວນໜຶ່ງຂອງລະບົບການຕິດຕາມປະເມີນຜົນ ແລະ ຖານຂໍ້ມູນ (MIS) ຂອງ ທລຍ ແລະ ເປັນສ່ວນສຳຄັນໃນການປະຕິບັດຫຼັກການພື້ນຖານຂອງ ທລຍ ໃຫ້ມີປະສິດທິຜົນ. ການໃຫ້ຄຳຄິດເຫັນສາມາດເປັນໄປໄດ້ໃນທຸກຂັ້ນ (ບ້ານ, ກຸ່ມບ້ານ, ເມືອງ, ແຂວງ ແລະ ຂັ້ນສູນກາງ). ເພື່ອເຮັດໃຫ້ ທລຍ ສາມາດດຳເນີນງານໄດ້ດີ ທລຍ ໄດ້ສ້າງຕັ້ງອົງປະກອບລຸ່ມນີ້ໃຫ້ແກ່ການສະແດງຄຳຄິດເຫັນ:

- ຄະນະກຳມະການ ກສກ ໃນຂັ້ນບ້ານ, ກຸ່ມບ້ານ, ເມືອງ ແລະແຂວງ;
- ຕູ້ຮັບຄຳຄິດເຫັນ;
- ໂທລະສັບສາຍດ່ວນທີ່ບໍ່ຕ້ອງເສຍຄ່າ: ເບີ **161**;
- ຕູ້ໄປສະນີ;
- ອີເມວ;
- ເວັບໄຊ້;
- ການປະຊຸມສາມັນໃນທຸກຂັ້ນ (ບ້ານ, ກຸ່ມບ້ານ,ເມືອງ, ແຂວງ ແລະ ຂັ້ນສູນກາງ);
- ກອງປະຊຸມປະຈຳປີໃນບ້ານທີ່ໄດ້ຮັບໂຄງການຍ່ອຍ ໃນແຕ່ລະກຸ່ມບ້ານ.

ເພື່ອເປັນຂໍ້ມູນເພີ່ມເຕີມ ໂດຍອີງໃສ່ຄູ່ມືການປະຕິບັດໂຄງການ:

## 5. ການລວມວຽກງານພັດທະນາຊົນເຜົ່າເຂົ້າໃນວຽກງານຂອງ ທລຍ

ປະສົບການຂອງການປະຕິບັດ: ໂດຍປະຕິບຕາມ ສິ່ງທີ່ໄດ້ປັບປຸງ ຈາກໂຄງການທົດລອງວຽກງານ ກສກໃນປີ 2012 (ສົກປີ 2013-2014)ນັ້ນ, ໃນປີທຳອິດໄດ້ມີການເພີ່ມຂຶ້ນຂອງຈຳນວນຄຳຄິດເຫັນທີ່ຈາກຊຸມຊົນ (19 ເປັນການຂໍຂໍ້ມູນ, 151 ຂໍຄວາມຊ່ວຍເຫຼືອດ້ານການເງິນ, 83 ສະແດງຄວາມຂອບໃຈ ທລຍ ແລະ 9 ຄຳເຫັນແມ່ນການຮ້ອງຮຽນ) ແລະຄຳຄິດຄຳເຫັນທີ່ບໍ່ກ່ຽວຂ້ອງຫຍັງກັບ ທລຍ ໂດຍຜ່ານເຂົ້າມາທາງໂທລະສັບສາຍດ່ວນ 161. ຄຳຮ້ອງຮຽນສ່ວນຫລາຍກ່ຽວຂ້ອງກັບດ້ານວິຊາການ ຫຼື ການປະຕິບັດໂຄງການທີ່ຊັກຊ້າ. ແຕ່ບັນຫາເຫຼົ່ານີ້ ກໍ່ໄດ້ຮັບການແກ້ໄຂຢ່າງວ່ອງໄວໃນຂັ້ນບ້ານ. ລາຍລະອຽດເພີ່ມເຕີມມີຢູ່ໃນຕາຕະລາງ 3 ລຸ່ມນີ້.

**ຕາຕະລາງ 4: ຄຳຄິດຄຳເຫັນ ແລະ ການແກ້ໄຂບັນຫາ ໃນສົກປີ 2014-2015**

| ຄຳຄິດເຫັນທີ່ໄດ້ຮັບ | ປີ 2014 | | | ປີ 2015 | | | | | | | | | ລວມ |
|---|---|---|---|---|---|---|---|---|---|---|---|---|---|
| | ຕລ | ພຈ | ທວ | ມກ | ມນ | ມສ | ພພ | ມຖນ | ກກ | ສຫ | ກຍ | ຕລ | |
| ຂໍຂໍ້ມູນຕ່າງໆເພີ່ມຕື່ມ | **3** | **1** | **1** | **4** | **5** | **2** | **-** | **4** | **1** | **-** | **8** | **-** | **29** |
| ຂໍຄວາມຊ່ວຍເຫຼືອດ້ານທຶນຮອນ ແລະ ວິຊາການ | **1** | **171** | **2** | **27** | **6** | **4** | **7** | **32** | **18** | **9** | **108** | **38** | **423** |
| ຂອບໃຈນຳ ທລຍ | **1** | **-** | **2** | **10** | **5** | **-** | **12** | **8** | **13** | **4** | **1** | **44** | **100** |
| ຄຳຮ້ອງຮຽນ | **-** | **1** | **-** | **-** | **1** | **1** | **1** | **-** | **-** | **-** | **4** | **-** | **8** |
| ຄຳຄິດເຫັນກ່ຽວກັບ ທລຍ | **5** | **173** | **5** | **41** | **17** | **7** | **20** | **44** | **32** | **13** | **121** | **82** | **560** |

ກົນໄກດັ່ງກ່າວນີ້ ໃນຕໍ່ໜ້າສາມາດປັບປຸງໃຫ້ດີຂຶ້ນໄດ້ ຈາກທົບທວນຄວາມເພິ່ງພໍໃຈຂອງຊຸມຊົນທ້ອງຖິ່ນ ແລະ/ຫຼື ປັບປຸງໃຫ້ດີຂຶ້ນຕາມກອບນະໂຍບາຍດ້ານຊົນເຜົ່າ ເພື່ອອຳນວຍຄວາມສະດວກໃຫ້ ທລຍ,ຕອບສະໜອງໃຫ້ຊຸມຊົນຜູ້ຮັບຜົນປະໂຫຍດໄດ້ຢ່າງເຕັມທີ່ ແລະ ສ້າງຄວາມເຂັ້ມແຂງໃຫ້ຊົນເຜົ່າທີ່ດ້ອຍໂອກາດ ແລະ ບ້ານທີ່ທຸກຍາກ. ເພື່ອຈະປັບປຸງກົນໄກນີ້ ໄດ້ມີການຄາດວ່າ ທລຍ ວ່າຈະຕ້ອງສົ່ງເສີມປະຊາຊົນທ້ອງຖິ່ນໃຫ້ອອກຄຳຄິດເຫັນທັງດ້ານບວກ ແລະ ດ້ານລົບໂດຍຜ່ານຫຼາຍຊ່ອງທາງເຊັ່ນ: ໃບປະກອບຄຳເຫັນ, ຕູ້ປ່ອນຄຳເຫັນ ແລະ ໂທລະສັບສາຍດ່ວນ ເບີ 161 ຫາຄະນະຮັບຜິດຊອບ ກສກ ຂັ້ນສູນກາງ.

**ຕາຕະລາງ 5: ປະເພດຂໍ້ມູນຂ່າວສານທີ່ກະກຽມໃຫ້ຊຸມຊົນ:**

<table>
<tr><th>ຂັ້ນຕອນຂອງໂຄງການ ທລຍ</th><th>ຂໍ້ມູນຂ່າວສານ ທີ່ສຳສຳຄັນ ແລະ ສິ່ງວັດແທກ ເພື່ອສົ່ງເສີມການເຂົ້າຮ່ວມຂອງກຸ່ມຊົນເຜົ່າຫລາຍຂຶ້ນ ແລະ ກຸ່ມຜູ່ດ້ອຍໂອກາດດ້ອຍໂອກາດ.</th></tr>
<tr><td>(1) ການນຳສະເໜີແນວຄວາມຄິດຂອງໂຄງການ ແລະ ການຝຶກອົບຮົມແກ່ພະນັກງານ ທລຍ, ອຳນາດການປົກຄອງທ້ອງຖິ່ນ, ອາສາສະໝັກ ແລະ ຊຸມຊົນ</td><td rowspan="3">ທລຍ ແຈ້ງໃຫ້ຊຸມຊົນຊາບ ເຖິງຜົນກະທົບດ້ານສະພາບແວດລ້ອມແລະສັງຄົມທີ່ເປັນໄປໄດ້ທັງດ້ານບວກ ແລະ ລົບລວມມີຄວາມສ່ຽງດ້ານສະພາບແວດລ້ອມທີ່ອາດເກີດຈາກໂຄງການຍ່ອຍ, ສ້າງຈິດສຳນຶກຂອງຊຸມຊົນກ່ຽວກັບຄວາມຕ້ອງການສຳລັບການນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ ແລະ ການປົກປັກຮັກສາສະພາບແວດລ້ອມດ້ວຍຊຸມຊົນເອງ ອັນປະກອບດ້ວຍການແບ່ງປັນຄວາມຮູ້ດ້ານຜົນກະທົບດ້ານບວກ ແລະ ລົບຈາກໂຄງການຍ່ອຍແຕ່ລະປະເພດ, ບັນຫາສຳຄັນ ແລະ ຂໍການວັດແທກການຫຼຸດຜ່ອນ (ກິດຈະກຳທີ່ບໍ່ສະໜັບສະໜູນ, ຄຳແນະນຳດ້ານສັງຄົມ ແລະ ສະພາບແວດລ້ອມ ລວມມີ ESMF, CRPF, EGPFແລະ ນະໂຍບາຍການທົດແທນຄືນ ແລະ ການປະກອບສ່ວນແບບສະໝັກໃຈ, ການຫຼຸດຜ່ອນຜົນກະທົບໃສ່ຊັບພະຍາກອນ ແລະ ການລວມເອົາຊົນເຜົ່າທີ່ດ້ອຍໂອກາດ)<br>ອະທິບາຍກົນໄກສະແດງຄຳດຄຳເຫັນ ແລະ ແກ້ໄຂບັນຫາ (ກສກ) ເຊິ່ງລາຍລະອຽດມີຢູ່ໃນ ESMF, CRPF ແລະ</td></tr>
<tr><td>(2) ປະເມີນຄວາມຕ້ອງການ ແລະ ຈັດລຽງບູລິມະສິດຂອງບ້ານ</td></tr>
<tr><td>(3) ກອງປະຊຸມວາງແຜນແບບມີສ່ວນຮ່ວມ (ແຜນການ 4 ປີ ພ້ອມດ້ວຍການທົບທວນຄືນປະຈຳປີ) ໃນຂັ້ນກຸ່ມບ້ານ</td></tr>
</table>

| | |
|---|---|
| | EGPFນັບທັງຂັ້ນຕອນການສົ່ງຄໍາຄິດເຫັນຮ້ອງທຸກ. |
| **(4) ສາຫລວດ-ອອກແບບ ໂຄງການຍ່ອຍ** | ປຶກສາຫາລືສະເພາະວິທີການລົງມືປະຕິບັດຕາມທີ່ຕ້ອງການ ຊຶ່ງໄດ້ກໍານົດໄວ້ໃນນະໂຍບາຍ ທີ່ນໍາໃຊ້ເຂົ້າໃນໂຄງການຍ່ອຍ ລວມມີການປ້ອງກັນຜົນກະທົບດ້ານສັງຄົມ ຫຼື ມາດຕະການໃນການປ້ອງກັນຜົນກະທົບຕໍ່ສິ່ງແວດລ້ອມ ຢູ່ໃນເອກະສານການປະມູນ ແລະ ເອກະສານສັນຍາ.<br>ກວດກາ ແລະກໍານົດວ່າບ່ອນໃດມີຄວາມຕ້ອງການທີ່ດິນ ແລະ ການຂໍຮ້ອງໃນການຍົກຍ້າຍຖິ່ນຖານຂອງປະຊາຊົນໃນທ້ອງຖິ່ນ ແມ່ນຈະໄດ້ໃຊ້ຄວາມພະຍາຍາມເປັນພິເສດ ໂດຍສະເພາະຕໍ່ຊົນເຜົ່າ. ການົດຕົວວັດແທກໃນການຫຼຸດຜ່ອນຜົນກະທົບທີ່ອາດເກີດຂຶ້ນດັ່ງໄດ້ລະບຸໄວ້ໃນ CRPFແລະ EGPF |
| **(5) ກອງປະຊຸມຂັ້ນເມືອງ ເພື່ອຮັບຮອງເອົາແຜນການພັດທະນາຂອງກຸ່ມບ້ານ** | |
| **(6) ການຈັດຕັ້ງປະຕິບັດໂຄງການຍ່ອຍ** | ການກໍ່ສ້າງໂຄງການຍ່ອຍ ຢູ່ໃນບ້ານເປົ້າໝາຍ. ການກວດກາ ແລະ ຕິດຕາມ ກ່ຽວກັບຄຸນນະພາບຂອງວຽກງານການປ້ອງກັນຜົນກະທົບ<br>ຂັ້ນຕອນການດໍາເນີນກອງປະຊຸມປຶກສາຫາລື ກ່ຽວກັບການປະກອບສ່ວນທີ່ດິນ ຫຼື ຊັບສິນຕ່າງໆ ຕ້ອງສາເລັດກ່ອນການກໍ່ສ້າງຈະເລີ່ມຂຶ້ນ.<br>ການຮ້ອງທຸກ ຫຼື ຄໍາເຫັນຕ່າງໆ ຕ້ອງໄດ້ຮັບການແກ້ໄຂ ຜ່ານລະບົບກສກ. |
| **(7) ການເຝິກອົບຮົມດ້ານວິຊາການຂັ້ນພື້ນຖານໃຫ້ແກ່ຊຸມຊົນ** | ໃຫ້ຂໍ້ມູນທີ່ກ່ຽວກັບການຫຼຸດຜ່ອນຜົນກະທົບດ້ານລົບໃນໄລຍະດໍາເນີນການເຊັ່ນ ຄວາມປອດໄພໃນການກໍ່ສ້າງທາງ, ການປົກປັກຮັກສາແຫຼ່ງນໍ້າ.<br>ຜູ້ແປພາສາທ້ອງຖິ່ນ ຈະໄດ້ລົງໄປເຄື່ອນໄຫວຍ້າຍ ເພື່ອຊ່ວຍແປພາສາແລະ ປະສານງານກັບທ້ອງຖິ່ນຕາມຄວາມຈໍາເປັນ |
| **(8) ການປະຊຸມຕິດຕາມປະເມີນຜົນໂຄງການຍ່ອຍ** | ລາຍງານຄວາມຄືບໜ້າ<br>ຜູ້ແປທ້ອງຖິ່ນຈະໄດ້ເຄື່ອນໄຫວລົງໄປຊ່ວຍ ໃນການແປພາສາແລະປະສານງານກັບຊົນເຜົ່າ<br>ອຸປະກອນ IEC ຈະຖືກພັດທະນາ ແລະ ນໍາໃຊ້ສໍາລັບການເຝິກອົບຮົມຊົນເຜົ່າ ເພື່ອປັບປຸງຄວາມເຂົ້າໃຈຂອງເຂົາເຈົ້າ |
| **(9) ການມອບໂຄງການຍ່ອຍຢ່າງເປັນທາງການໃຫ້ແກ່ຊຸມຊົນ ແລະ ຂະ ແໜງການທີ່ກ່ຽວຂ້ອງ** | ຮັບປະກັນການເຂົ້າຮ່ວມ ແລະ ມີສ່ວນຮ່ວມຂອງກຸ່ມຊົນເຜົ່າສ່ວນນ້ອຍຢູ່ໃນພິທີການມອບຮັບນັ້ນ<br>ນາຍພາສາທ້ອງຖິ່ນຈະໄດ້ລົງໄປເຄື່ອນໄຫວ ເພື່ອຊ່ວຍໃນການແປພາສາແລະ ປະສານງານກັບທ້ອງຖິ່ນຕາມຄວາມຈໍາເປັນ |
| ***ຖ້າຫາກຊົນເຜົ່າ ບໍ່ມີຄວາມສະໝັກໃຈ ກໍບໍ່ສາມາດສ້າງຕັ້ງໂຄງການຂຶ້ນໄດ້, ໂຄງການຈໍາຕ້ອງໄດ້ຢຸດເຊົາການດໍາເນີນການ*** | |

## ພາກທີ VI: ການຕິດຕາມ, ການເກັບມ້ຽນເອກະສານ, ການເຜີຍແຜ່ຂໍ້ມູນຂ່າວສານ ແລະ ການລາຍງານ:

ຫ້ອງການ ທລຍ ຂັ້ນ ສູນກາງ, ໃນການໃຫ້ຄໍາປຶກສາຢ່າງໃກ້ສິດກັບພະນັກງານ ທລຍ ຂັ້ນທ້ອງຖິ່ນ ແລະ ສູນກາງແນວລາວສ້າງຊາດ (LFNC) ແມ່ນຜູ້ຮັບຜິດຊອບໃນການຊີ້ນໍາ ແລະ ຕິດຕາມກວດກາ ບັນຫາທີ່ກ່ຽວຂ້ອງກັບກຸ່ມຊົນເຜົ່າ, ລວມທັງເອກະສານ ແລະ ການລາຍງານ. ຜົນໄດ້ຮັບຈະຖືກລວມລວມເຂົ້າໃນບົດລາຍງານຄວາມຄືບໜ້າຂອງໂຄງການ. ຄະນະປະເມີນຜົນຂອງທະນາຄານໂລກ ທີ່ມີໃນແຕ່ລະໄລຍະຈະມີການທົບທວນຄືນຄວາມຄືບໜ້າ ເພື່ອຮັບປະກັນວ່າ ການລົງທຶນທີ່ມີຜົນປະໂຫຍດຕໍ່ປະຊາຊົນຊົນບັນເຜົ່າພື້ນເມືອງ ແລະ ບັນເທົາຜົນກະທົບອື່ນໆທີ່ບໍ່ພຶງປະສົງໃຫ້ເຂົາເຈົ້າ.

ຕະຫຼອດການຈັດຕັ້ງປະຕິບັດຂອງ ທລຍ 3 , ຜູ້ໄດ້ຮັບຜົນປະໂຫຍດ/ຊຸມຊົນທີ່ຖືກຜົນກະທົບ ຈະໄດ້ຮັບການແຈ້ງໃຫ້ຊາບກ່ຽວກັບ ວິທີການໂດຍລວມຂອງໂຄງການ ລວມທັງຂໍ້ກໍານົດກ່ຽວກັບ ກອບການວາງແຜນດ້ານຊົນເຜົ່າເຫລົ່ານີ້ ຊຶ່ງເປັນສ່ວນຫນຶ່ງ ຂອງຂະບວນການວາງແຜນແບບມີສ່ວນຮ່ວມ. ຂໍ້ມູນຂ່າວສານກ່ຽວກັບໂຄງການ, ລວມທັງບົດບັນທຶກຜົນກອງປະຊຸມວາງແຜນ, ງົບປະມານ ແລະ ການບັນທຶກການທາງດ້ານການເງິນ ຈະໄດ້ຮັບການແບ່ງ ປັນໃຫ້ກັບສະມາຊິກໃນຊຸມຊົນທີ່ເຂົ້າຮ່ວມກອງປະຊຸມໃນຂັ້ນບ້ານຊາບ. ສໍາເນົາເອກະສານທີ່ສໍາຄັນ ແລະ ບົດບັນທຶກຜົນຂອງກອງປະຊຸມຈະໄດ້ຮັບການສະແດງຢູ່ໃນກະດານຂ່າວຂັ້ນບ້ານ ແລະ ຂໍ້ມູນຂ່າວສານຈະໄດ້ຮັບການແບ່ງປັນທາງປາກເປົ່າເປັນພາສາທ້ອງຖິ່ນ ໃຫ້ປະຊາຊົນຜູ້ທີ່ຮູ້ຫນັງສື ຫລື ຜູ້ທີ່ເວົ້າພາສາອື່ນທີ່ນອກເຫນືອຈາກພາສາລາວ, ທັງນີ້ເພື່ອຮັບປະກັນການເປີດເຜີຍຂໍ້ມູນໂຄງການຢ່າງເຕັມທີ່.

ການປະຕິບັດການຕິດຕາມກວດກາການປ້ອງກັນຜົນກະທົບທາງສັງຄົມ ຈະໄດ້ຮັບການສ້າງຄວາມເຂັ້ມແຂງພາຍໃຕ້ ທລຍ 3. ໂດຍສະເພາະປະຕິບັດການກວດສອບການປ້ອງກັນ, ການຕິດຕາມກວດກາ ແລະ ເອກະສານໃນໄລຍະຕໍ່ມາຂອງການຈັດຕັ້ງປະຕິບັດໂຄງການຍ່ອຍ ແມ່ນຈະໄດ້ຮັບການປັບປຸງໂດຍ:

- ລວມຮູບແບບກ່ຽວກັບການປ້ອງກັນຜົນກະທົບທາງສັງຄົມໃນການຝຶກອົບຮົມດ້ານວິຊາການທັງຫມົດຂອງພະນັກງານ ທລຍ, ສິນທະນາມາດກ່ຽວກັບການວັດແທກການປ້ອງກັນ ແລະ ໂຄງສ້າງການລາຍງານທີ່ກ່ຽວຂ້ອງກັບຫົວຂໍ້ສະເພາະໃນການຝຶກອົບຮົມ. ນີ້ແມ່ນເຈດຕະນາຂອງການສ້າງຄວາມເຂັ້ມແຂງທີ່ລວບ ລວມການປ້ອງກັນຜົນກະທົບທາງສັງຄົມ ແລະ ເອົາເອກະສານເລົ່ານັ້ນເຂົ້າໃນຂະບວນການຈັດຕັ້ງປະຕິບັດໂຄງການຍ່ອຍທັງຫມົດ.
- ແນະນໍາການວາງແຜນໂຄງການຍ່ອຍ ແລະ ເຄື່ອງມືຕິດຕາມກວດກາ, ປະຈຸບັນແມ່ນຢູ່ໃນຂັ້ນຕອນການພັດທະນາ (ປັບປຸງ), ເພື່ອໃຫ້ການຊ່ວຍເຫຼືອແກ່ພະນັກງານ ທລຍ ເມືອງ ແລະ ຜູ້ປະສານງານກຸ່ມບ້ານເພື່ອຮັບປະກັນການປະຕິບັດຕາມມາດຕະການປົກປ້ອງຜົນກະທົບ ໃນລະຫວ່າງຈັດຕັ້ງປະຕິບັດທຸກຂັ້ນຕອນຂອງການປະຕິບັດໂຄງການຍ່ອຍ.
- ພະນັກງານ ທລຍ ຂັ້ນແຂວງ ແລະ ຂັ້ນເມືອງ ດໍາເນີນການຕິດຕາມຊຸກຍູ້ 6 ແລະ 12 ເດືອນ ເພື່ອພິສູດວ່າ ຊຸມຊົນຜູ້ໄດ້ຮັບປະໂຫຍດ ປະຕິບັດຕາມມາດຕະການປ້ອງກັນຜົນກະທົບ. ບັນຫາເຫຼົ່ານັ້ນໄດ້ຮັບການປຶກສາຫາລື ແລະ ມີຄວາມຈໍາເປັນເພື່ອຕິດຕາມຊຸກຍູ້ ການປະຕິບັດການຂໍ້ຕົກລົງຈະໄດ້ຮັບການບັນທຶກ ໃນແບບຟອມການວາງແຜນ ແລະ ຕິດຕາມໂຄງການຍ່ອຍ. ລົງຢ້ຽມຢາມຄອບຄົວຜູ້ຖືກກະທົບ, ລວມທັງປຶກສາຫາລືເຖິງບັນຫາ ແລະ ປະຕິບັດຕາມຕົກລົງກັນ, ນອກຈາກນັ້ນ ຄອບຄົວທີ່ມີການປະກອບສ່ວນລ້າ ຈະໄດ້ຮັບເອກະສານທີ່ເປັນແບບຟອມບັນທຶກການປະກອບສ່ວນຂອງເຂົາເຈົ້າ/ບົດລາຍງານການໄດ້ມາທາງດ້ານທີ່ດິນ.

- ການເສີມສ້າງຄວາມອາດສາມາດເພີ່ມເຕີມສໍາລັບຜູ້ປະສານງານກຸ່ມບ້ານ ເພື່ອສົ່ງເສີມ ແລະ ຊ່ວຍເຫຼືອ ຄົວເຮືອນທີ່ຖືກກະທົບ ທີ່ໄດ້ມີການລາຍງານບັນຫາໂດຍຜ່ານກົນໄກການສະແດງຄໍາຄິດຄໍາເຫັນ ແລະ ແກ້ໄຂບັນຫາ.

## ພາກທີ VII: ງົບປະມານ

ການພັດທະນາຄວາມອາດສາມາດ ສໍາລັບການມີສ່ວນຮ່ວມ ແລະ ການຕັດສິນໃຈແບບມີຄວາມໂປ່ງໃສທີ່ລວມ ມີຊົນເຜົ່າເຂົ້າຮ່ວມ, ລວມທັງການຈໍາກັດຜົນກະທົບທາງລົບຕໍ່ສະມາຊິກຂອງຊຸມຊົນ, ມັນຍັງເປັນສ່ວນໜຶ່ງຂອງ ມາດຕະຖານການເຮັດວຽກຂອງ ທລຍ. ຍ້ອນແນວນັ້ນ, ທລຍ 3ຍັງຈະສືບຕໍ່ຈັດສັນງົບປະມານໃສ່ໃນການພັດທະນາ ຂີດຄວາມສາມາດ. ທລຍ ຍັງໃຫ້ຄວາມສໍາຄັນຕໍ່ຄວາມຍືນຍົງດ້ານສິ່ງແວດລ້ອມ ເພາະມັນເປັນປັດໃຈສໍາຄັນຕົ້ນຕໍສໍາລັບ ການຫລຸດຜ່ອນຄວາມທຸກຍາກແບບຍືນຍົງ ແລະ ຈະສືບຕໍ່ປູກຝັງຈິດສໍາ ນຶກໃຫ້ແກ່ສະມາຊິກຊຸມຊົນ ໂດຍສະເພາະ ການພັດທະນາຄວາມສາມາດຂັ້ນພື້ນຖານສໍາລັບຄວາມຍືນຍົງດ້ານສິ່ງແວດລ້ອມຢູ່ໃນ ທລຍ 3.

ດັ່ງຕາຕະລາງຂ້າງລຸ່ມນີ້ໄດ້ສະແດງໃຫ້ເຫັນ,ທລຍ 3 ຈະສະໜອງປະມານ 300,000 ໂດລາສະຫະລັດ ສໍາລັບ ການພັດທະນາຄວາມສາມາດຂອງຊຸມຊົນ ໃນການຈັດຕັ້ງປະຕິບັດເຄື່ອງມືການປ້ອງກັນຜົນກະທົບຂອງໂຄງການ. ມັນ ເປັນທີ່ສັງເກດວ່າການໃຊ້ຈ່າຍຕົວຈິງໃນການຈັດຕັ້ງປະຕິບັດການປ້ອງກັນຜົນກະທົບຈະສູງກວ່າຫຼາຍ. ມີຫຼາຍກິດຈະກໍາ ຂອງ ທລຍ ຊຶ່ງລວມມີຫຼາຍກິດຈະກໍາກ່ຽວກັບການຈັດຕັ້ງປະຕິບັດ ຫຼື ການຕິດຕາມວຽກງານການປ້ອງກັນຜົນກະທົບ. ຕົວຢ່າງ ການຕິດຕາມມາດຕະຖານດ້ານສິ່ງແວດລ້ອມຖືກຈັດຕັ້ງປະຕິບັດເປັນສ່ວນໜຶ່ງຂອງການຊີ້ນໍາທັງໝົດ ຂອງ ການຈັດຕັ້ງປະຕິ ບັດໂຄງການຍ່ອຍ. ການຝຶກອົບຮົມຄືນໃຫ້ແກ່ທີມງານຈັດຕັ້ງປະຕິບັດຂັ້ນບ້ານວ່າດ້ວຍຂະບວນການມີ ສ່ວນຮ່ວມ ມີຫຼາຍຈຸດປະສົງ ເຊິ່ງການປ້ອງກັນກໍແມ່ນໃນນັ້ນ. ຄ່າໃຊ້ຈ່າຍຂອງກອງປະຊຸມການກວດສອບຂັ້ນບ້ານຈະ ກວມເອົາຮູບແບບຂອງການປ້ອງກັນ ແລະ ວຽກອື່ນໆໄປນໍາ. ສະນັ້ນ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມການ ປ້ອງກັນຜົນກະທົບ ແມ່ນໄດ້ລວມເຂົ້າໄປໃນຫຼາຍກິດຈະກໍາຂອງໂຄງການ, ມັນເປັນການຍາກທີ່ຈະຄາດຄະເນ ງົບປະມານ ເຊິ່ງຈະໃຊ້ຈ່າຍພາຍໃຕ້ ທລຍ 3 ຢ່າງດຽວ ແລະ ພຽງແຕ່ສໍາລັບການຈັດຕັ້ງປະຕິບັດການປ້ອງກັນ ແລະ ຄວາມສອດຄ່ອງ. ດັ່ງລາຍລະອຽດຄາດຄະເນຫົວໜ່ວຍງົບປະມານດັ່ງລຸ່ມນີ້:

**ຕາຕະລາງ 6 : ຄາດຄະເນຫົວໜ່ວຍງົບປະມານ ຈັດຕັ້ງປະຕິບັດການປ້ອງກັນຜົນກະທົບພາຍໃຕ້ ທລຍ 3**

| **ຄ່າໃຊ້ຈ່າຍໃນການຈັດຕັ້ງປະຕິບັດການປ້ອງກັນຜົນກະທົບ ຢູ່ໃນ ທລຍ 3** | |
|---|---|
| ການຝຶກອົບຮົມຄືນໃຫ້ແກ່ທີມງານຈັດຕັ້ງປະຕິບັດຂັ້ນບ້ານ (VIT) ກ່ຽວກັບຂະບວນການ ການມີສ່ວນຮ່ວມ ລວມທັງການກະຕຸກຊຸກຍູ້ການມີສ່ວນຮ່ວມຂອງຊົນເຜົ່າ | $20,882 |
| ກອງປະຊຸມການກວດສອບຂັ້ນບ້ານ | $71,518 |
| ການຝຶກອົບຮົມວຽກງານການປ້ອງກັນຜົນກະທົບ ໃຫ້ແກ່ພະນັກງານ ທລຍ | $183,593 |
| ການຜະລິດເຄື່ອງມືເຜີຍແຜ່ຂໍ້ມູນ-ຂ່າວສານ, ການສຶກສາ ແລະ ປະຊາສໍາພັນ (IEC) ກ່ຽວ ກັບ ການປ້ອງກັນຜົນກະທົບທາງສັງຄົມ ແລະ ສິ່ງແວດລ້ອມ | $11,000 |
| **ລວມທັງໝົດ:** | **$286,993** |

# ເອກະສານຄັດຕິດ

## ເອກະສານຄັດຕິດ 1: ກົນໄກສະແດງຄໍາຄິດຄໍາເຫັນ ແລະ ແກ້ໄຂບັນຫາ-ການຝຶກອົບຮົມ ແລະ ແບບຟອມ

ຮູບແບບໃນການຝຶກອົບຮົມກ່ຽວກັບ ກົນໄກສະແດງຄໍາຄິດຄໍາເຫັນ ແລະ ແກ້ໄຂບັນຫາ ທີ່ໃຊ້ໃນ ທລຍ 2 ຈະຕ້ອງໄດ້ຮັບການປັບປຸງດັດແກ້ໃໝ່ ຈາກພະແນກພັດທະນາຊຸມຊົນ ແລະ ພະແນກຕິດຕາມປະເມີນຜົນ ຂັ້ນສູນກາງ, ໂດຍເນັ້ນໃສ່ຫຼັກການຂອງການຮັກສາຄວາມລັບ, ມີສ່ວນໃນການປັບປຸງຈາກອົງການຈັດຕັ້ງຊາວໜຸ່ມ, ເພີ່ມການນໍາໃຊ້ລະບົບ ຂອງກຸ່ມຜູ້ດ້ອຍໂອກາດໃນແຕ່ລະຊຸມຊົນຂຶ້ນຕື່ມ. ຮູບແບບການຝຶກອົບຮົມຍັງຄວນເນັ້ນເຖິງຄວາມສໍາຄັນຂອງຄວາມໂປ່ງໃສ ແລະ ໄລຍະເວລາໃນຂະບວນການດໍາເນີນແກ້ໄຂບັນຫາ;

ການຝຶກອົບຮົມຄວນເລັ່ງເປົ້າໝາຍໃສ່ພະນັກງານ ທລຍ ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ແລະ ຜູ້ທີ່ຈະມາເປັນຄະນະກໍາມະການຮັບຄໍາຄິດຄໍາເຫັນ ແລະ ແກ້ໄຂບັນຫາ ໃນແຕ່ລະຂັ້ນ, ແຕ່ຄວນມີການສື່ສານໃຫ້ແກ່ຊຸມຊົນເປັນຢ່າງດີ. ໃນກອງປະຊຸມສະຫລຸບງວດໂຄງການຍ່ອຍຂັ້ນບ້ານ, ກອງປະຊຸມປະສານງານກັບຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງ ໃນເມືອງເປົ້າໝາຍທົດລອງ ຄວນຈັດກອງປະຊຸມປຶກສາຫາລືກັບທີມງານກຸ່ມບ້ານ ແລະ ຄະນະກໍາມະການຮັບຄໍາຄິດຄໍາເຫັນ ແລະ ແກ້ໄຂບັນຫາຂັ້ນກຸ່ມບ້ານ ເພື່ອສອນກ່ຽວກັບ ລະບຽບ, ຫລັກການ ແລະ ຊ່ອງທາງຫລັກຂອງລະບົບກົນໄກ. ສະມະຊິກອົງການຈັດຕັ້ງຊາວໜຸ່ມ, ຜູ້ທີ່ຈະມາເປັນຄະນະກໍາມະການຮັບຄໍາຄິດຄໍາເຫັນ ແລະ ແກ້ໄຂບັນຫາ ແມ່ຕ້ອງການໃຫ້ເຂົ້າຮ່ວມໃນກອງປະຊຸມປຶກສາຫາລືດັ່ງກ່າວ;

ໃນລະຫວ່າງການຕິດຕາມການຈັດຕັ້ງປະຕິບັດໂຄງການຍ່ອຍ ໃນຮອບວຽນ 13, ຜູ້ປະສານງານກຸ່ມບ້ານ ແລະ ພະນັກງານພັດທະນາຊຸມຊົນຂັ້ນເມືອງ ຕ້ອງໄດ້ຈັດຝຶກອົບຮົມໃຫ້ກັບຄະນະກໍາມະການ ຮັບຄໍາຄໍາຄິດຄໍາເຫັນ ແລະ ແກ້ໄຂບັນຫາ ແລະ ຈັດກອງປະຊຸມແນະນໍາໃຫ້ແກ່ຊຸມຊົນພາຍໃນບ້ານກ່ຽວກັບ ລະບຽບ, ຫລັກການ ແລະ ຊ່ອງທາງຫລັກຂອງກົນໄກການສະແດງຄໍາຄິດຄໍາເຫັນ ແລະ ແກ້ໄຂບັນຫາ;

ການຝຶກອົບຮົມແມ່ນຈະໄດ້ນໍາໃຊ້ເຄື່ອງມື IECs ທີ່ປັບປຸງໃໝ່ ໂດຍທີມງານພັດທະນາຊຸມຊົນກ່ຽວກັບກົນໄກການສະແດງຄໍາຄິດຄໍາເຫັນ ແລະ ແກ້ໄຂບັນຫາ (ເຊັ່ນ: ປິດສເຕີ້, ແຜ່ນພັບ ແລະ ສະປອດໂຄສະນາທາງວິທະຍຸ) ແລະ ນໍາໃຊ້ການຫລິ້ນເກມໃນລະຫວ່າງການຝຶກອົບຮົມ ເພື່ອຮັບປະກັນໃຫ້ຜູ້ເຂົ້າຮ່ວມກະຕືລືລົ້ນ ແລະ ໃຫ້ເຂົາເຈົ້າຮູ້ຈັກສຶກສາ

ກາ ຝຶກອົບຮົມຈະໄດ້ ໍາໃຊ້ເຄື່ອງມື IEC ໃໝ່ ທີ່ໄດ້ຜະລິດຂື້ນມາໃໝ່ ໂດຍທີມງາ ພັດທະ າຊຸມຊົ ( ເຊັ່ນ: ປິດສເຕີ້, ແຜ່ ພັບ ແລະ ສະປອດໂຄສະ າທາງວິທະຍຸ) ແລະ ໍາໃຊ້ກາ ຫລີ້ນເກມ ເພື່ອຮັບປະກັ ການມີສ່ວນຮ່ວມກັບຄູຝຶກ ແລະ ໃຫ້ເຂົາເຈົ້າຮູ້ສຶກສາເຂົາເຈົ້າຢູ່ໃ ສະຖາ ະກາ ຕົວຈິງ ພ້ອມທັງເປັ ກາ ປະເມີ ເບິ່ງ ຄວາມເຂົ້າໃຈ ແລະ ກາ ຮັບເອົາລະບົບ ຂອງເຂົາເຈົ້າ.

ການຝຶກອົບຮົມລວມເອົາທັງພະນັກງານ ທີ່ເຮັດວຽກຕົວຈິງຢູ່ພາກສະໜາມ ແລະ ພະນັກງານ ທລຍ ທັງໝົດ ທັງນີ້ເພື່ອໃຫ້ເຂົາເຈົ້າມີຄວາມຄຸ້ນເຄີຍຕໍ່ກັບລະບົບດັ່ງກ່າວນີ້.

**ຕາຕະລາງ 1: ສະຫລຸບການສ້າງຄວາມເຂັ້ມແຂງ ໃນກິນໄກການສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ ທີ່ທົດລອງຢູ່ໃນ ປີ 2011**

| ການຈັດຕັ້ງປະຕິບັດໃຮນໄລຍະສັ້ນ | ການຈັດຕັ້ງປະຕິບັດໃຮນໄລຍະສັ້ນ | ການຈັດຕັ້ງປະຕິບັດໃຮນ ໄລຍະສັ້ນ |
|---|---|---|
| ○ ກະຕຸ້ນຄວາມຕ້ອງການສຳລັບກົນໄກການສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ ໂດຍການເຜີຍແຜ່ເຄື່ອງມື IEC ທີ່ມີປະສິດທິພາບ<br>▪ ປະຊາສຳພັນໃຫ້ເຫັນເຖິງການມີຢູ່ ແລະ ຄວາມສຳຄັນຂອງກົນໄກການສະແດງຄິດຄຳເຫັນ ແລະ ແກ້ໄຂບັນຫາ;<br>▪ ອະທິບາຍຂະບວນການການສະແດງຄິດຄຳເຫັນ ແລະ ແກ້ໄຂບັນຫາ (ລວມເຖິງໄລຍະເວລາໃນການດຳເນີນການ ແລະ ປະເພດຂອງຄຳຄິດເຫັນ);<br>▪ ແຈ້ງໃຫ້ຮູ້ວ່າ ຈະບໍ່ມີຄ່າໃຊ້ຈ່າຍເງິນໃດໆ ເຂົ້າໃນການສະແດງຄຳຄິດຄຳເຫັນ;<br>▪ ແຈ້ງໃຫ້ຮູ້ເຖິງການຕ້ອນຮັບທຸກຄຳຄິດຄຳເຫັນແມ່ນເພື່ອຊ່ວຍຮັກສາ/ປັບປຸງນະໂຍບາຍຂອງໂຄງການ ແລະ ການບໍລິການ;<br>▪ ແຈ້ງໃຫ້ຮູ້ເຖິງຫລັກການຂອງກົນໄກນີ້ ແມ່ນການບໍ່ເປີດເຜີຍຊື່ ແລະ ມີຄວາມເປັນທຳ;<br>▪ ລົບລ້າງຄວາມຕ້ອງການໃນການເອົາຂໍ້ມູນສ່ວນຕົວໃສ່ໃນແບບຟອມສະແດງຄຳຄິດຄຳເຫັນ ແລະ ສະແດງເຂົ້າໃນເວບໄຊ້ ທລຍ;<br>▪ ເປີດເຜີຍຜົນການສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ. | ○ ແນະນຳຄວາມເຂົ້າໃຈກ່ຽວກັບ ຊ່ອງທາງໃນການສະແດງຄຳຄິດຄຳເຫັນ ເຊັ່ນ: ສາຍດ່ວນ 161, ລະບົບການສົ່ງຂໍ້ຄວາມຜ່ານເວໄຊ້ ທລຍ, ຕູ້ໄປສະນີ ແລະ ກອງປະຊຸມຕ່າງໆຂອງ ທລຍ;<br>○ ຈັດຝຶກອົບຮົມ ໃຫ້ຄະນະກຳມະການຮັບຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາທີ່ມີຢູ່ແລ້ວ ແລະ ອົງການຈັດຕັ້ງມະຫາຊົນ ຖ້າເປັນໄປໄດ້;<br>○ ສ້າງແຜນເພື່ອເຮັດໃຫ້ມີຄວາມເຂັ້ມແຂງກ່ຽວກັບກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາໃນຂັ້ນບ້ານຄື:<br>▪ ສົ່ງເສີມປະຊາຊົນສະແດງຄຳຄິດຄຳເຫັນຫາຜູ້ສູງອາຍຸ, ຄູບາ ແລະ ບຸກຄົນອື່ນໆທີ່ເປັນກາງ;<br>▪ ເຊື່ອມໂຍງລະຫວ່າງບຸກຄົນກາງທີ່ມີຄວາມເປັນຄຸ້ນເຄີຍກັບຄິດຄຳເຫັນ ແລະ ແກ້ໄຂບັນຫາ;<br>▪ ຊຸກຍູ້ການສະແດງຄິດຄຳເຫັນ ແລະ ແກ້ໄຂບັນຫາຈາກການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ;<br>▪ ເພີ່ມປະສິດທິພາບໃນການຝຶກອົບຮົມ ກ່ຽວກັບກົນໄກການສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ (ການຊື່ສານ ແລະ ແກ້ໄຂບັນຫາ ໃນສອງເສັ້ນທາງ) ສຳລັບພະນັກງານ ທລຍ ແລະ ອາສາສະໝັກ ເພື່ອໃຫ້ຊັດເຈນກ່ຽວກັບວິທີການປະຕິບັດ;<br>▪ ກວດສອບໃຫ້ແນ່ໃຈເຖິງການມອບພາລະບົດບາດ ແລະ ຄວາມຮັບຜິດຊອບ ຂອງພະນັກງານ ທລຍ ໃນກົນໄກການສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ;<br>▪ ກວດສອບຄວາມເໝາະສົມ ແລະ ຄວາມລະອຽດຂອງເອກະສານ ສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ ໃຫ້ແນ່ໃຈ;<br>▪ ແນະນຳໃຫ້ມີການວິເຄາະການສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາເປັນປົກກະຕິ. | ສ້າງຄວາມຫວັງທີ່ແຂງແກ່ນທາງດ້ານການຈັດການໂຄງການ ທລຍ ແລະ ພະນັກງານ ເຂົ້າໃນກົນໄກການສະແດງຄິດຄຳເຫັນ ແລະ ແກ້ໄຂບັນຫາ ແລະ ຫລັກການຂອງມັນແມ່ນຮັບຮອງ/ເສີມສ້າງຄວາມເຂັ້ມແຂງ ໂດຍລວມດ້ານຄວາມໂປ່ງໃສຂອງໂຄງການ ແລະ ການມີສ່ວນຮ່ວມຂອງປະຊາຊົນ. |

FR - Form

# ແບບຟອມສະແດງຄຳຄິດຄຳເຫັ

ບ້າ :..............................ກຸ່ມບ້າ :....................................ເມືອງ:..............................ແຂວງ:..............................

ຄຳຄິດຄຳເຫັນນີ້ ສົ່ງເຖິງຄະ ະກຳມະກາ ສະແດງຄຳຄິດຄຳເຫັ ແລະ ແກ້ໄຂບັ ຫາຂັ້ນ:

☐ ຂັ້ນແຂວງ ☐ ຂັ້ນເມືອງ ☐ ຂັ້ນກຸ່ມບ້ານ ☐ ຂັ້ນບ້ານ, ວັ ທີ : ......... / ......... / ............

ກະລຸ າຂຽ ລາຍລະອຽດ ກ່ຽວກັບຄຳຄິດຄຳເຫັນ ເພື່ອສະດວກໃນການດຳເນີນການແກ້ໄຂຕໍ່ໄປ, ເພື່ອໃຫ້ແນ່ໃຈວ່າເອກະສານນີ້ເປັນຄວາມລັບ ພວກເຮົາຈະບໍ່ຖາມລາຍລະອຽດກ່ຽວກັບໂຕເອງທ່ານ, ນອກຈາກວ່າ ທ່ານມີຄວາມສະໝັກໃຈເອງ. ລາຍລະອຽດຂອງຄຳຄິດຄຳເຫັນ ມີດັ່ງຕໍ່ໄປນີ້:

ວັ ທີ ທີ່ເກີດເຫດກາ ..................................................................................................................................

ສະຖານທີ່ໆເກີດເຫດການ:...........................................................................................................................

ຜູ້ທີ່ກ່ຽວຂ້ອງກັບກໍລະນີດັ່ງກ່າວ: ..............................................................................................................

.......................................................................................................................................................

ລັກສະ ະຂອງຄຳຄິດຄຳເຫັ (ກະລຸ າລະບູລາຍລະອຽດຂໍ້ມູນ ທີ່ທ່າ ຕ້ອງກາ ສະແດງອອກມາ):..........................................

.......................................................................................................................................................

.......................................................................................................................................................

ສິ່ງທີ່ທ່າ ຂໍຮ້ອງແນ່ ຫຍັງ:.........................................................................................................................

.......................................................................................................................................................

ພວກເຮົາສະເໜີມາຍັງທ່າ ພິຈາລະ າ ຫຼື ກວດສອບ ເພື່ອຊ່ວຍພວກເຮົາແກ້ໄຂບັນຫາດັ່ງກ່າວນີ້ດ້ວຍ.

FRA - Form

# ແບບຟອມສະແດງຄຳຄິດຄຳເຫັນ

ບ້າ :.................................ກຸ່ມບ້າ :........................................ເມືອງ:.............ແຂວງ:..............

ຂໍ້ຕົກລົງສະບັບນີ້ ໄດ້ສ້າງຂຶ້ນ ໂດຍຮ່ວມກັບຄະ ະກຳມະກາ ສະແດງຄຳຄິດຄຳເຫັ

ແລະແກ້ໄຂບັ ຫາຂັ້ນ:

☐ຂັ້ນແຂວງ ☐ຂັ້ນເມືອງ☐ຂັ້ນກຸ່ມບ້ານ ☐ຂັ້ນບ້ານ ☐ອື່ນໆ, ................ວັ ທີ : ..... / … / …

ຄະ ະກຳມະກາ ສະແດງຄຳຄິດຄຳເຫັ ແລະ ແກ້ໄຂບັ ຫາ ຈັດຕັ້ງການສືບສວ ຄຳຄິດຄຳເຫັ

ເລກທີ:......... ຊຶ່ງເກີດຂຶ້ນຢູ່ທີ່: ບ້າ :....................ກຸ່ມບ້າ :...........ເມືອງ:...ແຂວງ:.............

ກອງປະຊຸມຄັ້ງນີ້ ໄດ້ມີການຕົກລົງ ດັ່ງຕໍ່ໄປນີ້:...........................................................

..................................................................................................................................................

..................................................................................................................................................

..................................................................................................................................................

..................................................................................................................................................

..................................................................................................................................................

..................................................................................................................................................

ຂໍ້ຕົກລົງດັ່ງກ່າວຂ້າງເທິງນີ້ ແມ່ ໄດ້ຖືກຮັບຮອງເອົາ ໂດຍຜູ້ເຂົ້າຮ່ວມທັງໝົດ ເພື່ອສະແດງໃຫ້ເຫັນວ່າ ບັ ຫາດັ່ງ ກ່າວໄດ້ຖືກແກ້ໄຂແລ້ວ ແລະ ບໍ່ມີບັ ຫາໃດ ຍັງຄ້າງຄາອີກ.

ຜູ້ເຂົ້າຮ່ວມ ແລະ ພະຍາ

ບຸກຄົນທີ່ກ່ຽວຂ້ອງກັບການສະແດງຄຳຄິດຄຳເຫັ *(ຊື່ຂອງບຸກຄົນ ຜູ້ທີ່ກ່ຽວຂ້ອງ. ແຕ່ບໍ່ແມ່ນຊື່ຂອງຜູ້ ສະແດງຄຳຄິດເຫັ /ຮ້ອງທຸກ, ເພາະຮັກສາເປັ ຄວາມລັບ. ອກຈາກວ່າ ຜູ້ກ່ຽວມີຄວາມສະໝັກໃຈ ເປີດເຜີຍເອງ.*

| ຊື່ | ຕຳແໜ່ງ | ລາຍເຊັ |
|---|---|---|
| 1 | | |
| 2 | | |
| 3 | | |
| 4 | | |

ຄະ ະກຳມະກາ ສະແດງຄຳຄິດຄຳເຫັ ແລະ ແກ້ໄຂບັ ຫາ

| ຊື່ | ຕຳແໜ່ງ | ລາຍເຊັ |
|---|---|---|
| 1 | | |
| 2 | | |
| 3 | | |
| 4 | | |

**ທີ່:** .............................................**ວັ ທີ:**............../........../..............

**(ເຊັ ແລະ ຈ້ຳກາ ຈາກຄະ ະກຳມະກາ )**

FRR - Form

# ແບບຟອມລາຍງານການເຄື່ອນໄຫວ
# ກົນໄກການສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ

## 1. ຂັ້ນທີ່ສ້າງບົດລາຍງາ ສະບັບນີ້

ການລາຍງານນີ້ ແມ່ນຈາກຄະນະກຳມະການ ການສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາຂັ້ນ (ຂຽນຊື່ໃສ່):

| | |
|---|---|
| ບ້າ | |
| ກຸ່ມບ້າ | |
| ເມືອງ | |
| ແຂວງ | |

## 2. ໄລຍະເວລາຂອງກາ ລາຍງາ

ຈາກວັ ທີ.........../............./.................ເຖິງວັ ທີ.........../.........../...............

## 3. ສະຫຼຸບການເຄື່ອນໄຫວ

| | |
|---|---|
| ຈຳນວນຄຳຄິດຄຳເຫັນທີ່ໄດ້ຮັບທັງໝົດ | |
| ຈຳນວນຄຳຄິດຄຳເຫັນ ທີ່ໄດ້ຮັບກາ ແກ້ໄຂທັງໝົດ | |
| ຈຳນວນຄຳຄິດຄຳເຫັນທີ່ຍັງບໍ່ທັ ໄດ້ກາ ແກ້ໄຂທັງໝົດ | |

## 4. ລາຍລະອຽດຂອງຄຳຄິດຄຳເຫັນທີ່ໄດ້ຮັບ

(ເບິ່ງຕາຕະລາງ ທີ່ຄັດຕິດດ້ານຫລັງນີ້)

**ວັ ທີ:........./........./.........**

**(ເຊັ ແລະ ຈ້ຳກາຈາກ ຄະ ະກຳມະກາ )**

ຕາຕະລາງສັງລວມລາຍລະອຽດຄໍາຄິດຄໍາເຫັນທີ່ໄດ້ຮັບ

| ຈ/ ຄຳຄິດຄຳ ເຫັນທີ່ໄດ້ຮັບ | ສະຖານທີ່ | ວັ ທີໄດ້ຮັບ | ລັກສະ ະ ຂອງຄຳຄິດຄຳເຫັ | ວັນທີ່ ດຳເນີນ ກາ ກວດສອບ | ຜົ ໄດ້ຮັບຈາກ ກາ ກວດສອບ | ກາ ແກ້ໄຂ | | ຄວາມເຫັ ຂອງຄະ ະກຳມະກາ / ຂັ້ນຕໍ່ໄປ |
|---|---|---|---|---|---|---|---|---|
| | | | | | | ໄດ້ | ບໍ່ໄດ້ | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |
| | | | | | | | | |

ສັງລວມຂໍ້ມູ ໂດຍ:

# ເອກະສານຄັດຕິດ 2:

# ການປະເມີນຜົນການຈັດຕັ້ງປະຕິບັດການປ້ອງກັນຜົນກະທົບທາງສັງຄົມຂອງ ທລຍ 2 ແລະ ການປະເມີນຜົນທາງດ້ານສັງຄົມ (ລວມທັງຜົນໄດ້ຮັບ, ການປຶກສາຫາລືລ່ວງຫນ້າ ແລະ ຂໍ້ມູນ) ຂອງ ທລຍ 3.

**ມັງກອນ 2016**

**ການແນະນຳ:**

ທີ່ປຶກສາເອກະລາດ ໄດ້ດຳເນີນການປະເມີນຜົນການປະຕິບັດວຽກງານການປ້ອງກັນຜົນກະທົບທາງສັງຄົມ ໃນເດືອນ ມັງກອນ 2016 ໂດຍມີຈຸດປະສົງເພື່ອ:

1. ທົບທວນຄືນການປະຕິບັດການປ້ອງກັນຜົນກະທົບທາງສັງຄົມຂອງ ທລຍ 2 ແລະ ທລຍ 2 ໄລຍະເພີ່ມທຶນ, ລະບຸຊ່ອງຫວ່າງ ຄວາມຕ້ອງການໃນການແກ້ໄຂກອບການວາງແຜນດ້ານຊົນເຜົ່າຂອງໂຄງການ ໄດ້ຢ່າງເຕັມສ່ວນ ແລະ ກອບການພັດທະນາຊົນເຜົ່າ ແລະ ສະເຫນີມາດຕະການເພີ່ມເຕີມ;
2. ລະບຸຜົນກະທົບທາງສັງຄົມທີ່ເປັນໄປໄດ້ທີ່ອາດຈະເປັນຜົນມາຈາກການລົງທຶນໃນ ທລຍ 3 ແລະ ມາດຕະການຫຼຸດຜ່ອນໃນສະຖານທີ່ ທີ່ຕ້ອງມີການກວດກາແລະການຄຸ້ມຄອງຜົນກະທົບ;
3. ການປະເມີນຄວາມຮັບຮູ້ໃນການປ້ອງກັນ ແລະ ຄວາມສາມາດໃນການປະຕິບັດ ຂອງອົງການຈັດຕັ້ງຂັ້ນເມືອງ ເພື່ອກຳນົດຄວາມຕ້ອງການ ແລະ ໃຫ້ຄຳແນະນຳກ່ຽວກັບໂຄງການສ້າງຄວາມເຂັ້ມແຂງທີ່ຈະໄດ້ຮັບການສະຫນັບສະຫນູນພາຍໃຕ້ ທລຍ 3.

ໃນສ່ວນໜຶ່ງຂອງການປະເມີນ, ການປຶກສາຫາລື ໂດຍການແຈ້ງກ່ອນລ່ວງຫນ້າ ກັບຊາວບ້ານຜູ້ໄດ້ຮັບຜົນປະໂຫຍດຢູ່ໃນ 3 ບ້ານທີ່ໄດ້ຮັບຜົນປະໂຫຍດຈາກ ທລຍລວມມີ:

- ບ້ານ ໂອຍ, ກຸ່ມບ້ານປະເລາະ, ເມືອງນອງ, ແຂວງສະຫວັນນະເຂດ.
- ບ້ານ ຍະລາງ, ກຸ່ມບ້ານລາວບາວ, ເມືອງນອງ, ແຂວງສະຫວັນນະເຂດ.
- ບ້ານ ດົງໃຫຍ່, ກຸ່ມ 14, ເມືອງເຊໂປນ, ແຂວງສະຫວັນນະເຂດ.

ໂຄງສ້າງການດຳເນີນການການສຳພາດ ແມ່ນ ສຳພາກນຳທັງລັດຖະບານທີ່ກ່ຽວຂ້ອງ ແລະ ພະນັກງານ ທລຍ.

ລາຍຊື່ຜູ້ທີ່ໄດ້ເຂົ້າຮ່ວມປຶກສາຫາລື ແລະ ເຄື່ອງມື ໃນການລົງປະເມີນໄດ້ຄັດຕິດຢູ່ລຸ່ມນີ້:

**ສິ່ງທີ່ພົບ:**

## 1: ຄວາມຕ້ອງການປຸກຈິດສຳນຶກກ່ຽວກັບ ການການປ້ອງກັນຜົນກະທົບທາງສັງຄົມພາຍໃຕ້ວຽກງານ ທລຍ 2

ພະນັກງານ ທລຍ ໂດຍລວມເບິ່ງຄືວ່າ ຈະມີຄວາມເຂົ້າໃຈໃນຂັ້ນພື້ນຖານ ກ່ຽວກັບການປ້ອງກັນຜົນກະທົບທາງສັງຄົມ. ພະນັກງານ ທລຍ ຂັ້ນແຂວງ ແລະ ຂັ້ນເມືອງ ໂດຍທົ່ວໄປໄດ້ອະທິບາຍການປ້ອງກັນຜົນກະທົບທາງສັງຄົມວ່າ:

"ແມ່ນສິ່ງທີ່ພວກເຮົາເຮັດ ເພື່ອປ້ອງກັນບໍ່ໃຫ້ມີຜົນກະທົບທາງລົບຂອງໂຄງການ ແລະ ຫຼຸດລົງຄວາມສ່ຽງຂອງບັນຫາທີ່ອາດຈະເກີດຂຶ້ນໃນລະຫວ່າງການຈັດຕັ້ງປະຕິບັດ".

ນອກຈາກນັ້ນ, ມັນຍັງເປັນທີ່ເຂົ້າໃຈວ່າ ການປ້ອງກັນທີ່ຈະສ້າງຄວາມເປັນເຈົ້າຂອງໃນຂັ້ນທ້ອງຖິ່ນ ແລະ ນຳໄປສູ່ການເຂົ້າແຊກແຊງ ເພື່ອຄວາມຍືນຍົງ, ໃນຄະນະດຽວກັນ ຖ້າບໍ່ເອົາໃຈໃສ່ຕໍ່ກັບການປ້ອງກັນ ມັນອາດນຳໄປສູ່ການເພີ່ມຄວາມທຸກຍາກໃຫ້ປະຊາຊົນກຸ່ມເປົ້າຫມາຍ ແທນທີ່ເຮົາຈະຫຼຸດຜ່ອນ ຄວາມທຸກຍາກໃຫ້ເຂົາເຈົ້າຫຼາຍກ່ວາ.

ຕົວຢ່າງຂອງການຈັດຕັ້ງປະຕິບັດ ເພື່ອຮັບປະກັນການປ້ອງກັນຜົນກະທົບ ຊຶ່ງໄດ້ກ່າວມາໂດຍພະນັກງານ ທລຍ ຂັ້ນແຂວງ ແລະ ເມືອງ ແລະ ຜູ້ປະສານງານຂັ້ນກຸ່ມບ້ານ ຊຶ່ງລະບຸໄວ້ໃນຕາຕະລາງ 1 ຂ້າງລຸ່ມນີ້, ຊຶ່ງມັນຍັງສະແດງໃຫ້ເຫັນໄລຍະຂອງການຈັດຕັ້ງປະຕິບັດໂຄງການທີ່ກ່ຽວຂ້ອງອີກດ້ວຍ.

**ຕາຕະລາງ 1: ການຈັດຕັ້ງປະຕິບັດການປ້ອງກັນຜົນກະທົບທາງສັງຄົມທີ່ກ່າວຂຶ້ນໂດຍພະນັກງານ ທລຍ**

| ປະຕິບັດການປ້ອງກັນຜົນກະທົບທາງສັງຄົມ | ຂັ້ນຕອນຂອງໂຄງການ | | | |
|---|---|---|---|---|
| | ການວາງແຜນ | ຈັດຕັ້ງປະຕິບັດ | ຕິດຕາມ | ຄຸ້ມຄອງນຳໃຊ້ |
| ສະໜັບສະໜູນການເຂົ້າແຊກແຊງ ພຽງແຕ່ດ້ານທີ່ດີໆ | x | | | |
| ສຳຫລວດອອກແບບກ່ອນການຈັດຕັ້ງປະຕິບັດ | x | x | | |
| ແຈ້ງໃຫ້ປະຊາຊົນຮູ້ກ່ຽວກັບ 10 ລະບຽບຂອງຊຸມຊົນ ໃນຂັ້ນຕອນການແນະນຳໂຄງການ | x | | | |
| ທົບທວນກ່ຽວກັບ 10 ລະບຽບຂອງຊຸມຊົນ ທຸກໆກອງປະຊຸມຕິດຕາມຊຸກຍູ້ | x | x | x | x |
| ຮັບປະກັນວ່າຊຸມຊົນເຫັນດີໃນທຸກຂັ້ນຕອນການຈັດຕັ້ງປະຕິບັດ | x | x | x | x |
| ຮັບປະກັນວ່າບໍ່ມີການຍົກຍ້າຍເຮືອນຊານ ແລະ ສິ່ງກໍ່ສ້າງທີ່ເປັນຂອງຊຸມຊົນ | x | | x | |
| ຮັບປະກັນວ່າ | x | | x | |
| ຈັດກອງປະຊຸມກັບຊຸມຊົນເພື່ອສົນທະນາກ່ຽວກັບການທົດແທນຄືນ ຖ້າຫາກມີການປະກອບສ່ວນທີ່ດິນສ່ວນບຸກຄົນ ທີ່ຫລາຍກວ່າ 5% ຂອງທີ່ດິນທີ່ມີ ທີ່ຈະຕ້ອງໃຊ້ໃນໂຄງການ | x | | | |
| ຍົກເລີກໂຄງການຍ່ອຍ ຖ້າຫາກພົບວ່າມີຜູ້ໄດ້ຮັບຜົນກະທົບຫລາຍກ່ວາ 200ຄົນ | x | | | |
| ເອົາໃຈໃສ່ຕໍ່ຄວາມຕ້ອງການຂອງຊຸມຊົນ | X | x | x | x |
| ໃຫ້ໂອກາດຊຸມຊົນໄດ້ຄັດເລືອກທີມງານຈັດຕັ້ງປະຕິບັດດ້ວຍໂຕເຂົາເຈົ້າເອງ | x | | | |
| ຮັບປະກັນການມີສ່ວນຮ່ວມ ແລະ ຄວາມເຂົ້າໃຈຂອງຊຸມຊົນ | x | x | x | x |
| ປຶກສາຫາລື ແລະ ເຫັນດີຕໍ່ກັບບັນຫາ ການປະກອບສ່ວນຂອງຊຸມຊົນ ແລະ ການປະກອບສ່ວນທາງດ້ານທີ່ດິນ | x | | | |
| ສະໜັບສະໜູນບ້ານທີ່ທຸກທີ່ສຸດກ່ອນ | X | | | |
| ຮັບຟັງຄຳຄິດຄຳເຫັນຂອງຊຸມຊົນ ສຸມໃສ່ຄວາມຕ້ອງການຂອງເຂົາເຈົ້າຫລາຍກວ່າຄວາມຕ້ອງການຂອງໂຄງການ | x | | | |

ມາຈາກຄວາມຕ້ອງການຂອງປະຊາຊົນ, ໂດຍປະຊາຊົນ, ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ

**FROM THE PEOPLE, BY THE PEOPLE, FOR THE PEOPLE**


ຫ້ອງວ່າການລັດຖະບານ

ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ
**ຫ້ອງການ ທລຍ ສູນກາງ**
ຖະໜົນນາໄຮ່ດ່ຽວ, ບ້ານສີສະຫວາດໃຕ້, ເມືອງຈັນທະບູລີ,

P.O BOX 4625, ນະຄອນຫລວງວຽງຈັນ

**GOVERNMENT'S OFFICE**
**National Committee for Rural Development**
**& Poverty Eradication**
**POVERTY REDUCTION FUND**

Nahaidiao Road,
Sisavathtai Village,
Chanthaboury District,
P.O Box 4625,

+856 021 261 479 / 261 480
+856 021 261 481
info@prflaos.org
www.prflaos.org


# ກອງທຶນຫລຸດຜ່ອນຄວາມທຸກຍາກ

## POVERTY REDUCTION FUND (PRF)

www.prflaos.org | info@prflaos.org

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development
and Cooperation SDC